# ແບບຮຽນ
# ສຶກສາພົນລະເມືອງ
## ຊັ້ນມັດທະຍົມສຶກສາຕອນຕົ້ນ ສຳລັບປະຊາຊົນ







ກະຊວງສຶກສາທິການ ແລະ ກິລາ
ກົມການສຶກສານອກໂຮງຮຽນ
2012

Sponsored by :
dvv international
Institut für Internationale Zusammenarbeit des Deutschen Volkshochschul-Verbandes
BMZ
Federal Ministry for Economic Cooperation and Development

# ຄຳນຳ

ປຶ້ມແບບຮຽນວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນຕົ້ນສຳລັບປະຊາຊົນນີ້ ໄດ້ຮັບການຄົ້ນຄ້ວາ ຮຽບຮຽງ ຂຶ້ນເປັນຄັ້ງທຳອິດ, ຕາມທິດທາງການພັດທະນາການສຶກສາແຫ່ງຊາດ ກໍຄືມະຕິກ່ຽວ ກັບການພັດທະນາຊັບພະຍາກອນມະນຸດທີ່ ພັກ ແລະ ລັດຖະບານວາງອອກ, ເພື່ອໃຫ້ ປະຊາຊົນ ທຸກ ຄົນມີ ໂອກາດ ເຂົ້າເຖິງການສຶກສາໂດຍສະເພາະປະຊາຊົນຜູ້ທີ່ຮຽນ ຈົບຊັ້ນປະຖົມສຶກສາໄດ້ມີໂອກາດຍົກລະດັບການ ສຶກສາຂອງຕົນ ໃຫ້ຈົບຊັ້ນມັດທະຍົມຕອນຕົ້ນ. ກົມການສຶກສານອກໂຮງຮຽນ ຮ່ວມກັບສູນພັດທະນາການ ສຶກສານອກໂຮງຮຽນ ແລະ ສົມທົບກັບພາກສ່ວນກ່ຽວຂ້ອງໄດ້ດຳເນີນຮຽບ ຮຽງປຶ້ມແບບຮຽນວິຊາສຶກສາພົນລະເມືອງຊັ້ນ ມັດທະຍົມຕອນ ຕົ້ນສຳລັບປະຊາຊົນຂຶ້ນ ເພື່ອໃຫ້ສອດຄ່ອງ ກັບ ສະພາບຂະຫຍາຕົວຂອງສັງຄົມ ແລະ ຄວາມຕ້ອງການຂອງປະຊາຊົນທີ່ບໍ່ມີໂອກາດເຂົ້າຮຽນຢູ່ໃນໂຮງຮຽນ ໃນຂອບເຂດທົ່ວປະເທດ.

ເນື້ອໃນທີ່ສະແດງອອກໃນປຶ້ມຫົວນີ້ເປັນພຽງຂໍ້ມູນພື້ນຖານເພື່ອໃຫ້ຜູ້ຮຽນ ແລະ ຄູ ນຳໃຊ້ເຂົ້າໃນການຮຽນ-ການສອນເທົ່ານັ້ນ. ຄູ ແລະ ຜູ້ຮຽນສາມາດຊອກຫາຂໍ້ມູນເພີ່ມເຕີມຈາກຫລາຍແຫຼ່ງເອກະສານ ເພື່ອ ໃຫ້ ແທດເໝາະກັບສະພາບການປ່ຽນແປງຂອງໂລກໃນປັດຈຸບັນ.

ປຶ້ມແບບຮຽນເຫຼັ້ມນີ້ໄດ້ຮັບການຄົ້ນຄ້ວາ ແລະ ຮຽບຮຽງຂຶ້ນບົນພື້ນຖານຫຼັກສູດການສຶກສານອກໂຮງຮຽນ ແລະ ປຶ້ມແບບຮຽນຊັ້ນມັດທະຍົມຕອນຕົ້ນຂອງສາຍສາມັນສຶກສາ. ເນື້ອໃນປຶ້ມເຫຼັ້ມ ນີ້ປະກອບດ້ວຍVI ພາກ ຄື: ຊາດລາວ, ວັດທະນະທຳລາວ, ລະບອບການປົກຄອງຂອງ ສປປ ລາວ , ກົດໝາຍຂອງ ສປປ ລາວ, ສິດແລະ ໜ້າທີ່ ຂອງພົນລະເມືອງລາວ, ປະຊາກອນສຶກສາ, ເພດສຶກສາແລະສຸຂະພາບໄວຈະເລີນພັນ

ໃນການຮຽນຮຽງຄັ້ງນີ້ອາດມີຫຼາຍສິ່ງຫຼາຍຢ່າງຂາດຕົກບົກຜ່ອງສະນັ້ນ,ກົມການສຶກສານອກໂຮງຮຽນ ຂໍຄວາມຮ່ວມມື ມາຍັງຄູ - ອາຈານ, ຜູ້ບໍລິຫານການສຶກສາ ຂັ້ນ ຕ່າງໆ ແລະ ທ່ານຜູ້ອ່ານ ຊ່ວຍຕີລາຄາ,ປະກອບຄຳຄິດຄຳເຫັນ ສິ່ງໃຫ້ກົມການສຶກສານອກໂຮງຮຽນ ນຳມາເປັນຂໍ້ມູນໃນການປັບປຸງ,ດັດແກ້ຄືນໃໝ່ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບໝາກຜົນແລະເປັນທີ່ຍອມຮັບໃນທົ່ວສັງຄົມ.

ກົມການສຶກສານອກໂຮງຮຽນ

## ສາລະບານ


**ເປີດຫົວເລື່ອງ ........................................................................................................... 1**

**ພາກທີ I ຊາດລາວ** ...................................................................................................... 3

ບົດທີ 1 ຄວາມເປັນມາ ຂອງຊາດລາວ ........................................................................................ 3

ບົດທີ 2 ບັນດາ ເຜົ່າໃນລາວ **..................................................................................................... 5**

ບົດທີ 3 ມູນເຊື້ອອັນດີງາມ ຂອງຊາດລາວ ..................................................................................... 7

**ພາກທີ II ວັດທະນະທຳລາວ** ................................................................................................. 9

ບົດທີ 4 ວັດທະນະທຳ ດ້ານ ພາສາ ແລະ ວັນນະຄະດີ............................................................................ 9

ບົດທີ 5 ວັດທະນະທຳ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດລາວ **.............................................. 11**

ບົດທີ 6 ມາລະຍາດທາງ ສັງຄົມ ................................................................................................. 14

**ພາກທີ III ລະບອບການປົກຄອງຂອງ ສ ປ ປ ລາວ** ......................................................................... 16

ບົດທີ 7 ລະບອບການເມືອງ ການປົກຄອງ ຂອງ ສ ປ ປ ລາວ ................................................................ 16

ບົດທີ 8.ລະບົບການປົກຄອງຂັ້ນບ້ານ,ເມືອງ ແລະແຂວງຂອງ ສປປ ລາວ ................................................ 19

ບົດທີ 9. ສະພາແຫ່ງຊາດ ( ອົງການ ນິຕິບັນຍັດ ) **............................................................................ 22**

ບົດທີ 10. ອົງການບໍລິຫານ ....................................................................................................... 25

ບົດທີ 11. ອົງການສານປະຊາຊົນສູງສຸດ ....................................................................................... 28

ບົດທີ 12. ອົງການໄອຍະການ ປະຊາຊົນສູງສຸດ ............................................................................... 29

ບົດທີ 13. ລັດຖະທຳມະນູນ ແຫ່ງ ສ ປ ປ ລາວ **.............................................................................. 31**

ບົດທີ 14. ອົງການຈັດຕັ້ງ ແນວລາວ ສ້າງຊາດ ................................................................................. 32

ບົດທີ 15. ອົງການຈັດຕັ້ງກຳມະບານລາວ ...................................................................................... 34

ບົດທີ 16. ອົງການຈັດຕັ້ງຊາວໜຸ່ມ ປະຊາຊົນ ປະຕິວັດລາວ .................................................................. 36

ບົດທີ 17. ອົງການຈັດຕັ້ງສະຫະພັນ ແມ່ຍິງລາວ ............................................................................... 38

ບົດທີ 18. ການພົວພັນ ສາກົນ ..... **39**

**ພາກທີ IV ກົດໝາຍຂອງ ສ.ປ.ປ ລາວ** ..... 42

ບົດທີ 19. ກົດໝາຍຄອບຄົວ ( ການສືບທອດມູນມໍລະດົກ) ..... 42

ບົດທີ 20. ການສະກັດກັ້ນການຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ..... 44

ບົດທີ 21. ກົດໝາຍແຮງງານ ..... **47**

ບົດທີ 22. ກົດໝາຍແພ່ງ ..... 53

ບົດທີ 23. ກົດໝາຍອາຍາ ..... 55

ບົດທີ 24. ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ ..... 57

**ພາກທີ V ສິດຂອງພົນລະເມືອງລາວ** ..... 59

ບົດທີ 25. ສິດພື້ນຖານຂອງພົນລະເມືອງລາວ ..... 59

ບົດທີ 26. ສິດ ແລະ ພັນທະຂອງຄອບຄົວ ..... 61

ບົດທີ 27. ສິດ ແລະ ພັນທະຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ..... 63

ບົດທີ 28. ໜ້າທີ່ຂອງພົນລະເມືອງລາວທີ່ມີຕໍ່ປະເທດຊາດ ..... 65

ບົດທີ 29. ໜ້າທີ່ຂອງພົນລະເມືອງໃນການປະຕິບັດກົດຈາລະຈອນ ..... 67

ບົດທີ 30. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ( ບົດບາດຍິງ-ຊາຍ) ..... 73

**ພາກທີ VI ປະຊາກອນສຶກສາ ,ເພດສຶກສາ ແລະ ສຸຂະພາບໄວຈະເລີນພັນ** ..... 75

ບົດທີ 31. ໂຄງສ້າງປະຊາກອນ ..... 75

ບົດທີ 32. ການພົວພັນລະຫ່ວາງປະຊາກອນກັບທຳມະຊາດ ..... 79

ບົດທີ 33. ການວາງແຜນຄອບຄົວ ..... 33

ບົດທີ 34. ການຖືພາ ແລະ ການຮັກສາສຸຂະພາບໃນເວລາຖືພາ ..... 82

ບົດທີ 35. ໄວກາງຄົນ ແລະ ການຮັກສາສຸຂະພາບ ..... 84

ບົດທີ 36. ການເກີດ,ການຕາຍ ແລະ ການຍ້າຍຖິ່ນຂອງປະຊາກອນລາວ ..... 86

ບົດທີ 37. ການພົວພັນລະຫ່ວາງປະຊາກອນ ແລະ ສິ່ງແວດລ້ອມ ....................................................88
ບົດທີ 38. ການລ້ຽງລູກດ້ວຍນົມແມ່ ........................................................................................89
ບົດທີ 39.ໂພສະນາການສຳລັບເດັກນ້ອຍອາຍຸ 1 ມື້ ຫາ 6 ປີ ..........................................................91
ບົດທີ 40. ການພັດທະນາເດັກນ້ອຍໃນໄວຮຽນ (ສິດທິເດັກ) ..........................................................93

# <u>ພາກເປີດຫົວເລື່ອງ</u>

## I. ວິຊາສຶກສາພົນລະເມືອງແມ່ນຫຍັງ?

ວິຊາສຶກສາພົນລະເມືອງແມ່ນວິຊາທີ່ສຶກສາກ່ຽວກັບແບບແຜນດຳລົງຊີວິດຂອງຄົນກວມເອົາແນວທາງການເມືອງ,ລະບົບກົດໝາຍ, ລະບົບການປົກຄອງ, ຄວາມຮູ້ດ້ານປັດສະຍາ, ເສດຖະສາດ, ວັດທະນະທຳ ແລະ ການພົວພັນລະຫວ່າງຊາດ.

## II. ຈຸດປະສົງ, ໜ້າທີ່ ແລະ ຄວາມສຳຄັນຂອງວິຊາສຶກສາພົນລະເມືອງ

### 1. ຈຸດປະສົງ

ແມ່ນແນໃສ່ສຶກສາອົບຮົມໃຫ້ນັກຮຽນຮັບຮູ້ຜົນປະໂຫຍດລວມຂອງຊາດ, ເຄົາລົບກົດໝາຍ, ຮີດຄອງປະເພນີອັນດີງາມຂອງຊາດ,ມີນ້ຳໃຈຮັກຊາດ,ມີນ້ຳໃຈສາມັກຄີປອງດອງຊາດ,ກຽມພ້ອມຮັບການສືບທອດພາລະກິດຂອງຄົນຮຸ່ນກ່ອນ.

### 2. ໜ້າທີ່

ກ. ຕ້ອງມີຄວາມສຳພັນລະຫວ່າງທິດສະດີກັບພາກປະຕິບັດຕົວຈິງໃນຊີວິດປະຈຳວັນ.

ຂ. ຊຸກຍູ້ໃຫ້ນັກຮຽນມີນ້ຳໃຈຮັບຜິດຊອບ ແລະຈິດໃຈລວມໝູ່.

ຄ. ສົ່ງເສີມໃຫ້ນັກຮຽນຊອກຄົ້ນຫາຄວາມຮູ້ດ້ວຍຕົນເອງຈາກແຫຼ່ງຕ່າງໆຢ່າງຕັ້ງໜ້າເຊັ່ນ:ໜັງສືພິມ, ວິທະຍຸ, ໂທລະພາບ,ວາລະສານຕ່າງໆ...

ງ. ສ້າງໂອກາດໃຫ້ນັກຮຽນໄດ້ຝຶກຝົນ, ຝຶກທັກສະຂະບວນການແກ້ໄຂບັນຫາຕາມຂັ້ນຕອນ.

### 3. ຄວາມສຳຄັນ

ວິຊາສຶກສາພົນລະເມືອງມີຄວາມສຳຄັນຢ່າງຍິ່ງຕໍ່ການເສີມສ້າງບຸກກະລິກພາບ ຂອງຜູ້ຄົນທີ່ດຳລົງຊີວິດຢູ່ໃນສັງຄົມ. ພັກ ແລະ ລັດຖະບານເຮົາໄດ້ວາງຍຸດທະສາດກ່ຽວກັບການພັດທະນາຊັບພະຍາກອນມະນຸດ, ວິຊາສຶກສາພົນລະເມືອງມີບົດບາດໃນການສຶກສາອົບຮົມຄົນໃນດ້ານແນວຄິດຄຸນສົມບັດສິນທຳປະຕິວັດ, ມີທັດສະນະຫຼັກໝັ້ນ ແລະ ມີຄວາມຮູ້ສຶກຕື່ນຕົວທາງດ້ານການເມືອງອັນເປັນປັດໄຈສຳຄັນຂອງຄົນ

### 4. ຄວາມສຳພັນລະຫວ່າງວິຊາ

ວິຊາສຶກສາພົນລະເມືອງມີຄວາມສຳພັນຢ່າງສະໜິດແໜ້ນກັບວິຊາຮຽນອື່ນໆໂດຍສະເພາະຢູ່ໃນກຸ່ມວິຊາສັງຄົມເປັນຕົ້ນ: ປະຫວັດສາດ, ພູມສາດ, ພາສາລາວ-ວັນນະຄະດີ,ການເມືອງ,ຄຸນສົມບັດ...

## ຄຳຖາມຄົ້ນຄວ້າ

**I. ແບບອັດຕະໄນ**

1. ຈົ່ງບອກຄວາມໝາຍຂອງວິຊາສຶກສາພົນລະເມືອງ?
2. ວິຊາສຶກສາພົນລະເມືອງມີຈຸດປະສົງແນວໃດ?
3. ໜ້າທີ່ຂອງວິຊາສຶກສາພົນລະເມືອງມີຫຍັງແດ່?

**II. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກທີ່ສຸດ, ໂດຍໃຊ້ເຄື່ອງໝາຍ ✓ຂຽນລົງໃສ່ໃນຮູບສີ່ຫຼ່ຽມ ☐

1. ວິຊາສຶກສາພົນລະເມືອງມີຄວາມສຳຄັນຄື:
   - ☐ ສົ່ງເສີມສ້າງບຸກກະລິກພາບຂອງຜູ້ຄົນທີ່ດຳລົງຊີວິດຢູ່ໃນສັງຄົມ.
   - ☐ ສົ່ງເສີມຕື່ນຕົວປະກອບສ່ວນໃນການພັດທະນາເສດຖະກິດ.
   - ☐ ສົ່ງເສີມພັດທະນາບົດບາດຂອງຕົນເອງ.
2. ວິຊາສຶກສາພົນລະເມືອງພົວພັນກັບວິຊາ:
   - ☐ ປະຫວັດສາດ,ພາສາລາວ,ວັນນະຄະດີ,ຄຸນສົມບັດ.
   - ☐ ພູມສາດ ແລະ ການເມືອງ.
   - ☐ ຖືກໝົດທຸກຂໍ້.

# ພາກທີ I ຊາດລາວ

## ບົດທີ 1

## ຄວາມເປັນມາຂອງຊາດລາວ

1. **ຊາດລາວໃນສະໄໝບູຮານ**

ຕາມການຄົ້ນຄວ້າຂອງນັກປະຫວັດສາດກ່ອນນີ້3.000 ປີ, ບັນພະບຸລຸດຂອງຊາດເຮົາມີຊື່ວ່າ: ຊາດອ້າຍລາວທີ່ດຳລົງຊີວິດຢູ່ໃນດິນແດນພາກໃຕ້ຂອງຈີນປະຈຸບັນ,ຊຶ່ງເປັນຊາດທີ່ມີຄວາມຈະເລີນຮຸ່ງເຮືອງ ແລະ ມີອະລິຍະທຳສູງ, ຕໍ່ມາຂຸນບູລົມລາຊາທິລາດກະສັດລາວໜອງແສໄດ້ສົ່ງລູກທັງເຈັດໄປຄອງນະຄອນຕ່າງໆໃນແຫຼມສຸວັນນະພູມ(ອິນດູຈີນ).

2. **ຊາດລາວໃນສະໄໝທ້ອນໂຮມອານາຈັກລາວລ້ານຊ້າງ**

ກາງສະຕະວັດທີ XIV ຄື: ປີ 1353 ເຈົ້າຟ້າງຸ່ມກໍໄດ້ທ້ອນໂຮມເຂົ້າເປັນອານາຈັກລາວລ້ານຊ້າງ. ກາງສະຕະວັດທີ XVI ເພິ່ນໄດ້ຍ້າຍນະຄອນຫຼວງຈາກຫຼວງພຣະບາງມາຢູ່ວຽງຈັນ, ອານາຈັກລາວລ້ານຊ້າງມີຄວາມຈະເລີນຮຸ່ງເຮືອງຮັ່ງມີ ອັນໄດ້ສ້າງຄວາມປະທັບໃຈແກ່ຊາວເອີຣົບ, ກະສັດທີ່ລືຊື່ໃນສະໄໝນັ້ນແມ່ນ ພະຍາສາມແສນໄທ, ເຈົ້າໄຊເຊດຖາທິລາດ, ເຈົ້າສຸລິຍະວົງສາ...

ໃນຕົ້ນສະຕະວັດທີ XIX ເຈົ້າອານຸວົງໄດ້ນຳພາປະຊາຊົນລາວຕ້ານສັກດີນາສະຫຍາມ, ແຕ່ໃນທີ່ສຸດກໍ່ຕົກເປັນເມືອງຂຶ້ນຂອງສັກດີນາສະຫຍາມ.

3. **ຊາດລາວໃນສະໄໝຕົກເປັນທົ່ວເມືອງຂຶ້ນຂອງຝຣັ່ງ**

ກາງສະຕະວັດທີ XIX ພວກຝຣັ່ງໄດ້ມີອິດທິພົນໃນອິນດູຈີນ,ໃນທີ່ສຸດກໍ່ສາມາດຍຶດເອົາ ອານາຈັກລາວໃນດິນແດນຝັ່ງຊ້າຍແມ່ນ້ຳຂອງໃນປີ 1893 ແຕ່ປະຊາຊົນລາວຜູ້ຮັກຊາດໄດ້ຕໍ່ສູ້ຕ້ານຝຣັ່ງຫຼາຍ ຂະບວນການເຊັ່ນ: ພໍ່ກະດວດ, ອົງແກ້ວອົງກົມມະດຳ,ເຈົ້າຟ້າປາໄຈ ແລະພິເສດແມ່ນຂະບວນຂອງແນວລາວອິດສະຫຼະຊຶ່ງສາມາດຍາດໄດ້ໄຊຊະນະ ແລະ ສາມາດປະກາດເອກະລາດໃນວັນທີ 12 ຕຸລາ 1945, ສຸດທ້າຍຝຣັ່ງຍອມຈຳນົນ ແລະ ເຊັນສັນຍາເຊີແນວປີ 1954 ກ່ຽວກັບລາວໂດຍຮັບຮູ້ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ.

4. **ຊາດລາວໃນສະໄໝການປະຕິວັດຊາດປະຊາທິປະໄຕ**

ພາຍຫຼັງເຊັນສັນຍາເຊີແນວ ປີ 1954 ກ່ຽວກັບລາວບໍ່ພໍເທົ່າໃດຈັກກະພັດອາເມຣິກາກໍເຂົ້າຮຸກຮານລາວ, ແຕ່ພາຍໃຕ້ການນຳພາຂອງພັກປະຊາຊົນລາວ ແລະ ປະຊາຊົນລາວບັນດາເຜົ່າໄດ້ຕໍ່ສູ້ຢ່າງພິລະອາດຫານຈົນໄດ້ຮັບໄຊຊະນະ, ຈາກນັ້ນກໍ່ໄດ້ສະຖາປະນາເປັນປະເທດສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໃນວັນທີ 2 ທັນວາ 1975.

5. **ຊາດລາວໃນສະໄໝປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ**

ນັບແຕ່ມີການສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນປີ1975 ປະຊາຊົຍລາວ ທົ່ວປະເທດໄດ້ເຕົ້າໂຮມຄວາມສາມັກຄີ ແລະ ຢູ່ຮ່ວມກັນຢ່າງສັນຕິ.

ທ້າຍປີ 1980 ພັກ ແລະ ລັດຖະບານໄດ້ເປີດກວ້າງການຮ່ວມມືກັບທຸກປະເທດບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.ມາຮອດປີ 1991 ລັດຖະທຳມະນູນ ສ.ປ.ປ ລາວໄດ້ປະກາດໃຊ້ຢ່າງເປັນທາງການ.

**ຄຳຖາມ**

I. **ແບບອັດຕາໃນ**

1. ຈົ່ງກ່າວໂດຍຫຍໍ້ຄວາມເປັນມາຂອງຊາດລາວໃນສະໄໝບູຮານ?
2. ຈົ່ງເລົ່າຫຍໍ້ປະຫວັດສາດຂອງຊາດລາວໃນສະໄໝລາວລ້ານຊ້າງ?
3. ສະໄໝພວກລ່າເມືອງຂຶ້ນຝຣັ່ງປົກຄອງມີບັນພະບູລຸດຄົນໃດແນ່ທີ່ນຳພາຂະບວນການຕໍ່ສູ້?
4. ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແມ່ນວັນທີ,ເດືອນ,ປີໃດ?

II. **ແບບປາລະໃນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້,ໂດຍໃຊ້ເຄື່ອງໝາຍນີ້✓ໃສ່ຮູບສີ່ຫຼ່ຽມ ☐

1. ໃຜເປັນຜູ້ທ້ອນໂຮມອານາຈັກລາວລ້ານຊ້າງຜູ້ທຳອິດ?
   - ☐ ເຈົ້າໄຊເສດຖາທິລາດ
   - ☐ ເຈົ້າສຸລິຍະວົງສາ
   - ☐ ເຈົ້າຟ້າງຸ່ມ
2. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສ້າງຕັ້ງຂຶ້ນວັນທີ, ເດືອນ, ປີໃດ?
   - ☐ 12 ຕຸລາ 1945
   - ☐ 2 ທັນວາ 1975
   - ☐ 22 ມີນາ 1955
3. ຝຣັ່ງຍອມຈຳນົນ ແລະ ເຊັນສັນຍາເຊີແນວ ປີ 1954 ກ່ຽວກັບລາວໂດຍຮັບຮູ້:
   - ☐ ເອກະລາດ ແລະ ອະທິປະໄຕຂອງລາວ
   - ☐ ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັດຄົບຖ້ວນຂອງລາວ
   - ☐ ຖືກໝົດທຸກຂໍ້

# ບົດທີ 2
# ບັນດາເຜົ່າໃນລາວ

ຊາດລາວເຮົາປະກອບດ້ວຍຫຼາຍຊົນເຜົ່າ ເຊິ່ງມີພາສາປາກເວົ້າ, ການດຳລົງຊີວິດ ແລະ ຮີດຄອງປະເພນີຕ່າງໆກັນ ແຕ່ພວກເຂົາເຈົ້າລ້ວນແຕ່ມີສິດສະເໝີພາບ ເຕົ້າໂຮມກັນຢູ່ໃນວົງຄະນະຍາດແຫ່ງຊາດດ້ວຍຄວາມປອງດອງ.

ໃນລາວມີສາມກຸ່ມຊົນເຜົ່າໃຫຍ່ດັ່ງນີ້:

1. **ກຸ່ມຊົນເຜົ່າລາວລຸ່ມ**

   ເຜົ່າລາວລຸ່ມກວມປະມານ 68% ຂອງພົນລະເມືອງລາວ,ໃຊ້ພາສາໄຕ-ລາວປະກອບດ້ວຍເຜົ່າຕ່າງໆຄື: ລາວ, ພວນ, ລື້, ຍວນ, ແຊກ, ເນີ້ຍ, ຢັ້ງ ແລະ ອື່ນໆ ເຜົ່າເຫຼົ່ານີ້ ສ່ວນຫຼາຍຕັ້ງບ້ານເຮືອນ ຢູ່ຕາມທົ່ງພຽງ ແລະຕາມລ້ອງແມ່ນ້ຳຕ່າງໆ,ສ່ວນຫຼາຍຖືສາສະໜາພຸດ,ພາສາເວົ້າແລະຕົວໜັງສືຂອງກຸ່ມເຜົ່ານີ້ຖືກຮັບຮອງໂດຍລັດຖະທຳມະນູນໃຫ້ເປັນພາສາທາງລັດຖະການ. ອາຊີບແມ່ນເຮັດນາ, ມີຄວາມຊຳນານໃນການຜະລິດ.

2. **ກຸ່ມຊົນເຜົ່າກຶມມຸ**

   ເຜົ່າກຶມມຸກວມເອົາປະມານ 22% ຂອງພົນລະເມືອງລາວ, ໃຊ້ພາສາມອນ-ຂະແມ, ປະກອບດ້ວຍເຜົ່າ: ຕະໂອ້ຍ, ລະແວ, ລະເວນ, ຍະເຫີນ,ແງະ, ຕະລ່ຽງ, ອາລັກກະຕັງ, ຕະລຽວ, ຂະມຸ, ບິດ, ກະເສງ, ກ່ອຍ ແລະອື່ນໆ ສ່ວນຫຼາຍດຳລົງຊີວິດຢູ່ພູພຽງ ແລະ ພູດອຍແຕ່ປະຈຸບັນນີ້ດຳລົງຊີວິດປົນເປຢູ່ກັບກຸ່ມຊົນເຜົ່າອື່ນໆ. ເຜົ່າກຶມມຸແຕ່ກ່ອນແມ່ນອາຊີບເຮັດໄຮ່ ແລະ ລ່າເນື້ອ, ສ່ວນຫຼາຍນັບຖືຜີ.

3. **ກຸ່ມຊົນເຜົ່າມົ້ງ**

   ເຜົ່າມົ້ງກວມເອົາປະມານ10%ຂອງພົນລະເມືອງລາວ,ໃຊ້ພາສາມົ້ງ,ຢ້າວ,ມີກົກເຄົ້າມາຈາກຈີນປະກອບດ້ວຍເຜົ່າ:ມົ້ງ,ຢ້າວ,ຫໍ້,ໂລໆ,ມູເຊີ,ແລນແຕນ,ກໍ່,ຜູ້ນ້ອຍ ແລະ ອື່ນໆ, ອາໄສຢູ່ຕາມເນີນພູສູງ, ພູພຽງພາກເໜືອຂອງລາວ, ເຄີຍເຮັດໄຮ່ສາລີ, ລ້ຽງສັດ, ປູກຝິ່ນ, ຕີເຫຼັກ......

ຄຳຖາມ

## I. ແບບອັດຕາໄນ

1. ໃນລາວເຮົາມີຈັກກຸ່ມຊົນເຜົ່າໃຫຍ່? ຄືກຸ່ມຊົນເຜົ່າໃດແນ່?
2. ຈົ່ງຍົກແບບແຜນການດຳລົງຊີວິດ ແລະ ການທຳມາຫາກິນຂອງແຕ່ລະເຜົ່າ?
3. ຄວາມສາມັກຄີປອງດອງ ມີຜົນດີຕໍ່ການພັດທະນາສັງຄົມແນວໃດ?

## II. ແບບປາລະໄນ

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີ່ສຸດໂດຍໃຊ້ເຄື່ອງໝາຍນີ້ ✓ ໃສ່ຮູບສີ່ຫຼ່ຽມ ☐

1. ປະເທດລາວປະກອບດ້ວຍ 3 ຊົນເຜົ່າໃຫຍ່ຄື:
   - ☐ ເຜົ່າມົ້ງ, ເຜົ່າຜູ້ໄທ ແລະ ເຜົ່າກຶມມຸ
   - ☐ ເຜົ່າມົ້ງ, ເຜົ່າລາວລຸ່ມ ແລະ ເຜົ່າແລນແຕນ
   - ☐ ເຜົ່າມົ້ງ, ເຜົ່າລາວລຸ່ມ ແລະ ເຜົ່າກຶມມຸ
2. ພາສາປາກເວົ້າ ແລະ ຕົວໜັງສືຂອງກຸ່ມຊົນເຜົ່າໃດ ທີ່ຖືກຮັບຮອງໂດຍລັດຖະທຳມະນູນ ເປັນພາສາ ທາງລັດຖະການ
   - ☐ ແມ່ນພາສາປາກເວົ້າ ແລະ ຕົວໜັງສື ຂອງກຸ່ມຊົນເຜົ່າມົ້ງ.
   - ☐ ແມ່ນພາສາປາກເວົ້າ ແລະ ຕົວໜັງສື ຂອງກຸ່ມຊົນເຜົ່າມກຶມມຸ.
   - ☐ ແມ່ນພາສາປາກເວົ້າ ແລະ ຕົວໜັງສື ຂອງກຸ່ມຊົນເຜົ່າລາວລຸ່ມ.

# ບົດທີ 3
# ມູນເຊື້ອອັນດີງາມຂອງຊາດລາວ

**ມູນເຊື້ອອັນດີງາມຂອງຊາດລາວເຮົາມີ 3 ຢ່າງຕົ້ນຕໍຄື:**

1) ມູນເຊື້ອຮັກຊາດອັນສູງສົ່ງ.
2) ມູນເຊື້ອສາມັກຄີປອງດອງ ແລະ ມີໄມຕີຈິດ
3) ມູນເຊື້ອດຸໝັ່ນຂະຫຍັນພຽນ, ມີຫົວຄິດປະດິດສ້າງໃນການອອກແຮງງານ.

1. ຊາດລາວມີມູນເຊື້ອຮັກຊາດອັນສູງສົ່ງ, ຕໍ່ສູ້ພິລະອາດຫານບໍ່ຍອມຈຳນົນເພື່ອປົກປັກຮັກສາປະເທດຊາດ, ປົກປັກຮັກສາເອກະລາດ ແລະ ອິດສະຫຼະພາບຢ່າງໝັ້ນຄົງ. ປະຫວັດສາດຊາດລາວແມ່ນໄດ້ຕໍ່ຕ້ານການຮຸກຮານຢ່າງຕໍ່ເນື່ອງເພື່ອຄວາມໝັ້ນຄົງ ນີ້ແມ່ນມູນເຊື້ອໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

   ສະຕິຊາດໄດ້ຫຼໍ່ຫຼອມໃຫ້ແຕ່ລະຄົນມີນ້ຳໃຈຮັກຊາດເພື່ອເອກະລາດ ແລະ ອິດສະຫຼະພາບຂອງຊາດ, ການຕໍ່ສູ້ແຕ່ລະຍຸກແຕ່ລະສະໄໝແມ່ນບໍ່ຍອມຈຳນົນ ແລະ ສາມາດເອົາຊະນະສັດຕູຜູ້ຮຸກຮານ.

2. ຊາດລາວມີມູນເຊື້ອສາມັກຄີປອງດອງ ແລະ ມີຄວາມຮັກໃຄ່ໄມຕີຈິດມາແຕ່ບູຮານ.

   ປະເທດລາວມີຫຼາຍຊົນເຜົ່າແຕ່ກໍ່ເປັນເອກະພາບກັນ, ຜູກພັນກັນຢ່າງສະໜິດແໜ້ນສະແດງອອກຄື:

   1) ເຜົ່າຕ່າງໆໂຮມແຮງກັນປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສາມັກຄີປອງດອງກັນຢ່າງເປັນປຶກແຜ່ນ.
   2) ຢູ່ຮ່ວມສຸກ, ຮ່ວມທຸກນຳກັນໃນຜືນແຜ່ນດິນດຽວກັນ.
   3) ມີພື້ນຖານວັດທະນະທຳ-ສັງຄົມຮ່ວມກັນ.

3. ຊາດລາວມີມູນເຊື້ອດຸໝັ່ນອອກແຮງງານ ແລະ ປະດິດສ້າງ

   ຄົນລາວເປັນຄົນດຸໝັ່ນ, ມີຫົວຄິດປະດິດສ້າງ ພ້ອມກັນນັ້ນ ກໍ່ສ້າງມໍລະດົກທາງດ້ານວັນທະນະທຳອັນລ້ຳຄ່າໄວ້ຢ່າງຫຼວງຫຼາຍ, ມູນເຊື້ອດຸໝັ່ນສະແດງອອກຄື:

   3.1 ດ້ານເສດຖະກິດ: ແຕ່ໃດມາຄົນລາວ ມີອາຊີບປູກຝັງ, ລ້ຽງສັດ, ຫັດຖະກຳ, ຈັກສານ, ປັ້ນໝໍ້, ຕີໂລຫະຕ່າງໆ.

   3.2 ດ້ານວັດທະນະທຳ:ປູ່ຍ່າຕາຍາຍໄດ້ສ້າງສະຖາປັດຕິຍະກຳແລະສິນລະປະກຳອັນເປັນເອກະລັກຂອງຊາດທີ່ບໍ່ຊ້ຳແບບຄື: ໄຫຫີນ, ວັດພູ, ທາດຫຼວງ, ວັດຊຽງທອງ..... ມີພາສາ, ຕົວອັກສອນ, ວັນນະຄະດີ, ແບບຟ້ອນ, ການຂັບລຳທີ່ໜ້າອັດສະຈັນ.

ທັງໝົດນີ້ສະແດງໃຫ້ເຫັນເຖິງຜົນງານການອອກແຮງງານ, ຄວາມດຸໝັ່ນ ແລະ ມີຫົວຄິດປະດິດສ້າງຂອງຄົນລາວ, ພວກເຮົາຄວນຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ທີ່ເປັນເອກະລັກຂອງຊາດລາວເຮົາໃຫ້ຍືນຍົງ, ສີວິໄລ ແລະ ສືບທອດກັນຕໍ່ໆໄປ.

**ຄຳຖາມ**

**I. ແບບອັດຕະໄນ**

1. ມູນເຊື້ອອັນດີງາມຂອງຊາດລາວມີຫຍັງແດ່?
2. ຊາດລາວມີມູນເຊື້ອສາມັກຄີປອງດອງ ສະແດງອອກແນວໃດ?
3. ຄວາມດຸໝັ່ນຂອງຄົນລາວ ສະແດງອອກຄືແນວໃດ ? ຈົ່ງຍົກຕົວຢ່າງໃນຊີວິດປະຈຳວັນຂອງພວກເຮົາມາສົມທຽບ?

**II. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້,ໂດຍໃຊ້ເຄື່ອງໝາຍ ✓ ໃສ່ຮູບສີ່ຫຼ່ຽມ ☐

1. ເຜົ່າຕ່າງໆໂຮມແຮງກັນປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສາມັກຄີປອງດອງຢ່າງເປັນປຶກແຜ່ນ ນອນຢູ່ໃນວັດທະນະທຳດ້ານໃດຂອງລາວ?

   ☐ ມູນເຊື້ອຮັກຊາດອັນສູງສົ່ງ.
   
   ☐ ມູນເຊື້ອສາມັກຄີປອງດອງ ແລະ ມີໄມຕີຈິດ.
   
   ☐ ມູນເຊື້ອດຸໝັ່ນຂະຫຍັນພຽນ, ມີຫົວຄິດປະດິດສ້າງໃນການອອກແຮງງານ.

# ພາກທີ II ວັດທະນະທຳລາວ

# ບົດທີ 4

## ວັດທະນະທຳດ້ານພາສາ ແລະ ວັນນະຄະດີ

### 1. ວັດທະນະທຳດ້ານພາສາ

ພາສາລາວເປັນພາສາໃນຕະກຸນໄຕ - ລາວ, ມີສຳນຽງເວົ້າ, ມີຕົວອັກສອນທີ່ບັນທຶກໄວ້, ໃນເບື້ອງ ຕົ້ນເປັນພາສາຄຳໂດດ,ຕໍ່ມາປະຫັວດສາດຂະຫຍາຍຕົວຄຳສັບຄ່ອຍໆເພີ່ມຂຶ້ນ ດ້ວຍຄຳປະສົມຈາກເຄົ້າລາວເດີມ, ຄຳບາລີ, ສັນສະກິດ, ປະຈຸບັນພາສາດັ່ງກ່າວໄດ້ກາຍເປັນພາສາທາງການ, ໃຊ້ເພື່ອສະແດງຄວາມຄິດ, ຄວາມຮູ້ສຶກ,ການສື່ສານ ແລະ ອື່ນໆ . ພາສາລາວ ແລະ ອັກສອນລາວແມ່ນມູນມໍລະດົກທີ່ສືບທອດມາຈາກບັນພະບູລຸດລາວສ່ອງແສງໃຫ້ເຫັນມູນເຊື້ອດ້ານວັດທະນະທຳອັນລ້ຳເລີດ ດັ່ງສຸພາສິດທີ່ວ່າ " ພາສາບອກຊາດ ມາລະຍາດບອກຕະກຸນ"

### 2. ວັດທະນະທຳດ້ານວັນນະຄະດີ

ວັນນະຄະດີແມ່ນຜົນງານອັນປະເສີດທາງດ້ານຈິດໃຈ,ການປະດິດແຕ່ງແມ່ນອຸດົມຮັ່ງມີ ດ້ານເນື້ອໃນແມ່ນສອດຄ່ອງກັບຍຸກສະໄໝ ໂດຍສະເພາະແມ່ນບົດກາບກອນ, ບົດເລື້ອງຕ່າງໆ ສະແດງໃຫ້ເຫັນການເຄື່ອນໄຫວຂອງຄົນສະໄໝບູຮານ, ສະໄໝປະຈຸບັນ, ເຊິ່ງມີລັກສະນະສືບທອດ ຕັ້ງແຕ່ບູຮານນະການຈົນເຖິງປະຈຸບັນ ເພິ່ນແບ່ງອອກເປັນສາມພາກສ່ວນໃຫ່ຍຄື: ວັນນະຄະດີພື້ນເມືອງ, ວັນນະຄະດີຊຽນສະໄໝອານາຈັກລາວລ້ານຊ້າງ ແລະ ວັນນະຄະດີທັນສະໄໝ.

#### 2.1. ວັນນະຄະດີພື້ນເມືອງ

ນັບແຕ່ສະໄໝບໍ່ມີຕົວອັກສອນແມ່ນການເລົ່າປາກຕໍ່ປາກສືບທອດກັນມາເຊິ່ງປະກອບດ້ວຍເທບນິຍາຍ, ນິທານ, ພື້ນສືບ, ຄຳສຸພາສິດ, ກອນພະຫຍາ ແລະ ອື່ນໆ.

#### 2.2. ວັນນະຄະດີສະໄໝ ອານາຈັກລາວລ້ານຊ້າງ

ວັນນະຄະດີນີ້ມັນກຳເນີດມາພ້ອມອານາຈັກລາວລ້ານຊ້າງໃນກາງສະຕະວັດທີ XIV ວັນນະຄະດີຊຽນສະໄໝນີ້ ມີຢ່າງຫລວງຫຼາຍເຊັ່ນ: ຄຳໂອວາດຂອງເຈົ້າຟ້າງຸ່ມ, ຈຳປາສີ່ຕົ້ນ ແລະ ອື່ນໆ

#### 2.3. ວັນນະຄະດີທັນສະໄໝ

ວັນນະຄະດີໃນໄລະຍະນີ້ເພິ່ນແບ່ງເປັນ 3 ໄລຍະຄື:

1) ໄລຍະ 1893 - 1954
2) ໄລຍະ 1955 - 1975
3) ໄລຍະ 1976 ເຖິງປະຈຸບັນ

## 3. ດ້ານສິລະປະ

ສົ່ງເສີມໃຫ້ມີບັນຍາກາດມີຄວາມເບີກບານມ່ວນຊື່ນ, ມີການປຸກລະດົມຄວາມດຸໝັ່ນ, ຄວາມອົງອາດກ້າຫານ, ຄວາມກະຕືລືລົ້ນໃນການປະຕິບັດໜ້າທີ່ວຽກງານເປັນຕົ້ນແມ່ນແບບຟ້ອນ, ກອນລຳ, ກອນເຊີ້ງ, ກອນຂັບ , ບົດເພງ, ບົດເລື່ອງ ແລະ ອື່ນໆ ເຊິ່ງມີຫຼາຍແບບທີ່ແຕກຕ່າງກັນໃນແຕ່ລະທ້ອງຖິ່ນ.

## 4. ດ້ານສະຖາປັດຕິຍະກຳ

ບັນພະບູລຸດລາວໄດ້ສ້າງປູຊະນີຍະສະຖານສາຖາປັດຕິຍະກຳອັນປະເສີດໄວ້ໃຫ້ຄົນລຸ້ນຫຼັງ, ຫຼາຍສິ່ງທີ່ມີຊື່ລືຊາເຊັ່ນ: ທົ່ງໄຫຫີນ, ພະທາດຫຼວງ, ຫໍພະແກ້ວ, ວັດພູ, ທາດອິງຮັງ, ວັດຊຽງທອງ, ພູສີ. ນອກນີ້ຍັງມີການຕຳຜ້າ, ຕີເຫຼັກ, ຕີເງິນ, ຕີຄຳ, ການປັ້ນຫລໍ່ຄົວດລວດລາຍ, ລະບາຍສີ ແລະອື່ນໆ.

**ຄຳຖາມ:**

1) ວັດທະນະທຳດ້ານພາສາກຳເນີດມາໄດ້ແນວໃດ?
2) ວັດທະນະທຳວັນນະຄະດີສະແດງອອກແນວໃດແດ່?
3) ເພິ່ນແບ່ງວັນນະຄະດີອອກເປັນຈັກປະເພດ? ປະເພດໃດແດ່?
4) ດ້ານສິລະປະໄດ້ສະແດງອອກແນວໃດ?
5) ບັນພະບູລຸດລາວໄດ້ສ້າງສະຖາປັດຕິຍະກຳຫຍັງແດ່ໄວ້ໃຫ້ຄົນຮຸ້ນຫຼັງ?
6) **ບົດຝຶກຫັດ: (ແບບປາລະໄນ)**

ຈົ່ງເລືອກເອົາຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້ໂດຍໃຊ້ເຄື່ອງໝາຍ √ ໝາຍໃສ່ຮູບສີ່ລ່ຽມ

1. ວັດທະນະທຳລາວສ່ວນໜຶ່ງໄດ້ຮັບຜົນສະທ້ອນມາຈາກວັດທະນະທຳໃດ?
   - ☐ ຂະແມ ແລະ ອິນເດຍ
   - ☐ ຂະແມ, ໄທ ແລະ ຈີນ
   - ☐ ຂະແມ, ພະມ້າ, ໄທ ແລະ ອິນເດຍ.
2. ວັດທະນະທຳດ້ານວັນນະຄະດີເພິ່ນແບ່ງອອກເປັນຈັກພາກສ່ວນຄືພາກສ່ວນໃດແດ່?
   - ☐ ມີ 1 ພາກສ່ວນຄື: ວັນນະຄະດີພື້ນເມືອງ.
   - ☐ ມີ 2 ພາກສ່ວນຄື: ວັນນະຄະດີພື້ນເມືອງ. ວັນນະຄະດີສະໄໝອານາຈັກລາວລ້ານຊ້າງ
   - ☐ ມີ 3 ພາກສ່ວນຄື: ວັນນະຄະດີພື້ນເມືອງ, ວັນນະຄະດີສະໄໝອານາຈັກລາວລ້ານຊ້າງ ແລະ ວັນນະຄະດີທັນສະໄໝ.

# ບົດທີ 5
# ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນລາວ

## 1. ວັດທະນະທຳ

ວັດທະນະທຳແມ່ນຄຸນຄ່າອັນລວມຍອດຂອງຜະລິດຕະພັນດ້ານວັດຖຸ ແລະ ຈິດໃຈທີ່ມະນຸດໄດ້ສ້າງຂຶ້ນໂດຍຜ່ານຂະບວນວິວັດທາງປະຫວັດສາດແລະສັງຄົມມະນຸດ.

### ກ.ວັດທະນະທຳດ້ານວັດຖຸ:

ແມ່ນພາກສ່ວນໜຶ່ງທີ່ເຫັນກັບຕາ, ສຳພັດໄດ້ດ້ວຍອິນຊີທັງ 5 ເປັນຕົ້ນແມ່ນເຄື່ອງໃຊ້ປະຈຳວັນ, ເຄື່ອງນຸ່ງ,ເຄື່ອງມື,ເຄື່ອງອຸປະກອນປະກອບການທຳມາຫາກິນທີ່ມີທັງສຳເລັດຮູບແລະສ້າງຂຶ້ນເອງ

### ຂ. ວັດທະນະທຳດ້ານຈິດໃຈ

ແມ່ນພາກສ່ວນໜຶ່ງທີ່ບໍ່ສາມາດສຳພັດໄດ້ດ້ວຍຕາເປົ່າເພາະມັນຢູ່ໃຈຈິດສຳນຶກແລະຄຸນສົມບັດຂອງຄົນເປັນຕົ້ນແມ່ນສັດຈະທຳໃນຕົວຂອງບຸກຄົນ, ການປະຕິບັດລະບຽບການຕ່າງໆ, ການປະຕິບັດລະບຽບດ້ານກົດໝາຍ,ພາສາສຽງຂັບລຳທ້ອງຖິ່ນ.

## 2. ດ້ານການເຊື່ອຖື

ປະຊາຊົນລາວສ່ວນຫຼາຍແມ່ນນັບຖືສາສະໜາພຸດ, ສາສະໜາພຸດນີ້ເປັນສາສະໜາປະຈຳຊາດ, ນັບແຕ່ສະຕະວັດທີ XIV ເປັນຕົ້ນມາ, ພາຍຫຼັງເຈົ້າຟ້າງູ່ມທ້ອນໂຮມອານາຈັກລ້ານຊ້າງ, ສາສະໜາພຸດໄດ້ມີອິດທິພົນ, ຄົນລາວມີການນັບຖືພຸດຢ່າງເລິກເຊິ່ງ, ວັດວາອາຮາມກາຍເປັນສູນກາງວັດທະນະທຳຂອງຄົນລາວ, ຊາວລາວເຄີຍນັບຖື. ເດັກຊາຍອາຍຸ 10 - 12 ປີຕ້ອງໄດ້ບວດເພື່ອຮຽນຮູ້ເລື່ອງການດຳລົງຊີວິດ ແລະ ຖືສິນ5, ໃສ່ບາດ, ຍາດນ້ຳ...ນອກນີ້ບາງຄອບຄົວຍັງຖືສາສະໜາ ກາໂຕລິກ,ຜີ.

### ກ. ດ້ານປະເພນີ

ຮີດຄອງປະເພນີແມ່ນແບບແຜນການປະພຶດ, ການປະຕິບັດຕົນຂອງຄົນໃນສັງຄົມທີ່ເຄີຍປະຕິບັດກັນມາເປັນເວລາອັນຍາວນານ, ສືບທອດກັນມາເຖິງປະຈຸບັນ.

### ຂ. ຮີດຄອງປະເພນີຄອບຄົວ

ເປັນປະເພນີສ່ວນບຸກຄົນ ໂດຍພົວພັນເຖິງຍາດພີ່ນ້ອງ ແລະ ໝູ່ເພື່ອນ, ການແຕ່ງງານ,ການສູ່ຂັວນ, ການບວດ, ການຢູ່ກຳ, ສິ່ງສະການ ແລະ ຂຶ້ນເຮືອນໃໝ່.

### ຄ. ປະເພນີສັງຄົມ

ແມ່ນປະເພນີທີ່ຄົນຍອມຮັບຮູ້ ແລະ ເຄີຍປະຕິບັດກັນມາທຸກປີເປັນປະຈຳຄື:

ບຸນປີໃໝ່ລາວ(ກຸດສົງການ)   ຢູ່ລະຫ່ວາງ13 - 16 ເມສາ (4) ຂອງທຸກໆປີ
ບຸນບັ້ງໄຟ ໃນລະຫວ່າງເດືອນ ພຶດສະພາ ເຖິງເດືອນ ມິຖຸນາ
ບຸນເຂົ້າພັນສາ ເລີ່ມແຕ່ຂຶ້ນ 15 ຄ່ຳ ເດືອນ 8 ຕະຫຼອດ 3 ເດືອນ.
ບຸນຫໍ່ເຂົ້າປະດັບດິນ  14 ຄ່ຳເດືອນກັນຍາ.(9)
ບຸນເຂົ້າສະຫຼາກ 15 ຄ່ຳເດືອນຕຸລາ.(10)
ບຸນອອກພັນສາ  15 ຄ່ຳເດືອນພະຈິກ(11)
ບຸນຊ່ວງເຮືອ ແມ່ນເລີ້ມຕົ້ນເຂົ້າພັນສາ
ບຸນພະທາດຫຼວງ 15 ຄ່ຳເດືອນ12.
ບຸນກິນຈຽງຂອງເຜົ່າມົ້ງ( ຢູ່ລະຫວ່າງເດືອນມັງກອນ 1)  ແລະ ອື່ນໆ

ນອກນີ້ຍັງມີປະເພນີທ້ອງຖິ່ນທີ່ເຄີຍປະຕິບັດກັນມາແຕ່ໂບຮານນະການເຊິ່ງແຕ່ລະທ້ອງຖິ່ນຈະມີຄວາມແຕກຕ່າງກັນໄປເຊັ່ນ:

ປະເພນີອາຊີບ: ການຕົ້ມເກືອ , ບັກຍານ, ທໍໄໝ ແລະ ອື່ນໆ
ປະເພນີການແຕ່ງກາຍ:  ການນຸ່ງຖື, ການເກົ້າຜົມ ແລະ ອື່ນໆ

**ຄຳຖາມ:**

1) ວັດທະນະທຳແມ່ນຫັຍງ?
2) ວັດທະນະທຳມີຈັກປະເພດ? ປະເພດໃດແດ່?
3) ຄົນລາວສ່ວນຫຼາຍເຊື່ອຖືສາສະໜາພຸດ ຍ້ອນຫຍັງ?
4) ປະເພນີລາວມີແນວໃດແດ່?

**ແບບຝຶກຫັດ:**

1) ວັດທະນະທຳຄົງຕົວຢູ່ໃນສັງຄົມມີຮີດຄອງປະເພດໃດແດ່?
   ກ.  ດ້ານວັດຖຸ ແລະ ຈິດໃຈ
   ຂ. ດ້ານວັດຖຸ ແລະ ວັນນະຄະດີ
   ຄ.  ດ້ານວັດຖຸ ແລະ ປະເພນີ.
2) ຍ້ອນເຫດຜົນໃດຊາວລາວຈຶ່ງສົ່ງລູກ-ຫຼານເຂົ້າບວດແຕ່ອາຍຸ10 - 12 ປີ?
   ກ . ສ້າງສາມະທິ
   ຂ . ສະຫງົບຈິດໃຈ
   ຄ . ຮຽນຮູ້ເລື່ອງການດຳລົງຊີວິດ

3) ຜູ້ຍິງລາວສະໄໝໂບຮານແຕ່ງຕົວແນວໃດໄປງານບຸນວັດ?

ກ. ນຸ່ງເສື້ອຂາວ,ນູ່ງຜ້າໄໝ,ເນັບຕົ້ງວ.ບ່ຽງແພ.

ຂ. ຊຸດລາຕີ, ຊຸດສາກົນ

ຄ. ນຸ່ງສິ້ນມີຕີນ, ເກົ້າຜົມ,ນູ່ງເສື້ອດໍານິນ , ບ່ຽງແພ

# ບົດທີ 6
# ມາລະຍາດໃນສັງຄົມ

## I. ມາລະຍາດພື້ນຖານໃນການດຳລົງຊີວິດ

ມາລະຍາດແມ່ນການປະຕິບັດວັດທະນະທຳໃນການດຳລົງຊີວິດປະຈຳວັນ, ແມ່ນການປະພຶດຕໍ່ຄົນອື່ນເຊິ່ງເກີດຈາກບົດຮຽນ,ປະສົບການທີ່ສະສົມເປັນເວລາດົນນານຈາກຄົນຮຸ່ນນີ້ຕໍ່ຄົນຮຸ່ນໃໝ່.

### 1. ມາລະຍາດໃນການເຄົາລົບ

ການເຄົາລົບນັບຖືແມ່ນການອ່ອນນ້ອມຖ່ອມຕົວ, ຮູ້ຈັກເຄົາລົບກຽດສັກສີຂອງຄົນອື່ນ, ຮູ້ໃຫ້ອະໄພເຊິ່ງກັນແລະກັນ, ການເວົ້າຈາ ປາໄສດ້ວຍຄວາມອ່ອນນ້ອມ,ຮູ້ຕ່ຳ ຮູ້ສູງແລະອື່ນໆ.

### 2. ມາລະຍາດໃນການປາກເວົ້າ

ແມ່ນການເວົ້າຈາສຸພາບອອ່ນຫວານບໍ່ເວົ້າຄຳຫຍາບຄາຍ,ບໍ່ໝິ່ນປະໝາດຄົນອື່ນ, ບໍ່ເວົ້າຕົວະ, ນິນທາໃສ່ຮ້າຍປ້າຍສີຄົນອື່ນ ,ຕ້ອງຮູ້ຂໍໂທດ ແລະ ຂອບໃຈ.

### 3. ມາລະຍາດໃນການຕ້ອນຮັບແຂກ

ການຕ້ອນຮັບແຂກທ່າທີຍິ້ມແຍ້ມແຈ່ມໃສ,ຈັດຫາທີ່ນັ່ງ,ນ້ຳແລະອື່ນໆໃຫ້ເພິ່ນອີງຕາມຄວາມເໝາະສົມ, ຖ້າແມ່ນແຂກຜູ້ໃຫຍ່ມາຢາມ ຫຼື ໄປຢາມເພິ່ນກໍຕ້ອງມີຂອງຕ້ອນຕາມຄວາມເໝາະສົມ

### 4. ມາລະຍາດຕໍ່ທຸກຄົນໃນຄອບຄົວແລະພີ່ນ້ອງ

ຮູ້ຮັກແພງ,ສາມັກຄີ,ຈິງໃຈ,ຖືກຕ້ອງປອງດອງກັນໃຫ້ຄວາມອົບອູ່ນເບິ່ງແຍງຊ່ວຍເຫຼືອກັນຢ່າງມີຄວາມສຸກ.

### 5. ມາລະຍາດໃນການປະພຶດຕົນຢູ່ຊຸມຊົນ ແລະ ສັງຄົມ

ການເຂົ້າຮ່ວມປະຊຸມ, ການເຂົ້າຮຽນ, ການໄປຮ່ວມງານທີ່ສຳຄັນ ແລະ ອື່ນໆ,ກ່ອນອື່ນຕ້ອງເຄັ່ງຄັດຕໍ່ເວລາ, ການນຸ່ງຖືໃຫ້ເໝາະກັບກາລະເທສະ ແລະ ອື່ນໆ.

ການປະກອບຄຳຄິດຄຳເຫັນຢ່າງສ້າງສັນ, ການເວົ້າຕ້ອງໃຫ້ຖືກປະເດັນ, ເຂົ້າໃຈງ່າຍ,ຟັງຄວາມຄິດເຫັນຂອງຄົນອື່ນ, ຄວນສະແດງການເຄົາລົບ, ການວາງທ່າທີ, ໃຫ້ຄວາມຮ່ວມມືແກ່ການຈັດຕັ້ງແຕ່ລະຂັ້ນທີ່ມາເຮັດວຽກນຳ.

**ຜູ້ມາຢ້ຽມຢາມ:** ຕ້ອງແຕ່ງຕົວສຸພາບ, ສະແດງການຄຳນັບເຈົ້າພາບ, ມີຄວາມຍິ້ມແຍ້ມແຈ່ມໃສ, ເວລາກັບຄວນສັ່ງລາ ດ້ວຍຄວາມສຸພາບອ່ອນຫວານ.

**ການເຂົ້າຫາຜູ້ໃຫ່ຍ**: ກ່ອນເຂົ້າພົບຕ້ອງຂໍອະນຸຍາດ ຫຼື ເຄາະປະຕູຄ່ອຍໆ ສາມບາດ, ຖ້າໄດ້ຮັບອະນຸຍາດແລ້ວຈຶ່ງເຂົ້າພົບ, ຖ້າໄປພົບທາງລັດຖະການຕ້ອງພົວພັນກັບເລຂານຸການ, ຖ້າມີນັດແລ້ວ ຕ້ອງເຂົ້າພົບເພິ່ນກົງກັບເວລາທີ່ນັດ.

**ການໄປຢັ້ງມຢາມຄົນເຈັບ:** ຕ້ອງເບິ່ງເວລາໃຫ້ເໝາະສົມ ເພື່ອບໍ່ເປັນການລົບກວນການພັກຜ່ອນຂອງຜູ້ເຈັບ.

## 6. ມາລະຍາດໃນການຮ່ວມພາເຂົ້າ

ຕ້ອງໄປກົງກັບເວລາຕາມການເຊີນ, ການແຕ່ງກາຍສຸພາບຮຽບຮ້ອຍ , ນັ່ງຕາມການຈັດວາງຂອງເຈົ້າພາບ, ເວລາເລີ່ມກິນອາຫານຢ່າເອົາຜ້າເຊັດຖ້ວຍ, ບ່ວງ, ເບິ່ງເພິ່ນເບິ່ງໂຕ ຄ່ອຍໆກິນ, ເວລາຫຍໍ້າອາຫານຢ່າໃຫ້ມີແສງດັງຈອັບແຈັບ, ເມື່ອເຫັນວ່າແຂກສໍາຄັນອີ່ມໝົດແລ້ວເຮົາກໍ່ຄວນອີ່ມພ້ອມເພິ່ນ, ຢ່າດື່ມສຸລາຈົນລືມຕົວ, ຢ່າແກະ, ຢ່າເກົາ, ຢ່າຄໍ້າແກ້ມ ຫຼື ເອົາມືລົງກ້ອງໂຕະ, ຢ່າລົມກັນຂ້າມໜ້າຜູ້ອື່ນ, ຢ່າໄອ, ຢ່າຈາມ, ຢ່າອ່ານໃນເວລາຮ່ວມພາເຂົ້າ.

## 7. ມາລະຍາດທີ່ຄວນລະວັງ

1) ບໍ່ຄວນລັກຈອບເບິ່ງເພິ່ນເຮັດວຽກ ແລະ ອ່ານໜັງສື.
2) ບໍ່ຄວນແຕະຕ້ອງຈັບບາຍສິ່ງຂອງໂດຍບໍ່ໄດ້ຮັບອະນຸຍາດ.
3) ຫ້າມເປີດເບິ່ງເອກະສານ, ຈົດໝາຍຂອງຜູ້ອື່ນກ່ອນໄດ້ຮັບອະນຸຍາດ.
4) ບໍ່ຄວນຖິ້ມຂີ້ເຫຍື້ອຊະຊາຍ.
5) ຢ່າຕິສິນນິນທາ ກ່າວຂ້ວນຄົນອື່ນ.
6) ບໍ່ຄວນສົ່ງສຽງດັງເກີນຂອບເຂດ.
7) ບໍ່ຄວນຢຽບເດີ່ນຫຍ້າ, ບັກຕົ້ນໄມ້ທົ່ວທີບ.
8) ບໍ່ຄວນຂົ່ມເພິ່ນຍໍໂຕ, ປະຈົບປະແຈງເອົາດີແຕ່ໂຕເອງ.
9) ບໍ່ຄວນໃຊ້ອາລົມຕົນເອງເຂົ້າຫາໝູ່ໃນເວລາພວມເຮັດວຽກ

## ຄໍາຖາມ

1) ມາລະຍາດພື້ນຖານໃນການດໍາລົງຊີວິດແມ່ນແນວໃດ?.
2) ການຕ້ອນຮັບແຂກ , ການໄປຢາມຄົນເຈັບ ພວກເຮົາຄວນເຮັດແນວໃດ?
3) ໃນເວລາເຂົ້າຮ່ວມປະຊຸມເຮົາຄວນສະແດງຕົນແນວໃດ?
4) ເມື່ອຖືກເຊີນໄປງານໃດໜຶ່ງເຮົາຄວນວາງໂຕແນວໃດ?
5) ເວລາເຂົ້າຮ່ວມພາເຂົ້າ ຕ້ອງເຮັດແນວໃດ ຈຶ່ງຖືວ່າເປັນຜູ້ມີມາລະຍາດທີ່ດີ ?
6) ນອກຈາກມາລະຍາດທີ່ສະເໜີມາໃນບົດຮຽນນັ້ນແລ້ວ ທ່ານເຫັນວ່າຍັງມີມາລະຍາດໃດຕື່ມອີກ ແລະ ມາລະຍາດທີ່ຄວນລະວັງມີແນວໃດ?

# ພາກທີ III

# ລະບອບການປົກຄອງ ຂອງ ສ ປ ປ ລາວ

# ບົດທີ 7

# ລະບອບການເມືອງ, ການປົກຄອງຂອງ ສ ປ ປ ລາວ

## I. ລະບອບການເມືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດເອກະລາດ, ມີອຳນາດປະຊາທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ, ເປັນປະເທດເອກະພາບຂອງທຸກຊົນເຜົ່າທີ່ຕັດແຍກອອກຈາກກັນບໍ່ໄດ້, ແມ່ນລັດປະຊາທິປະໄຕ ປະຊາຊົນ ອຳນາດທັງໝົດເປັນຂອງປະຊາຊົນໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ແມ່ນອົງການບໍລິຫານແຫ່ງລັດເຊິ່ງຮັບຮອງເອົາໂດຍສະພາແຫ່ງຊາດ, ຮັບຜິດຊອບຕໍ່ສະພາແຫ່ງຊາດ ແລະ ປະທານປະເທດ, ມີພາລະບົດບາດຄຸ້ມຄອງຢ່າງເປັນເອກະພາບປະຕິບັດໜ້າທີ່ຂອງລັດທຸກດ້ານ:ດ້ານການເມືອງ,ດ້ານເສດຖະກິດ, ວັດທະນະທຳ ສັງຄົມ, ຊັບພະຍາກອນ, ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ.

1. ສະພາແຫ່ງຊາດແມ່ນຕົວແທນຂອງປະຊາຊົນ

   ສະພາແຫ່ງຊາດແມ່ນຕົວແທນສິດອຳນາດແລະຜົນປະໂຫຍດຂອງປະຊາຊົນ, ເປັນອົງການອຳນາດແຫ່ງລັດທັງເປັນອົງການນິຕິບັນຍັດທີ່ມີສິດຕົກລົງບັນຫາພື້ນຖານຂອງປະເທດຊາດ,ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ, ນອກນີ້ຍັງມີສິດ ແລະ ໜ້າທີ່ເຊິ່ງຖືກກຳນົດໄວ້ໃນກົດໝາຍ.

2. ລັດປົກປ້ອງອິດສະຫຼະພາບ ແລະ ສິດປະຊາທິປະໄຕຂອງປະຊາຊົນ.

   ລັດແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວແມ່ນລັດປະຊາທິປະໄຕປະຊາຊົນ,ເປັນອົງການແຫ່ງອຳນາດການເມືອງ, ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ.

## II. ຈຸດພິເສດການຈັດຕັ້ງການປົກຄອງຂອງ ສ ປ ປ ລາວ

1) ລະບອບປົກຄອງແມ່ນແບບປະຊາທິປະໄຕ ມີພັກດຽວ.
2) ລະບອບລັດຖະສະພາມີພັກດຽວ.

## 1. ລະບົບການຈັດຕັ້ງຢູ່ປະເທດລາວປະກອບດ້ວຍ 3 ອົງການຕົ້ນຕໍຄື:

### 1) ອົງການບໍລິຫານ

ໝາຍເຖິງອຳນາດໃນການບໍລິຫານປະເທດເຊິ່ງປະກອບມີປະທານປະເທດ,ຄະນະລັດຖະບານ ນາຍົກລັດຖະມົນຕີ, ອຳນາດການປົກຄອງທ້ອງຖິ່ນ, ສຳນັກງານນາຍົກ, ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ.

### 2) ອົງການ ນິຕິບັນຍັດ

ໝາຍເຖິງອົງການອຳນາດສູງສຸດ ເອີ້ນວ່າສະພາແຫ່ງຊາດເຊິ່ງປະກອບມີ: ສານປະຊາຊົນສູງສຸດ, ປະທານສານສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານສູງສຸດ.

### 3) ອົງການ ຕຸລາການ

ແມ່ນອົງການອຳນາດແຫ່ງລັດ,ມີພາລະບົດບາດຕິດຕາມກວດກາ ແລະ ການປະຕິບັດກົດ ໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທຸກຂັ້ນທົ່ວປະເທດ.

## 2. ການແບ່ງຂັ້ນປົກຄອງໃນປັດຈຸບັນ

### 2.1. ການປົກຄອງຂັ້ນສູນກາງ

1) ອຳນາດລັດຂັ້ນສູນກາງແມ່ນອົງການນິຕິບັນຍັດເຊິ່ງເປັນອົງການສູງສຸດແຫ່ງລັດຂອງສປປລາວ.
2) ອົງການບໍລິຫານປະກອບດ້ວຍ 2 ພາກສ່ວນຄື: ປະທານປະເທດ ແລະ ລັດຖະບານ.
3) ອົງການຕຸລາການປະກອບດ້ວຍ 2 ພາກສ່ວນຄື: ສານປະຊາຊົນສູງສູງ ແລະ ອົງການໄອຍະການ.

### 2.2. ການຈັດຕັ້ງການປົກຄອງທ້ອງຖິ່ນ

1) ການຈັດຕັ້ງຂັ້ນແຂວງຫຼືນະຄອນຫຼວງ: ຜູ້ບໍລິຫານສູງສຸດຂອງແຂວງແມ່ນເຈົ້າແຂວງຫຼືເຈົ້າຄອງນະຄອນຫຼວງ, ເປັນຕົວແທນລັດຖະບານ ແລະ ລັດຖະມົນຕີກະຊວງ.
2) ການຈັດຕັ້ງຂັ້ນເມືອງ:ເຈົ້າເມືອງເປັນຜູ້ບໍລິຫານສູງສຸດ, ເປັນຕົວແທນໃຫ້ແກ່ລັດຖະບານ ແລະ ລັດຖະມົນຕີກະຊວງ.
3) ການຈັດຕັ້ງຂັ້ນບ້ານ: ເປັນບ່ອນປະຕິບັດແນວທາງນະໂຍບາຍ, ມະຕິຄຳສັ່ງຂອງຂັ້ນເທິງທຸກຂັ້ນ, ນາຍບ້ານເປັນຜູ້ບໍລິຫານສູງສຸດເຊິ່ງປະຊາຊົນພາຍໃນບ້ານເປັນຜູ້ເລືອກຕັ້ງເອົາ.

## ຄຳຖາມ

1) ພວກສະຫາຍເຂົ້າໃຈແນວໃດຕໍ່ລະບອບການເມືອງໃນ ສປປ ລາວ?
2) ຈຸດພິເສດການຈັດຕັ້ງການປົກຄອງຂອງສ ປ ປ ລາວ ມີແນວໃດແດ່?
3) ການຈັດຕັ້ງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນມີແນວໃດແດ່?

## ບົດຝຶກຫັດ

1) ລະບອບການເມືອງໃນ ສປປ ລາວ ແມ່ນອົງການຈັດຕັ້ງໃດເຮັດໜ້າທີ່ເປັນຕົວແທນຂອງ ປະຊາຊົນ?
   ☐ ສະພາແຫ່ງຊາດ
   ☐ ອົງການບໍລິຫານ
   ☐ ອົງການຕຸລາການ.
2) ການປົກຄອງສປປລາວ ປະກອບດ້ວຍການປົກຄອງໃດແດ່?
   ☐ ແບບປະຊາທິປະໄຕ 3 ພັກ (ນິຕິບັນຍັດ , ບໍລິຫານ, ຕຸລາການ)
   ☐ ແບບປະຊາທິປະໄຕມີພັກດຽວ.
   ☐ ແບບປະຊາທິປະໄຕມີ 2 ພັກ ( ປະທານປະເທດ ແລະ ລັດຖະບານ)
3) ອຳນາດການປົກຄອງຂັ້ນສູນກາງປະກອບດ້ວຍ:
   ☐ ອົງການນິຕິບັນຍັດ,ບໍລິຫານ.
   ☐ ອົງການນິຕິບັນຍັດ, ຕຸລາການ.
   ☐ ອົງການນິຕິບັນຍັດ,ຕຸລາການ ແລະ ນິຕິບັນຍັດ
4) ຜູ້ບໍລິຫານສູງສຸດຂັ້ນເມືອງແມ່ນ:
   ☐ ເຈົ້າແຂວງ ຫຼື ເຈົ້າຄອງກຳແພງ.
   ☐ ເຈົ້າເມືອງ
   ☐ ນາຍບ້ານ

# ບົດທີ 8
# ລະບອບການປົກຄອງຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງຂອງ ສ ປ ປ ລາວ

## 1. ການປົກຄອງຂັ້ນບ້ານ

ໃນບ້ານໜຶ່ງມີນາຍບ້ານເປັນຜູ້ປົກຄອງ, ມີຮອງ 1 ຄົນ ຫຼື 2 ຄົນແລ້ວແຕ່ຂະໜາດຂອງບ້ານ. ນອກຈາກນັ້ນກໍມີຄະນະກຳມະການຊ່ວຍວຽກນາຍບ້ານທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງ ກັນຊາດ, ປ້ອງກັນຄວາມສະຫງົບ.

ບ້ານໜຶ່ງປະກອບມີຫຼາຍໜ່ວຍ, ແຕ່ລະໜ່ວຍປະກອບມີຫຼາຍຄອບຄົວ, ແຕ່ລະໜ່ວຍມີຫົວໜ້າໜ່ວຍແລະຮອງ. ຢູ່ບ້ານໜຶ່ງປະກອບມີຫຼາຍອົງການຈັດຕັ້ງທີ່ຖືກກົດໝາຍເຊັ່ນ: ການຈັດຕັ້ງພັກ, ການຈັດຕັ້ງຍິງ, ການຈັດຕັ້ງຊາວໜຸ່ມ, ການຈັດຕັ້ງແນວໂຮມ, ກຳມະບານ, ວິຊາຊີບ ແລະ ສາມະຄົມອື່ນໆ ທີ່ເຄື່ອນໄຫວຕາມພາລະບົດບາດຂອງຕົນ ແຕ່ຢູ່ໃນການຄຸ້ມຄອງທາງດ້ານລະບຽບກົດໝາຍຂອງບ້ານ.

## 2. ການປົກຄອງຂັ້ນເມືອງ

ເມືອງແມ່ນອົງການຈັດຕັ້ງທ້ອງຖິ່ນ, ການປົກຄອງແມ່ນແບບເປັນໝູ່ຄະນະ, ບຸກຄົນຮັບຜິດຊອບມີສຳນັກງານປົກຄອງເມືອງ, ມີຄະນະປົກຄອງເມືອງເຊິ່ງມາຈາກຫຼາຍຂະແໜງການອ້ອມຂ້າງ.

ການປົກຄອງຂັ້ນເມືອງແມ່ນເຈົ້າເມືອງເປັນຜູ້ບໍລິຫານສູງສຸດ, ທັງເປັນຕົວແທນລັດຖະບານແລະລັດຖະມົນຕີຂອງທຸກໆກະຊວງ, ໄດ້ຮັບການແຕ່ງຕັ້ງໂດຍດຳລັດນາຍົກລັດຖະມົນຕີຕາມການສະເໜີຂອງເຈົ້າແຂວງ ຫຼື ເຈົ້າຄອງນະຄອນ.

ການປົກຄອງຂັ້ນເມືອງຍັງມີເລຂາພັກເມືອງ, ຜູ້ບັນຊາການ ປກສ ເມືອງ, ຜູ້ບັນຊາທະຫານເມືອງ, ຫົວໜ້າໜ່ວຍງານຕ່າງໆອ້ອມຂ້າງເມືອງ.

## 3. ການ ປົກຄອງຂັ້ນແຂວງ, ນະຄອນຫຼວງ

ອີງຕາມສະພາບປ່ຽນແປງແຕ່ລະໄລຍະການຂະຫຍາຍຕົວຂອງປະເທດ ແລະ ສັງຄົມ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ແບ່ງເປັນ16 ແຂວງ ແລະ 1 ນະຄອນຫຼວງ ເຊິ່ງບັນຈຸຢູ່ໃນ 3 ພາກດັ່ງນີ້:

### 3.1. ພາກເໜືອ:

1) ແຂວງ ຜົ້ງສາລີ
2) ແຂວງ ອຸດົມໄຊ.

3) ແຂວງ ຫຼວງນ້ຳທາ.

4) ແຂວງ ບໍ່ແກ້ວ.

5) ແຂວງ ຫຼວງພະບາງ.

6) ແຂວງ ຫົວພັນ.

7) ແຂວງ ໄຊຍະບູລີ.

8) ແຂວງ ຊຽງຂວາງ.

### 3.2. ພາກກາງ

9) ແຂວງ ວຽງຈັນ.

10) ນະຄອນຫຼວງ.

11) ແຂວງ ບໍລິຄຳໄຊ.

12) ແຂວງ ຄຳມ່ວນ.

13) ແຂວງ ສະຫັວນນະເຂດ.

### 3.3.ພາກໃຕ້

14) ແຂວງ ຈຳປາສັກ.

15) ແຂວງ ສາລະວັນ.

16) ແຂວງ ເຊກອງ.

17) ແຂວງ ອັດຕະປື.

ການຈັດແບ່ງແຂວງແມ່ນແນໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ການປົກຄອງ ໂດຍອີງໃສ່ທາງດ້ານພູມສາດ ແລະ ການແຈກຢາຍຂອງປະຊາຊົນ.

**ຄຳຖາມ:**

1) ການຈັດຕັ້ງປົກຄອງບ້ານໜຶ່ງມີຫຍັງແດ່?

2) ເມືອງໜຶ່ງປະກອບດ້ວຍອົງການຈັດຕັ້ງໃດແດ່?

3) ບຸກຄົນທີ່ສຳຄັນໃນການປົກຄອງຂັ້ນເມືອງມີໃຜແດ່?

4) ສປປ ລາວແບ່ງເປັນຈັກພາກ? ພາກໃດແດ່? ແຕ່ລະພາກມີແຂວງໃດແດ່?

## ແບບບົດຝຶກຫັດ

ຈົ່ງເລືອກເອົາຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້ໂດຍໃຊ້ເຄື່ອງໝາຍ √ ໃສ່ຮູບສີ່ລ່ຽມ ☐

1. ການຈັດຕັ້ງການປົກຄອງບ້ານໜຶ່ງມີຫຍັງແດ່?
   - ☐ ຊາວໜຸ່ມແລະແມ່ຍິງ.
   - ☐ ການຈັດຕັ້ງພັກ,ກຳມະບານ,ວິຊາຊີບແລະສາມະຄົມອື່ນໆ.
   - ☐ ຖືກໝົດທຸກຂໍ້.

2. ຜູ້ມີອຳນາດສູງສຸດທາງລັດຖະການໃນເມືອງໜຶ່ງແມ່ນໃຜ?
   - ☐ ຮອງເຈົ້າເມືອງ
   - ☐ ນາຍບ້ານ
   - ☐ ເຈົ້າເມືອງ

# ບົດທີ 9
# ສະພາແຫ່ງຊາດ (ອົງການນິຕິບັນຍັດ)

## 1. ຄວາມໝາຍຂອງສະພາແຫ່ງຊາດ

ສະພາແຫ່ງຊາດແມ່ນອົງການນິຕິບັນຍັດ ແມ່ນອົງການສູງສຸດແຫ່ງລັດຂອງ ສປປ ລາວ ແມ່ນອົງການຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ມີສິດຕົກລົງບັນຫາທີ່ເປັນພື້ນຖານຂອງປະເທດ, ເປັນອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ ແລະ ອົງການຕຸລາການ.

## 2. ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

1) ສ້າງແລະຮັບຮອງເອົາ ຫຼື ປັບປຸງແປງລັດຖະທຳມະນູນ.
2) ພິຈາລະນາ, ຮັບຮອງເອົາ, ປັບປຸງແປງ ຫຼື ລົບລ້າງກົດໝາຍ.
3) ພິຈາລະນາ, ຮັບຮອງເອົາ, ປັບປຸງແປງ ຫຼື ລົບລ້າງພາສີ ແລະ ຊ່ວຍອາກອນ.
4) ພິຈາລະນາ, ຮັບຮອງເອົາແຜນຍຸດທະສາດພັດທະນາເສດຖະກິດ - ສັງຄົມ.
5) ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງຫຼືປົດຕຳແໜ່ງຄະນະລັດຖະບານ
6) ເລືອກຕັ້ງແລະປົດຕຳແໜ່ງປະທານປະເທດຕາມຄຳສະເໜີຂອງຄະນະປະຈຳສະພາ.
7) ເລືອກຕັ້ງ ຫຼືປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະ ອະທິໄອຍະການປະຊາຊົນ.
8) ຕົກລົງສ້າງຕັ້ງ ຫຼື ຍຸບເລີກກະຊວງ , ອົງການທຽບເທົ່າ ແລະ ນະຄອນຫຼວງ.
9) ຕົກລົງ ລົບລ້າງ ສົນທິສັນຍາທີ່ເຊັນກັນກັບຕ່າງປະເທດ ຕາມລະບຽບກົດໝາຍສາກົນ.
10) ຕົກລົງບັນຫາສົງຄາມ ຫຼື ສັນຕິພາບ
11) ຕົກລົງນິລະໂທດກຳ
12) ຕິດຕາມການເຄົາລົບລັດຖະທຳມະນູນ ແລະ ກົດໝາຍ
13) ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 3. ການຈັດຕັ້ງຂອງສະພາແຫ່ງຊາດ

ການຈັດຕັ້ງຂອງສະພາແຫ່ງຊາດ ເປັນລະບົບຄົບຊຸດ ເຊິ່ງມີສຳນັກງານຕັ້ງຢູ່ນະຄອນຫຼວງວຽງຈັນ, ສຳນັກງານສະພາແຫ່ງຊາດເປັນບ່ອນເຮັດວຽກຂອງ:

1) ບັນດາປະທານພັກ ແລະ ຄະນະປະທານສະພາແຫ່ງຊາດ
2) ຄະນະປະຈຳສະພາແຫ່ງຊາດ.
3) ຄະນະກຳມະທິການສະພາແຫ່ງຊາດ.
4) ບັນດາກົງຈັກຊ່ວຍວຽກຂອງສະພາແຫ່ງຊາດ.

## 4. ການເລືອກຕັ້ງສາມະຊິກສະພາແຫ່ງຊາດ

1) ສະພາແຫ່ງຊາດແຕ່ລະສະໄໝມີອາຍຸດຳເນີນງານ 5 ປີ.
2) ການເລືອກຕັ້ງສະພາແຫ່ງຊາດຊຸດໃໝ່ຕ້ອງໃຫ້ແລ້ວຢ່າງຊ້າ 60 ວັນ ກ່ອນສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸ.
3) ສາມາຊິກສະພາແຫ່ງຊາດແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍ.
4) ຜູ້ລົງສະໝັກເລືອກຕັ້ງເປັນສາມະຊິກສະພາແຫ່ງຊາດນັ້ນ ແມ່ນຕົວແທນຂອງທ້ອງຖິ່ນໂດຍບໍ່ຈຳແນກເຜົ່າ ແລະ ເພດ.
5) ພົນລະເມືອງລາວຜູ້ມີອາຍຸ 18 ປີ ຂຶ້ນໄປມີສິດເສລີພາບໃນການລົງຂະແນນສຽງປ່ອນບັດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ.
6) ໜ່ວຍປ້ອນເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດໄດ້ຈັດຢູ່ທຸກເຂດ, ແຂວງ ແລະ ດຳເນີນການປ່ອນບັດເປັນເອກະພາບໃນທົ່ວປະເທດເວລາດຽວກັນ.
7) ການປ່ອນບັດດຳເນີນໄປບົນພື້ນຖານແຫ່ງຄວາມສະເໝີພາບ ແລະ ນຳໃຊ້ສິດເປັນເຈົ້າ ຕົນເອງ

**ຄຳຖາມ:**

1) ສະພາແຫ່ງຊາດ( ອົງການນິຕິບັນຍັດ)ມີຄວາມໝາຍແນວໃດ?
2) ສິດແລະໜ້າທີ່ຂອງສະພາແຫ່ງຊາດມີຫັຍງແດ່?
3) ສະພາແຫ່ງຊາດມີໂຄງປະກອບການຈັດຕັ້ງແນວໃດ?
4) ການເລືອກຕັ້ງສາມະຊິກສະພາແຫ່ງຊາດດຳເນີນແນວໃດ?

# ໂຄງປະກອບອົງການປົກປ້ອງກົດໝາຍແຫ່ງ ສ ປ ປ ລາວ



# ບົດທີ 10
# ອົງການບໍລິຫານ

## 1. ຄວາມໝາຍຂອງອົງການບໍລິຫານ

ອົງການບໍລິຫານໝາຍເຖິງ ອົງການອຳນາດໃນການບໍລິຫານປະເທດ ເຊິ່ງປະກອບມີບັນດາປະທານປະເທດເປັນປະມຸກແຫ່ງລັດ ສ ປ ປ ລາວ ທັງເປັນອົງການບໍລິຫານສູງສຸດ ແລະ ມີຄະນະລັດຖະບານໂດຍມີນາຍົກລັດຖະມົນຕີເປັນຫົວໜ້າ. ອົງການບໍລິຫານຢູ່ທ້ອງຖິ່ນແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ນາຍບ້ານ.

## 2. ໂຄງປະກອບການຈັດຕັ້ງ ແລະ ດຳເນີນງານຂອງອົງການ ບໍລິຫານ

1) ປະທານປະເທດມີອາຍຸການບໍລິຫານງານ ສະໄໝລະ 5 ປີ.
2) ລັດຖະບານມີນາຍົກລັດຖະມົນຕີເປັນຫົວໜ້າຄະນະລັດຖະບານ, ສາມະຊິກລັດຖະບານປະກອບດ້ວຍລັດຖະມົນຕີວ່າການກະຊວງຕ່າງໆ ແລະ ປະທານຂອງຄະນະກຳມະການທຽບເທົ່າລັດຖະບານ, ມີອາຍຸການສະໄໝລະ 5 ປີ.

## 3. ອົງການປົກຄອງທ້ອງຖິ່ນ

1) ຂັ້ນແຂວງ ຫຼື ນະຄອນຫຼວງມີເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ,ມີຮອງເຈົ້າແຂວງ ແລະ ຮອງເຈົ້າຄອງນະຄອນຫຼວງ.
2) ຂັ້ນເມືອງມີເຈົ້າເມືອງ ແລະ ຮອງເຈົ້າເມືອງ.
3) ຂັ້ນບ້ານມີນາຍບ້ານ ແລະ ຮອງນາຍບ້ານ.

## ໂຄງປະກອບການຈັດຕັ້ງຂອງອຳນາດການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ



## ຄຳຖາມ

1) ອົງການບໍລິຫານແມ່ນຫັຍງ?
2) ໂຄງປະກອບອຳນາດການການຈັດຕັ້ງແລະດຳເນີນງານຂອງອົງການ ບໍລິຫານມີແນວໃດແດ່?
3) ອົງການປົກຄອງທ້ອງຖິ່ນແຫ່ງ ສປປລາວ ມີແນວໃດ?

## ແບບຝຶກຫັດ

### ກ. ແບບອັດຕະໄນ

1) ປະທານປະເທດສປປລ ຄົນປະຈຸບັນຊື່ວ່າແນວໃດ?
2) ນາຍົກລັດຖະມົນຕີຄົນປະຈຸບັນຊື່ວ່າແນວໃດ?
3) ເຈົ້າຄອງນະຄອນຫຼວງວຽງຈັນຄົນປະຈຸບັນຊື່ວ່າແນວໃດ?

### ຂ. ແບບປາລະໄນ

ຈົ່ງເລືອກເອົາຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້ໂດຍໃຊ້ເຄື່ອງໝາຍ √ ໃສ່ຮູບສີ່ລ່ຽມ?☐

1) ແມ່ນໃຜເປັນຫົວໜ້າລັດຖະບານຂອງ ສປປ ລາວ?
   - ☐ ປະທານປະເທດ
   - ☐ ປະທານຄະນະກຳມະການທຽບເທົ່າ
   - ☐ ນາຍົກລັດຖະມົນຕີ
2) ປະທານປະເທດມີອາຍຸການບໍລິຫານງານ ສະໄໝລະຈັກປີ?
   - ☐ 3 ປີ
   - ☐ 5 ປີ
   - ☐ 7 ປີ
3) **ຫົວໜ້າອົງການທ້ອງຖິ່ນຂັ້ນເມືອງແມ່ນໃຜ?**
   - ☐ ເຈົ້າແຂວງ
   - ☐ ເຈົ້າເມືອງ
   - ☐ ເຈົ້າຄອງນະຄອນຫຼວງ.

# ບົດທີ 11

# ອົງການສານປະຊາຊົນສູງສຸດ

## 1. ຄວາມໝາຍຂອງສານປະຊາຊົນສູງສຸດ

ສານປະຊາຊົນແມ່ນອົງການພິພາກສາຂອງລັດມີພາລະບົດບາດດຳເນີນການພິພາກສາຄະດີແນໃສ່ສຶກສາອົບຮົມພົນລະເມືອງໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ ປົກປັກຮັກສາ ແລະເສີມຂະຫຍາຍໝາກຜົນຂອງການປະຕິບັດລະບອບການເມືອງ,ເສດຖະກິດ,ວັດທະນະທຳ-ສັງຄົມ, ອົງການຈັດຕັ້ງຕ່າງໆ, ປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມຍຸດຕິທຳ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## 2.ສິດແລະໜ້າທີ່ຂອງສານປະຊາຊົນ

1) ພິຈາລະນາຕັດສິນຄະດີ, ສຶກສາອົບຮົມ,ລົງໂທດຜູ້ລະເມີດກົດໝາຍ.
2) ຊອກຫາ,ກຳຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ເກີດການກະທຳຜິດ.
3) ຍົກລະດັບຄວາມຮູ້ທາງດ້ານການເມືອງ, ສະຕິເຄົາລົບ ແລະ ປະຕິບັດກົດໝາຍທາງລະບຽບວິໄນແຫ່ງລັດ, ລະບຽບການດຳລົງຊີວິດຂອງສັງຄົມຂອງພົນລະເມືອງໃຫ້ສູງຂຶ້ນ.
4) ປະສານສົມທົບກັບອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ, ພົວພັນແລະຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸດຕິທຳ ແລະ ກົດໝາຍ.

## 3.ຂັ້ນພິຈາລະນາຕັດສິນຂອງສານ

1) ຂັ້ນຕົ້ນ.
2) ຂັ້ນອຸທອນ.
3) ຂັ້ນລົບລ້າງ.

## 4.ລະບົບສານປະຊາຊົນ

1) ສານປະຊາຊົນສູງສຸດ.
2) ສານປະຊາຊົນທ້ອງຖິ່ນ, ສານປະຊາຊົນແຂວງ, ນະຄອນຫຼວງ ແລະ ເມືອງ.
3) ສານທະຫານ.

### ຄຳຖາມ

1) ສານປະຊາຊົນມີສິດແລະໜ້າທີ່ຄືແນວໃດ?
2) ຂັ້ນພິຈາລະນາຂອງສານມີຄືແນວໃດ?
3) ລະບົບສານປະຊາຊົນມີຄືແນວໃດແດ່?

# ບົດທີ 12
# ອົງການໄອຍະການປະຊາຊົນສູງສຸດ

## 1. ຄວາມໝາຍ

ອົງການໄອຍະການປະຊາຊົນສູງສຸດແມ່ນ: ອົງການອຳນາດຂອງລັດ ມີພາລະບົດບາດຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຂອງທຸກອົງການ ແລະ ບຸກຄົນ.

## 2. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ

1) ຕິດຕາມກວດກາທົ່ວໄປ.
2) ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ - ສອບສວນ.
3) ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ແລະ ການປະຕິບັດຄຳຕັດສິນຂອງສານ.
4) ຕິດຕາມກວດກາການປະຕິບັດກົດໝານໃນສະຖານທີ່ກັກຕົວ,ສະຖານທີ່ກັກຂັງ,ສູນດັດສ້າງ ແລະ ມາດຕະການບັງຄັບອື່ນໆຂອງສານ.
5) ຄົ້ນຄ້ວາສະເໜີໃຫ້ອະໄພຍະໂທດແກ່ນັກໂທດ.
6) ດຳເນີນການຕ້ານອາດຊະຍາກຳ ແລະ ການລະເມີດກົດໝາຍອື່ນໆ ເພື່ອກຳຈັດ ແລະ ສະກັດກັ້ນການກະທຳຜິດ.
7) ຮັບປະກັນການສືບສວນສອບສວນຄະດີອາຍາໃຫ້ຄົບຖ້ວນຮອບດ້ານ, ພາວະວິໄສ ແລະ ວາງມາດຕະການສະກັດກັ້ນການກະທຳຜິດ.
8) ຮັບປະກັນໃຫ້ຜູ້ກະທຳຜິດຕ້ອງໄດ້ຮັບໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ທີ່ບໍ່ໄດ້ກະທຳຜິດຖືກລົງໂທດ.
9) ດຳເນີນການສືບສວນ - ສອບສວນຄະດີໃດໜຶ່ງບາງສ່ວນ ຫຼື ທັງໝົດທີ່ຕົກລົງຢູ່ໃນສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍທີ່ໄດ້ກຳນົດໄວ້.
10) ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ກົດໝາຍໄດ້ກຳນົດໄວ້.

## 3. ໂຄງປະກອບຂອງລະບົບອົງການໄອຍະການປະຊາຊົນ

1) ອົງການໄອຍະການປະຊາຊົນແຫ່ງ ສປປ ລາວ.
2) ອົງການໄອຍະການປະຊາຊົນແຂວງ ແລະ ນະຄອນຫຼວງ.
3) ອົງການໄອຍະການປະຊາຊົນເມືອງ.
4) ອົງການໄອຍະການທະຫານ

ຄຳຖາມ:

1) **ອົງການໄອຍະການປະຊາຊົນສູງສູດແມ່ນອົງການໃດ?**
2) **ອົງການໄອຍະການປະຊາຊົນມີສິດແລະໜ້າທີ່ຫຍັງແດ່?**

ແບບປາລະໄນ:

3) **ລະບົບອົງການໄອຍະການປະຊາຊົນປະກອບມີຫຍັງແດ່?**

☐ ອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ແຂວງ, ເມືອງ, ທະຫານ.
☐ ອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ນະຄອນຫຼວງ , ທະຫານ.
☐ ອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ເມືອງ, ທະຫານ.

# ບົດທີ 13
# ລັດຖະທຳມະນູນແຫ່ງ ສ ປ ປ ລາວ

## 1. ຄວາມໝາຍຂອງລັດຖະທຳມະນູນ

ລັດຖະທຳມະນູນໝາຍເຖິງກົດໝາຍພື້ນຖານຂອງລັດເຊິ່ງກຳນົດຈະແຈ້ງລະບອບການເມືອງ, ເສດຖະກິດ,ສັງຄົມ,ສິດແລະພັນທະຂອງພົນລະເມືອງ,ຫຼັກການຈັດຕັ້ງ ແລະ ເຄື່ອນໄຫວຂອງລະບົບກົງຈັກການປົກຄອງຂອງລັດ.

## 2. ປະເພດຂອງລັດຖະທຳມະນູນ

ລັດຖະທຳມະນູນມີ 2 ປະເພດຄື:

2.1. ລັດຖະທຳມະນູນທີ່ສະແດງອອກເປັນລາຍລັກອັກສອນ:ໄດ້ແກ່ລັດຖະທຳມະນູນຂອງ ສປປລາວ ທີ່ສະພາແຫ່ງຊາດຮັບຮອງເອົາແລ້ວແລະໄດ້ປະກາດໃຊ້ ແຕ່ ວັນທີ່ 15 ສິງຫາ (8) ປີ 1991

2.2. ລັດຖະທຳມະນູນທີ່ເປັນມູນເຊື້ອຮີດຄອງປະເພນີ ໄດ້ແກ່ແບບແຜນການດຳລົງຊີວິດທາງວັດທະນະທຳເຊັ່ນ: ການນຸ່ງຖື, ການແຕ່ງກາຍ, ການສ້າງຄອບຄົວ, ການທຳມາຫາກິນ, ການພົວພັນທາງສັງຄົມ ແລະ ອື່ນໆ.

## 3. ຈຸດໝາຍຂອງລັດຖະທຳມະນູນ

ລັດຖະທຳມະນູນ ສ ປ ປ ລາວ ມີຈຸດໝາຍປົກປັກຮັກສາ ແລະ ປັບປຸງໝາກຜົນຂອງລະບອບປະຊາທິປະໄຕປະຊາຊົນລາວ ເຮັດໃຫ້ພື້ນຖານໜັກແໜ້ນ ແລະ ເຂັ້ມແຂງໃນທຸກດ້ານ (ເສດຖະກິດ, ການເມືອງ, ວັດທະນະທຳ-ສັງຄົມ). ໃນໄລຍະໃໝ່ນີ້ລັດຖະທຳມະນູນໄດ້ເປັນບ່ອນອີງອັນສຳຄັນໃຫ້ແກ່ການສ້າງບັນດາປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມໃນອະນາຄົດ.

## ຄຳຖາມ

1) ລັດຖະທຳມະນູນມີຄວາມໝາຍແນວໃດ?
2) ລັດຖະທຳມະນູນແຫ່ງ ສປປລາວ ມີຈຸດໝາຍແນວໃດ?
3) ລັດຖະທຳມະນູນແຫ່ງ ສປປລາວ ສະບັບທຳອິດ ໄດ້ປະກາດໃຊ້ໃນວັນທີ່ ,ເດືອນ, ປີໃດ?
4) ລັດຖະທຳມະນູນ ສປປລາວ ມີຈັກປະເພດ ? ຄືປະເພດໃດແດ່?

# ບົດທີ 14
# ອົງການຈັດຕັ້ງແນວລາວສ້າງຊາດ

## 1. ຕົ້ນກຳເນີດ ແລະ ການຂະຫຍາຍຕົວຂອງແນວລາວສ້າງຊາດ

ອົງການຈັດຕັ້ງແນວລາວສ້າງຊາດກຳເນີດແລະຂະຫຍາຍຕົວດັ່ງນີ້:ໃນວັນທີ່ 13 ສິງຫາ ປີ 1550 ກອງປະຊູມໃຫ່ຍ ''ແນວລາວຕໍ່ຕ້ານ '' ທົ່ວປະເທດຄັ້ງທີ່ 1 ໄດ້ໄຂຂຶ້ນ ແລະ ໄດ້ສ້າງຕັ້ງແນວໂຮມເອກະພາບແຫ່ງຊາດທີ່ໃສ່ຊື່ວ່າ "ແນວລາວອິດສະຫຼະ", ມາຮອດວັນທີ່ 6 ມັງກອນ ປີ 1956 ກອງປະຊຸມໃຫ່ຍ "ແນວລາວອິດສະຫຼະ" ໄດ້ໄຂຂື້ນ ແລະ ໄດ້ຕົກລົງປ່ຽນຊື່ "ແນວລາວອິດສະຫຼະ" ມາເປັນ ''ແນວລາວຮັກຊາດ'' . ໃນວັນທີ່ 16 ກູມພາ ປີ 1979 ໄດ້ເປີດກອງປະຊຸມອີກ ແລະ ໄດ້ປ່ຽນຊື່ ''ແນວລາວຮັກຊາດ '' ມາເປັນ ''ແນວລາວສ້າງຊາດ '' ຈົນເຖິງປະຈຸບັນນີ້.

## 2. ຄວາມໝາຍ ແລະ ພາລະບົດບາດຂອງແນວລາວສ້າງຊາດ

### 2.1. ຄວາມໝາຍຂອງແນວລາວສ້າງຊາດ

ແນວລາວສ້າງຊາດແມ່ນອົງການຈັດຕັ້ງແນວໂຮມຮັກຊາດທີ່ເປັນເອກະພາບແຫ່ງຊາດ,ແມ່ນອົງການເຕົ້າໂຮມຄວາມສາມັກຄີລະຫວ່າງຄົນລາວທຸກຊົນເຜົ່າຊັ້ນຄົນ, ສາສະໜາ, ເພດໄວ, ຢູ່ພາຍໃນ ແລະ ຕ່າງປະເທດທີ່ມີນ້ຳໃຈຮັກຊາດ, ຈິງໃຈປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 2.2. ພາລະບົດບາດຂອງແນວລາວສ້າງຊາດ: ແນວລາວສ້າງຊາດມີພາລະບົດບາດຄື:

1) ເຕົ້າໂຮມຄວາມສາມັກຄີຢ່າງກ້ວາງຂວາງຂອງບັນດາກຳລັງຮັກຊາດ,ຮັກລະບອບໃໝ່.
2) ເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນລາວບັນດາເຜົ່າ.
3) ເປັນບ່ອນອີງອັນໜັກແໜ້ນຂອງ ພັກ - ລັດ ໃນການນຳພາຄູ້ມຄອງປະເທດຊາດ.
4) ເພີ່ມທະວີຄວາມສາມັກຄີ, ມິດຕະພາບ ແລະ ການຮ່ວມມືສາກົນ.

## ສະຫຼຸບ:

1) ແນວລາວສ້າງຊາດມີຕົ້ນກຳເນີດ ມາຈາກແນວລາວຕໍ່ຕ້ານ, ແນວລາວອິດສະຫຼະ ແລະ ແນວລາວຮັກຊາດ ໃນເມື່ອກ່ອນ.

2) ແນວລາວສ້າງຊາດມີພາລະໜ້າທີ່ເຕົ້າໂຮມຄວາມສາມັກຄີປວງຊົນລາວບັນດາເຜົ່າໃຫ້ມີຄວາມເປັນເອກະພາບ, ເປັນນ້ຳໜຶ່ງໃຈດຽວກັນ, ສ້າງປະເທດລາວໃຫ້ຮັ່ງມີເຂັ້ມແຂງທາງດ້ານເສດຖະກິດ, ວັດທະນະທຳ ແລະ ກ້າວໜ້າທາງດ້ານສັງຄົມ.

3) ໝາຍຄວາມວ່າແນວລາວສ້າງຊາດຊຸກຍູ້ການປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

## ຄຳຖາມ

1) ແນວລາວສ້າງຊາດມີຕົ້ນກຳເນີ ແລະ ຂະຫຍາຍຕົວຄືແນວໃດ?
2) ແນວລາວສ້າຊາດມີຄວາມໝາຍແນວໃດ?
3) ແນວລາວສ້າງຊາດມີພາລະບົດບາດຄືແນວໃດ?
4) ແນວລາວສ້າຊາດປະຕິບັດ2 ໜ້າທີ່ຍຸດທະສາດທັຍງແດ່?

# ບົດທີ 15
# ອົງການຈັດຕັ້ງກຳມະບານລາວ

## 1. ຕົ້ນກຳເນີດ

ສູນກາງພັກປະຊາຊົນປະຕິບັດລາວມີມະຕິສ້າງຕັ້ງອົງການຈັດຕັ້ງກຳມະບານລາວຂຶ້ນ ໃນວັນທີ 1 ພຶດສະພາ ປີ1956. ໃນວັນທີ່ 16 ທັນວາປີ 1983 ກອງປະຊຸມໃຫ່ຍຄັ້ງທີ່ 1 ຂອງອົງການຈັດຕັ້ງກຳມະບານລາວໄດ້ສຳເລັດ ແລະ ປ່ຽນຊື່ຈາກ "ອົງການກຳມະບານລາວ" ມາເປັນ "ສາຫະພັນກຳມະບານລາວ" ໃນປະຈຸບັນອົງການຈັດຕັ້ງກຳມະບານລາວມີຢູ່ທຸກສຳນັກງານ, ອົງການຂອງລາວ ແລະ ຂະແໜງການຜະລິດຕ່າງໆ.

## 2. ຄວາມໝາຍ ແລະ ຄວາມສຳຄັນຂອງສາຫະພັນກຳມະບານລາວ

### 2.1. ຄວາມໝາຍ:

ເປັນອົງການຈັດຕັ້ງໜຶ່ງໃນລະບົບການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນລາວທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ແມ່ນອົງການຈັດຕັ້ງທີ່ເປັນຕົວແທນຂອງຊົນຊັ້ນກຳມະກອນລາວ.

### 2.2. ຄວາມສຳຄັນ

ຈຸດປະສົງຂອງອົງການຈັດຕັ້ງກຳມະບານລາວແມ່ນເຕົ້າໂຮມຄວາມສາມັກຄີ,ເສີມຂະຫຍາຍປະຊາທິປະໄຕ, ສົ່ງເສີມການມີວຽກເຮັດງານທຳຂອງຊາວຜູ້ອອກແຮງງານ ແລະ ປະຕິບັດຄວາມສະເໝີພາບໃນສັງຄົມ. ສາຫະພັນກຳມະບານລາວປົກປ້ອງຜົນປະໂຫຍດ ແລະ ຈັດຕັ້ງການສຶກສາອົບຮົມຊາວຜູ້ອອກແຮງານ ທັງມີໜ້າທີ່ຕິດຕາມ ແລະ ກວດກາປະຕິບັດນະໂຍບາຍຕ່າງໆທີ່ຕິດພັນກັບບັນຫາ ຜົນປະໂຫຍດຂອງຊາວຜູ້ອອກແຮງງານລາວ.

## 3. ເງື່ອນໄຂແລະມາດຕະຖານຂອງຜູ້ຈະເປັນສາມະຊິກກຳມະບານລາວ

ກຳມະກອນ,ລັດຖະກອນທີ່ເຮັດວຽກທຸກພາກສ່ວນເສດຖະກິດການຜະລິດ,ຂະແໜງການບໍລິຫານ,ວິຊາຊາການແລະການບໍລິການທີ່ມີອາຍຸ 18 ປີຂຶ້ນໄປໂດຍຜ່ານການຝຶກຝົນຫຼໍ່ຫຼອມໃນຂະບວນການ ແລະ ເຫັນດີປະຕິບັດກົດລະບຽບຂອງສາຫະພັນກຳມະບານລາວ, ສະໝັກເຄື່ອນໄຫວ. ຜູ້ທີ່ສະໝັກເຂົ້າເປັນສາມະຊິກ ກຳມະບານລາວຕ້ອງຂຽນໃບຄຳຮ້ອງດ້ວຍຕົນເອງສະເໜີໃຫ້ໜ່ວຍກຳມະບານ ຮາກຖານທີ່ຕົນສັງກັດເພື່ອຄົ້ນຄ້ວາ ແລະ ອະນຸມັດ.

**ຄຳຖາມ**

1. ສາຫະພັນກຳມະບານລາວມີຕົ້ນກຳເນີດ ແລະ ຂະຫຍາຍຕົວຄືແນວໃດ?
2. ສາຫະພັນກຳມະບານລາວມີຄວາມໝາຍ ແລະ ຄວາມສຳຄັນຄືແນວໃດ?

## ຄຳຖາມແບບປາລະໄນ:

**ໃຫ້ທ່ານເລືອກເອົາຄຳຕອບທີ່ຖືກທີ່ສຸດກັບຄຳຖາມຕໍ່ໄປນີ້ໂດຍໃຊ້ເຄື່ອງໝາຍ ( ✓ ) ໃສ່ຫ້ອງ □**

1. ອົງການຈັດຕັ້ງກຳມະບານລາວມີໜ້າທີ່ຄືແນວໃດ?
   1) ປົກປ້ອງຜົນປະໂຫຍດ ແລະ ປະຕິບັດນະໂຍບາຍ.
   2) ປົກປ້ອງຜົນປະໂຫຍດ ແລະ ເຕົ້າໂຮມຄວາມສາມັກຄີ
   3) ປົກປ້ອງຜົນປະໂຫຍດ,ຈັດຕັ້ງການສຶກສາອົບຮົມຊາວຜູ້ອອກແຮງງານແລະຕິດຕາມກວດກາ ປະຕິບັດນະໂຍບາຍຕ່າງໆ.
2. ຜູ້ທີ່ສະມັກເຂົ້າເປັນສາມະຊິກກຳມະບານຕ້ອງມີອາຍຸຈັກປີ?
   1) 15 ປີ ຂຶ້ນໄປ.
   2) 18 ປີ ຂຶ້ນ ໄປ.
   3) 21 ປີ ຂຶ້ນໄປ

# ບົດທີ 16
# ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ

## 1. ຕົ້ນກຳເນີດຂອງຄະນະຊາວໜູ່ມປະຊາຊົນປະຕິວັດລາວ

ວຽກງານຊາວໜຸ່ມເປັນພາກສ່ວນໜຶ່ງທີ່ສຳຄັນໃນຂະບວນວິວັດຂອງປວງຊົນລາວ, ພາຍຫຼັງພັກປະຊາຊົນປະຕິວັດລາວໄດ້ຮັບການສ້າງຕັ້ງຂຶ້ນແລ້ວ, ໃນວັນທີ່14 ເມສາ( 4) ປີ 1955 ຄະນະປະຈຳສູນກາງພັກໄດ້ຕົກລົງສ້າງຕັ້ງ "ສະມະຄົມຊາວໜູ່ມຕະລຸມບອນ" ແລະ ໄດ້ປ່ຽນຊື່ມາເປັນ "ສາມະຄົມຊາວໜຸ່ມລາວຮັກຊາດ" ໃນປີ 1958. ວັນທີ່ 20 ກໍລະກົດ 1972 ໄດ້ປ່ຽນຊື່ມາເປັນ "ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິບັດລາວ "

## 2. ຄວາມໝາຍແລະພາລະບົດບາດຂອງຊາວໜູ່ມປະຊາຊົນປະຕິວັດລາວ

### 2.1.ຄວາມໝາຍ

ຊາວໜູ່ມປະຊາຊົນປະຕິວັດລາວແມ່ນການຈັດຕັ້ງການເມືອງ - ສັງຄົມຂອງໄວໜູ່ມ, ເປັນກຳລັງປະຈັນບານ, ເປັນກຳລັງສຳຮອງທີ່ສຳຄັນ, ເປັນແຂນຂວາ ແລະ ເປັນຜູ້ສືບທອດທີ່ຈົງຮັກພັກດີຕໍ່ອຸດົມຄະຕິ ແລະ ພາລະກິດປ່ຽນແປງໃໝ່ຂອງພັກ, ເປັນກະດູກສັນຫຼັງຂອງປະເທດຊາດ.

### 2.2. ພາລະບົດບາດ

ຊາວໜ່ມູປະຊາຊົນປະຕວັດລາວມີບົດບາດ ແລະ ໜ້າທີ່ສຳຄັນຄື:

1) ສຶກສາອົບຮົມແນວຄິດຊາວໜຸ່ມ, ເຍົາວະຊົນລາວໃຫ້ຮັບຮູ້ ແລະ ເຊື່ອມຊຶມມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງເຍົາວະຊົນລາວ.
2) ປັບປຸງກົງຈັກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນໃຫ້ເຂັ້ມແຂງ ແລະ ມີຄຸນນະພາບແຕ່ສູນກາງລົງຮອດທ້ອງຖິ່ນຮາກຖານ.
3) ປຸກລະດົມຂະບວນການຊາວໜູ່ມປະຕິບັດຄຳຂັວນ " 3 ສາມັກຄີ 4 ບຸກ "

**ສາມສາມັກຄີມີ**:

1) ສາມັກຄີຊາວໜຸ່ມ ແລະ ປະຊາລາວບັນດາເຜົ່າ,
2) ສາມັກຄີພາຍໃນ ສາມະຊິກຊາວໜູ່ມ
3) ສາມັກຄີສາກົນ

**ສີ່ບຸກມີ:**

1) ບຸກເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

2) ບຸກເຂົ້າໃນການພັດທະນາເສດຖະກິດ
3) ບຸກເຂົ້າວຽກງານສຶກສາວັດທະນະທຳ
4) ບຸກເຂົ້າການປັບປຸງການຈັດຕັ້ງຊາວໜຸ່ມ ແລະ ເຢົາວະຊົນໃຫ້ເຂັ້ມແຂງ.

ກອງປະຊຸມໃຫ່ຍຜູ້ແທນທົ່ວປະເທດຄັ້ງທີ່ 5 ຍັງໄດ້ວາງຂໍ້ແຂ່ງຂັນຂອງຊາວໜູ່ມອອກຄື:
( 2 ສາມັກຄີ, 3 ດີ, 4 ພັດທະນາ)

1) 2 ສາມັກຄີ : ສາມັກຄີພາຍໃນ ແລະ ສາມັກຄີພາຍນອກ.
2) 3 ດີແມ່ນ: ເປັນລູກທີ່ດີຂອງພໍ່ແມ່, ເປັນພົນລະເມືອງທີ່ດີຂອງຊາດ,ແລະເປັນຜູ້ສືບທອດທີ່ດີຂອງພັກ.
3) 4 ພັດທະນາຄື: ພັດທະນາຕົນເອງ, ພັດທະນາຄອບຄົວ, ພັດທະນາການຈັດຕັ້ງ, ພັດທະນາປະເທດຊາດ.

## 3. ເງື່ອນໄຂແລະມາດຖານເຂົ້າເປັນສາມະຊິກຊາວໜູ່ມປະຊາຊົນປະຕິວັດລາວ

ຊາວໜຸ່ມທີ່ຖືສັນຊາດລາວທຸກຄົນ ອາຍຸແຕ່15 - 28 ປີ ( ສຳລັບເພດຍິງ) 15 - 30 ປີ ( ສຳລັບເພດຊາຍ) ມີຄວາມສະມັກໃຈ ປະຕິບັດຕາມກົດລະບຽບຂອງ ສປປ ລາວ ເຫັນດີເຫັນພ້ອມນຳໂຄງການ, ການເມືອງ, ແນວທາງຂອງພັກ, ສະໝັກໃຈຕໍ່ສູ້ເພື່ອອຸດົມຄະຕິ, ພາລະກິດຂອງພັກ ແລະ ກົດໝາຍຂອງລັດ ຫ້າວຫັນໃນການຜະລິດ, ການສຶກສາຮ່ຳຮຽນ,ການປະກອບອາຊີບ ແລະ ວຽກງານອື່ນໆ ແມ່ນຮັບເຂົ້າເປັນສາມະຊິກຊາວໜຸ່ມປະຊາຊົນປະຕິວັດລາວ.

**ຄຳຖາມ**

1) ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວກຳເນີດ ແລະ ຂະຫຍາຍຕົວຄືແນວໃດ?
2) ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວມີຄວາມໝາຍ ແລະ ບົດບາດສຳຄັນ ແນວໃດ?
3) ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວສ້າງຕັ້ງຂຶ້ນວັນທີ, ເດືອນ,ປີໃດ ?
4) ຜູ້ທີ່ສະມັກເຂົ້າເປັນສາມະຊິກຊາວໜຸ່ມປະຊາຊົນປະຕິວັດລາວຕ້ອງມີເງື່ອນໄຂແລະມາດຖານໃດແດ່?

# ບົດທີ 17
# ອົງການຈັດຕັ້ງສາຫະພັນແມ່ຍິງລາວ

## 1. ຕົ້ນກຳເນີດຂອງສາຫະພັນແມ່ຍິງລາວ

ສາຫະພັນແມ່ຍິງລາວສ້າງຕັ້ງຂຶ້ນໃນວັນທີ 20 ກໍລະກົດ ປີ 1955 ຢູ່ສະຖານທີ່ແຫ່ງໜຶ່ງຂອງແຂວງ ຫົວພັນ. ໃນເບື້ອງຕົ້ນຊື່ວ່າ " ໜ່ວຍຄົ້ນຄ້ວາຈຸດພິເສດສັງຄົມ ແລະ ຮີດຄອງປະເພນີຂອງລາວ " ໃນປີ 1965 ໄດ້ປ່ຽນຊື່ມາເປັນ "ສາມະຄົມແມ່ຍິງລາວຮັກຊາດ" ກອງປະຊຸມໃຫ່ຍຄັ້ງທຳອິດຂອງແມ່ຍິງລາວ ທົ່ວປະເທດເມື່ອປີ 1984 ໄດ້ປ່ຽນຊື່ມາເປັນ "ສາຫະພັນແມ່ຍິງລາວ " ແລະ ຂຽນຊື່ຫຍໍ້ວ່າ: "ສຍລ"

## 2. ຄວາມໝາຍ ແລະ ພາລະບົດບາດ:

ສາຫະພັນແມ່ຍິງລາວແມ່ນອົງການຈັດຕັ້ງມະຫາຊົນຂອງແມ່ຍິງລາວ ເປັນອົງການເຕົ້າໂຮມຄວາມ ສາມັກຄີແມ່ຍິງລາວບັນດາເຜົ່າ, ບັນດາຊັ້ນຄົນ, ສຶກສາອົບຮົມແມ່ຍິງລາວໃຫ້ເຊື່ອມຊືມແນວທາງນະ ໂຍບາຍຂອງພັກ ແລະ ລັດ ທັງເປັນຕົວແທນແຫ່ງສິດຜົນປະໂຫຍດອັນເປັນທຳຂອງແມ່ຍິງ ແລະ ເດັກນ້ອຍລາວ.

## 3. ເງື່ອນໄຂ ແລະ ມາດຖານເຂົ້າເປັນສາມະຊິກສາຫະພັນແມ່ຍິງລາວ

ແມ່ຍິງລາວບັນດາເຜົ່າ ແລະ ຊັ້ນຄົນຢູ່ພາຍໃນແລະຕ່າງປະເທດ (ນັບທັງຜູ້ຕັດສັນຊາດອື່ນມາເປັນ ສັນຊາດລາວ) ມີອາຍຸ 18 ປີ ຂຶ້ນໄປມີຄວາມຫ້າວຫັນ, ເຫັນດີປະຕິບັດກົດລະບຽບຂອງສາຫະພັນ ແມ່ຍິງລາວ, ມີຄວາມສະໝັກໃຈເຂົ້າຮ່ວມດຳເນີນຊີວິດຢູ່ໃນການຈັດຕັ້ງຂອງສາຫະພັນແມ່ຍິງລາວ. ສະຫະພັນແມ່ຍິງລາວ ມີໜ້າທີ່ສຶກສາອົບຮົມໃຫ້ແມ່ຍິງລາວບັນດາເຜົ່າປະຕິບັດຄຳຂວັນ 3 ດີຄື: ພົນລະເມືອງດີ, ພັດທະນາດີ ແລະ ການພັດທະນາຄອບຄົວວັດທະນະທຳດີ.

ຄຳຖາມ:

1) ອົງການຈັດຕັ້ງແມ່ຍິງລາວມີຕົ້ນກຳເນີດແລະຂະຫຍາຍຕົວຄືແນວໃດ?
2) ຜູ້ສະໝັກເຂົ້າເປັນສະມາຊິກສະຫະພັນແມ່ຍິງລາວຕ້ອງມີເງື່ອນໄຂແລະມາດຖານໃດແດ່?
3) ອົງການຈັດຕັ້ງສະຫະພັນແມ່ຍິງລາວສ້າງຕັ້ງຂຶ້ນໃນວັນທີ່ ເດືອນ ປີ ໃດ?
4) ສະຫະພັນແມ່ຍິງລາວມີພາລະບົດບາດຫຍັງແດ່?

# ບົດທີ18
# ການພົວພັນສາກົນ

## 1. ຄວາມສຳຄັນຂອງນະໂຍບາຍການຕ່າງປະເທດ

ພັກ - ລັດ ສ ປ ປ ລ ເວລາໃດກໍຖືນະໂຍບາບຕ່າງປະເທດແມ່ນໜຶ່ງໃນນະໂຍບາຍອັນສຳຄັນເພື່ອ:

1) ຍາດແຍ່ງເອົາການສະໜັບສະໜູນ ທາງດ້ານການເມືອງ ແລະ ການຊ່ວຍເຫຼືອທາງດ້ານເສດຖະກິດ, ການເງິນຈາກສາກົນໃຫ້ນັບມື້ນັບຫຼາຍ ພ້ອມທັງສ້າງທ່າແຮງໃຫ້ຕົນຢູ່ພາຍໃນປະເທດເຄື່ອນໄຫວ ຍົກຖານະບົດບາດຂອງຊາດລາວໃຫ້ສູງຂຶ້ນໃນເວທີສາກົນ.

2) ພັກເຮົາ ຍຶດໝັ້ນຫຼັກການ ແລະ ທັດສະນະພື້ນຖານເຊິ່ງມີລັກສະນະຕັດສິນຊາຕາກຳຂອງຊາດລາວຄື:ເຊີດຊູຄັນທຸງເອກະລາດ, ເປັນເຈົ້າຕົນເອງ ແລະ ສັນຕິພາບຢູ່ສະເໝີ, ສົມທົບກຳລັງແຮງຂອງຊາດກັບກຳລັງແຮງຂອງຍຸກສະໄໝ, ສົມທົບລັດທິຮັກຊາດອັນແທ້ຈິງກັບລັດທິສາກົນສັງຄົມນິຍົມ.

3) ພັກ - ລັດ ໄດ້ສືບຕໍ່ຍຶດໝັ້ນນະໂຍບາຍການຕ່າງປະເທດຢ່າງສະເໝີຕົ້ນ ສະເໝີປາຍຄື:ຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ ,ມິດຕະພາບ ແລະ ການຮ່ວມມືກັບນາໆປະເທດບົນຫຼັກການເຄົາລົບເອກະລາດ , ອະທິປະໄຕ ແລະ ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນແລະກັນ, ສະເໝີພາບຕ່າງຝ່າຍ ຕ່າງມີຜົນປະໂຫຍດ ແລະຢູ່ຮ່ວມກັນໂດຍສັນຕິໂດຍບໍ່ຈຳແນກ ລະບອບການເມືອງ.

## 2. ການຈັດຕັ້ງປະຕິບັດແນວທາງການຕ່າງປະເທດ

ຕາມໂຄງການຂອງລັດຖະບານ ສ ປ ປ ລາວ ສະບັບປີ 1975 ວ່າດ້ວຍວຽກງານການຕ່າງປະເທດ: ໄດ້ລະບຸໄວ້ວ່າ: ສ້າງຕັ້ງ, ເພີ່ມທະວີ, ການພົວພັນທີ່ດີ ລະຫ່ວາງປະເທດລາວກັບບັນດາປະເທດໃນໂລກ, ສືບຕໍ່ການພົວພັນການທູດອັນເປັນປົກກະຕິກັບທຸກປະເທດ ໂດຍບໍ່ຈຳແນກລະບອບການເມືອງ ສັງຄົມແຕກຕ່າງກັນ ບົນພື້ນຖານຂອງການຢູ່ຮ່ວມກັນໂດຍສັນຕິຄື:

1) ເຄົາລົບອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ.

2) ບໍ່ຮຸກຮານກັນ.

3) ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ.

4) ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

5) ຢູ່ຮ່ວມກັນໂດຍສັນຕິ.

ປີ 1997 ລາວໄດ້ພົວພັນການທູດກັບ 92 ປະເທດໃນໂລກ.

ປີ 1997 ລາວໄດ້ເປັນສາມະຊິກ ຂອງ ກູ່ມອາຊຽນ .

ປີ 2005 ລາວໄດ້ພົວພັນການທູດກັບ 121 ປະເທດ. ມີການມີການຮ່ວມມືກັບທຸກໆອົງການຈັດຕັ້ງສາກົນຂອງສະຫະປະຊາຊາດ ແລະ 63 ອົງການທີ່ບໍສັງກັດລັດຖະບານປະຈຳຢູ່ລາວ.

## 3. ທິດທາງ , ຈຸດໝາຍ ແລະ ໜ້າທີ່ຂອງການພົວພັນຕ່າງປະເທດໃນໄລຍະໃໝ່

### 3.1. ທິດທາງ

1) ພັກໄດ້ສືບຕໍ່ຢຶດໝັ້ນແນວທາງການຕ່າງປະ
   ເທດສັນຕິພາບ,ຮ່ວມມືແບບພິເສດກັບສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (ສ ສ ຫຽດນາມ).
2) ເສີມຂະຫຍາຍຄວາມສາມັກຄີມິດຕະພາບ, ການຮວ່ມມືຮອບດ້ານ, ສະໜັບສະໜູນການຊ່ວຍເຫຼືອກັບສາທາລະນະລັດປະຊາຊົນຈີນ(ສ ປ ຈີນ) ແລະ ບັນດາປະເທດສັງຄົມນິຍົມອື່ນໆ.
3) ເສີມຂະຫຍາຍມິດຕະພາບກັບບັນດາປະເທດໃກ້ຄຽງເປັນສິ່ງສຳຄັນພ້ອມນັ້ນກໍເປີດກ້ວາງການພົວພັນ ຮ່ວມມືກັບປະເທດຕ່າງໆໃນໂລກ ກັບສະຖາບັນການເງິນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.
4) ປະກອບສ່ວນໃນພາລະກິດ ສັນຕິພາບ , ມິດຕະພາບ , ການຮ່ວມມືເພື່ອພັດທະນາຂອງອົງການສະຫະປະຊາຊາດ,ຂອງຂະບວນການບໍ່ຮ່ວມກຸ່ມ ແລະ ບັນດາປະເທດທີ່ໃຊ້ພາສາຝຣັ່ງ.
5) ເປີດກ້ວາງການພົວພັນກັບບັນດາພັກກາອຳນາດ, ພັກການເມືອງແລະ ຂະບວນການຕ່າງໆ

### 3.2. ຈຸດໝາຍ

ສ້າງສະພາບແວດລ້ອມພາຍນອກທີ່ອຳນວຍຄວາມສະດວກໃຫ້ແກ່ການສືບຕໍ່ພາລະກິດປ່ຽນແປງໃໝ່, ເສີມຂະຫຍາຍພາບພົດອັນດີງາມ,ເຊີດຊູບົດບາດ.ຂອງ ສ ປ ປ ລາວ ໃນເວທີສາກົນ, ຍາດແຍ່ງຄວາມເປັນມິດໄມຕີ, ການຊ່ວຍເຫຼືອ, ການຮ່ວມມືຈາກພາຍໃນປະເທດແລະເພື່ອ່ມິດສາກົນ.

## ຄຳຖາມ

1) ນະໂຍບາຍການຕ່າງປະເທດສ ປ ປ ລາວມີຄວາມໝາຍສຳຄັນແນວໃດ?
2) ຫຼັກການຢູ່ຮ່ວມກັນໂດຍສັນຕິມີຈັກຫຼັກການ ? ຄືຫຼັກການໃດແດ່?
3) ທິດທາງ,ຈຸດໝາຍ,ໜ້າທີ່ຂອງການພົວພັນຕ່າງປະເທດໃນໄລຍະໃໝ່ຂອງສປປລາວມີແນວໃດ?

## ຄຳຖາມແບບປາລະໄນ:

ຈົ່ງເລືອກເອົາຄຳຕອບທີ່ທ່ານເຫັນວ່າຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້ໂດຍຕື່ມເຄື່ອງໝາຍ( ✓) ໃສ່ຕໍ່ໜ້າຄຳຕອບໃນຮູບ 4 ລ່ຽມ ☐

1) ສ ປ ປ ລາວໄດ້ເຂົ້າເປັນກຸ່ມອາຊຽນໃນປີໃດ?
   - ☐ ປີ 1975
   - ☐ ປີ 1997
   - ☐ ປີ 2005
2) ສປປລາວ ຮ່ວມມືແບບພິເສດກັບປະເທດໃດແດ່?
   - ☐ ສ ປ ປ ຈີນ
   - ☐ ສ ສ ຫວຽດນາມ
   - ☐ ກຳ ປູ ເຈຍ.
3) ໃນປີ 2005 ສປ ປ ລາວ ໄດ້ພົວພັນການທູດກັບຈັກປະເທດ?
   - ☐ 63 ປະເທດ.
   - ☐ 92 ປະເທດ.
   - ☐ 121 ປະເທດ .

# ພາກທີ IV
# ກົດໝາຍຂອງ ສ. ປ. ປ ລາວ

## ບົດທີ19
## ກົດໝາຍຄອບຄົວ (ການສືບທອດມູນມໍລະດົກ)

### ການສືບທອດມູນມໍລະດົກແມ່ນ:

ການສືບທອດມູນມໍລະດົກແມ່ນການຕົກທອດສັບສິນບັດ, ສິດ ແລະ ພັນທະຂອງຜູ້ເສຍຊີວິດໃຫ້ແກ່ຜູ້ມີສິດ ສືບທອດມູນມໍລະດົກຕາມກົດໝາຍ ຫຼື ຕາມພິໄນກຳ.

### 1. ຜູ້ສືບທອດມູນມໍລະດົກ

ຜູ້ສືບທອດມູນມໍລະດົກມີ: ລູກ( ລູກຄີງ, ລູກລ້ຽງ, ລູກນ້າ), ຜົວ ຫຼື ເມຍຂອງເຈົ້າມູນມໍລະດົກທີ່ມີຊີວິດຢູ່, ຖ້າວ່າ ເຈົ້າມູນມໍລະດົກຫາກບໍ່ມີລູກ, ບໍ່ມີຜົວ ຫຼື ເມຍແລ້ວພີ່ນ້ອງຂອງເຈົ້າມູນມໍລະດົກນັ້ນກໍ່ມີສິດສືບທອດມູນມໍລະດົກຕາມລຳດັບດັ່ງຕໍ່ໄປນີ້:

1) ຍາດສາຍຕັ້ງ: ພໍ່ ແມ່, ປູ່ ຍ່າ , ພໍ່ເຖົ້າ, ແມ່ເຖົ້າ ຫຼື ທວດ.
2) ຍາດພີ່ນ້ອງສາຍຂວາງ: ອ້າຍ ,ເອື້ອຍ, ນ້ອງ, ລູງ ,ປ້າ ,ອາວ ,ອາ, ນ້າບ່າວ ນ້າສາວ,ຫຼານ.
3) ລັດ ຫຼື ນິຕິບຸກຄົນ, ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນກົດໝານສະບັບນີ້

### 2. ຜູ້ເສຍສິດສືບທອດມູນມໍລະດົກ

ຜູ້ເສຍສິດສືບທອດມູນມໍລະດົກ ຕາມກົດໝາຍ ຫຼື ພິໃນກຳມີດັ່ງນີ້:

1) ຜູ້ຖືກສານຕັດສິນ, ມີເຈຕະນາ ຫຼື ພະຍາຍາມເຮັດໃຫ້ຜູ້ມີສິດສືບທອດມູນມໍລະດົກ ຜູ້ໃດຜູ້ໜຶ່ງເສຍຊີວິດ, ບາດເຈັບສາຫັດ, ເພື່ອຍາດຊີງເອົາມູນມໍລະດົກ.
2) ຜູ້ທີ່ໄດ້ທຳລາຍ, ປິດບັງ ປອມແປງ ພິໄນກຳທັງໝົດ ຫຼື ບາງສ່ວນ.
3) ຜູ້ທີ່ຢູ່ແຂວງ , ເມືອງດຽວກັນກັບຜູ້ເສຍຊີວິດ ເມື່ອຮູ້ຂ່າວການເສຍຊີວິດແລ້ວ ແຕ່ບໍ່ໄດ້ມາມ້ຽນສົບ , ບໍ່ໄດ້ມອບໝາຍໃຫ້ຄົນອື່ນມາແທນຕົນ ໂດຍບໍ່ມີເຫດຜົນ.
4) ຜູ້ທີ່ຂົ່ມຂູ່ເຈົ້າມູນມໍລະດົກ ເຮັດໃຫ້ຖອນ ແລະ ປ່ຽນແປງ ພິໄນກຳທັງໝົດ ແລະສ່ວນໜຶ່ງ.
5) ຜູ້ທີ່ໄດ້ປິດບັງ, ຊຸກເຊື່ອງຜູ້ກະທຳຜິດຕໍ່ຊີວິດ ຫຼື ສຸຂະພາບຂອງເຈົ້າມູນມໍລະດົກເຊິ່ງໄດ້ຮັບບາດເຈັບສາຫັດ ຫຼື ເສຍອົງຄະ
6) ຜູ້ທີ່ຖືກສານຕັດສິນທີ່ຫາຄວາມບໍ່ຈິງໃສ່ເຈົ້າມູນມໍລະດົກ, ຫຼື ຜູ້ມີສິດສືບທອດມູນມໍລະດົກດ້ວຍກັນ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ ( 152) ຂອງກົດໝາຍອາຍາ.

ບຸກຄົນທີ່ກ່າວມາເທິງນີ້: ຈະເສຍສິດ ສືບທອດມູນມໍລະດົກກໍ່ຕໍ່ເມື່ອໄດ້ສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນ, ເວັ້ນເສຍແຕ່ເຈົ້າມໍລະດົກຫາກໄດ້ເສຍຊີວິດ ຕາມທີ່ໄດ້ບົງໄວ້ ໃນ 1, 2, 3, ແລະ 5 ຂອງມາດຕານີ້.

ເຈົ້າມູນມໍລະດົກອາດລຶບລ້າງການເສຍສິດ ດັ່ງກ່າວນັ້ນກໍ່ໄດ້ແຕ່ຕ້ອງສະແດງ ເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເຊັ່ນດຽວກັນ.

## ຄຳຖາມ

1) ການສືບທອດມູນມໍລະດົກແມ່ນຫຍັງ?
2) ຜູ້ທີ່ມີສິດສືບທອດມູນມໍລະດົກຕາມທີ່ກົດໝາຍລະບຸໄວ້ຈະຕ້ອງມີເງື່ອນໄຂແນວໃດແດ່?
3) ເງື່ອນໄຂຜູ້ເສຍສິດສືບທອດມູນມໍລະດົກຕາມກົດໝາຍ ຫຼື ພິໄນກຳນັ້ນມີແນວໃດແດ່?

## ຄຳຖາມ( ແບບປາລະໄນ)

ໃຫ້ຜູ້ຮຽນເລືອກເອົາຄຳຕອບທີ່ຖືກທີ່ສຸດກັບຄຳຖາມແລ້ວຕື່ມເຄື່ອງໝາຍ ✓ ໃສ່ຕໍ່ໜ້າຂໍ້ຂອງຄຳຕອບລຸ່ມນີ້:

1) ຜູ້ສືບທອດມູນມໍລະດົກສາຍຕັ້ງມີໃຜແດ່?
   ກ. ພໍ່ , ແມ່ , ລູກ, ຜົວ, ເມຍ.
   ຂ. ພໍ່ , ແມ່, ລູກ, ອ້າຍ, ເອື້ອຍ,ນ້ອງ
   ຄ. ພໍ່, ແມ່, ປູ່,ຍ່າ,ພໍ່ເຖົ້າ, ແມ່ເຖົ້າ, ຫຼື ທວດ.

2) ຜູ້ສືບທອດມູນມໍລະດົກຄົນໃດຄົນໜຶ່ງຫາກຂົ່ມຂູ່ເຈົ້າມູນມໍລະດົກໃຫ້ເຮັດ, ຖອນ, ປ່ຽນແປງພິໃນກຳທັງໝົດຫຼື ສ່ວນໃດ ສ່ວນໜຶ່ງຜູ້ນັ້ນຈະເປັນ:
   ກ. ຜູ້ສືບທອດມູນມໍລະດົກ.
   ຂ. ຜູ້ເສຍສິດສືບທອດມູນມໍລະດົກ.
   ຄ. ຜູ້ຮັບ ຫຼື ອາດຈະໄດ້ສະລະມູນມໍລະດົກ.

# ບົດທີ 20
# ກົດໝາຍວ່າດ້ວຍການປົກປ້ອງແມ່ຍິງ ແລະ ເດັກນ້ອຍ

## 1. ການສະກັດກັ້ນ ແລະ ຕ້ານການຄ້າ ແມ່ຍິງ ແລະ ເດັກນ້ອຍ

### 1.1. ການຄ້າແມ່ຍິງ ແລະ ເດັກນ້ອຍ

ການຄ້າແມ່ຍິງ ແລະ ເດັກນ້ອຍແມ່ນການຊອກຫາ, ການໃຫ້ບ່ອນລີ້ຊ່ອນ, ການນຳສົ່ງ ຫຼື ການຮັບເອົາແມ່ຍິງຢູ່ພາຍໃນ ແລະ ຕ່າງປະເທດ ດ້ວຍການຕົວະຍົວະ ຫຼອກລວງ, ຂົ່ມຂູ່, ບັງຄັບ, ການຜູກມັດດ້ວຍໜີ້ສິນ ຫຼື ດ້ວຍຮູບການອື່ນໆ ເພື່ອຈຸດປະສົງຂູດຮີດແຮງງານ, ຄ້າໂສເພນີ, ເຜີຍແຜ່ສິ່ງລາມົກ, ສິ່ງຂັດກັບວັດທະນະທຳຂອງຊາດ, ຕັດອະໄວຍະວະຕ່າງໆຂອງຮ່າງກາຍ ຫຼື ຫາຜົນປະໂຫຍດອື່ນໆ ທີ່ຜິດກົດໝາຍ.

ການກະທຳທີ່ກ່າວມາຂ້າງເທິງນັ້ນຕໍ່ກັບເດັກທີ່ອາຍຸບໍ່ເຖິງ 18 ປີ ກໍຖືວ່າເປັນການຄ້າເດັກນ້ອຍ, ເຖິງບໍ່ໄດ້ຕົວະຍົວະຫຼອກລວງ, ຂົ່ມຂູ່, ບັງຄັບ, ການຜູກມັດດ້ວຍໜີ້ສິນ ຫຼື ດ້ວຍຮູບການອື່ນໆ ເພື່ອຈຸດປະສົງຂູດຮີດແຮງງານກໍ່ຕາມ, ບຸກຄົນໃດໃຫ້ການຮ່ວມມື ດ້ວຍວິທີຕ່າງໆ ເຊັ່ນ: ການໃຫ້ຂໍ້ຄິດເຫັນ, ໃຫ້ຂໍ້ມູນ .... ກໍຖືວ່າເປັນຜູ້ສົມຮູ້ຮ່ວມຄິດການຄ້າແມ່ຍິງ ແລະ ເດັກນ້ອຍ, ເປັນການກະທຳຜິດທາງອາຍາ.

### 1.2. ສິດຂອງຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍ ໝາຍເຖິງຜູ້ໄດ້ຮັບຄວາມເສຍຫາຍໂດຍກົງ ຈາກການຄ້າແມ່ຍິງແລະ ເດັກນ້ອຍ ຜູ້ເຄາະຮ້າຍມີສິດດັ່ງນີ້:

1) ຂໍຄວາມຊ່ວຍເຫຼືອຈາກບຸກຄົນທີ່ຢູ່ໃກ້ຄຽງ
2) ແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ.
3) ໃຫ້ການແລະສະເໜີຫຼັກຖານຕ່າງໆ ທີ່ພົວພັນເຖິງຄະດີຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.
4) ຮ້ອງຂໍຄ່າເສຍຫາຍ ແລະ ໄດ້ຮັບການຟື້ນຟູ ສະພາບຂອງຕົນເອງ ເພື່ອປັບຕົວເຂົ້າສູ່ສັງຄົມ.
5) ໄດ້ຮັບການປົກປ້ອງ ເບິ່ງແຍງເພື່ອຮັບປະກັນຄວາມປອດໄພຂອງຕົນ.
6) ຈະບໍ່ຖືກດຳເນີນຄະດີອາຍາແລະບໍ່ຖືກກັກຂັງໃນສະຖານການກະທຳຜິດ ກ່ຽວກັບການຄ້າແມ່ຍິງ ແລະເດັກນ້ອຍ ເຊັ່ນ: ການເປັນໂສເພນີ, ການເຂົ້າອອກເມືອງຢ່າງຜິດກົດໝາຍ.
7) ບໍ່ໃຫ້ຖ່າຍຮູບ , ບັນທຶກພາບ, ເຜີຍແຜ່ພາບທີ່ຈະພາໃຫ້ເສຍກຽດຊື່ສຽງ.
8) ໄດ້ຮັບການຊວ່ຍເຫຼືອທີ່ເໝາະສົມທາງດ້ານສະຖານທີ່ພັກເຊົາ, ອາຫານ,ເຄື່ອງນຸ່ງຫົ່ມ, ການບໍລິການທາງດ້ານການແພດ, ການຝຶກອົບຮົມວິຊາຊີບ, ການກັບຄືນພູມລຳເນົາແລະອື່ນໆ.
9) ໄດ້ຮັບສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ

## 2. ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກນ້ອຍ, ຄອບຄົວ, ສັງຄົມ

ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກນ້ອຍ ແມ່ນການກະທຳ ຫຼື ການເມີຍເສີຍຂອງບຸກຄົນໃດບຸກຄົນໜຶ່ງໃນຄອບຄົວ ຊຶ່ງສ້າງຜົນກະທົບຕໍ່ຮ່າງກາຍ , ຈິດໃຈ, ຊັບສິນ ຂອງແມ່ຍິງແລະເດັກນ້ອຍໃນຄອບຄົວ.

### ການແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ:

1) ການແກ້ໄຂຕ້ອງເລີ່ມຈາກສາມະຊິກຄອບຄົວ, ພີ່ນ້ອງ, ໜ່ວຍງານຂັ້ນບ້ານ, ບຸກຄົນໃກ້ຄຽງ, ໜ່ວຍງານໃຫ້ຄຳປຶກສາ, ໜ່ວຍໄກ່ເກ່ຍຂັ້ນບ້ານ, ເພື່ອສຶກສາອົບຮົມບົນພື້ນຖານຄວາມສາມັກຄີປອງດອງ, ຖ້າຂັ້ນບ້ານບໍ່ສາມາດໄກ່ເກ່ຍໄດ້ ຜູ້ຕາງໜ້າຂອງຜູ້ກ່ຽວມີສິດໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດ.

2) ການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກນ້ອຍໃນຄອບຄົວ, ເປັນບັນຫາອັນຕະລາຍຕໍ່ສັງຄົມ, ຕໍ່ຄອບຄົວ ພາໃຫ້ຄອບຄົວຂາດຄວາມອົບອຸ່ນ, ແຕກແຍກ, ຕົກເປັນເຫຍື່ອຂອງການຄ້າແມ່ຍິງແລະເດັກນ້ອຍ, ເດັກຕິດຢາ, ເປັນໂສເພນີ...

ດັ່ງນັ້ນ, ອົງການປົກຄອງ, ແນວລາວສ້າງຊາດ, ອົງການຈັດຕັ້ງທຸກຂັ້ນ, ອົງການຈັດຕັ້ງສັງຄົມຕ້ອງເອົາໃຈໃສ່ສຶກສາອົບຮົມເພື່ອໃຫ້ຄອບຄົວມີຄວາມຖືກຕ້ອງປອງດອງກັນ, ປະຕິບັດຄວາມສະເໝີພາບລະຫ່ວາງຍິງ - ຊາຍ, ແນໃສ່ເຮັດໃຫ້ສາຖາບັນຄອບຄົວ ມີຄວາມໝັ້ນທ່ຽງ ມີຄວາມຜາສຸກ ແລະ ກ້າວໜ້າ.

**ຄຳຖາມ**

1) ການຄ້າແມ່ຍິງແລະເດັກນ້ອຍແມ່ນແນວໃດ?
2) ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະເດັກນ້ອຍແມ່ນແນວໃ?
3) ສິດຂອງຜູ້ຖືກເຄາຮ້າຍມີແນວໃດແດ່?

## ຄຳຖາມ ແບບປາລະໄນ

ໃຫ້ນັກຮຽນເລືອກເອົາຄຳຕອບທີ່ເຫັນວ່າຖືກຕ້ອງກັບຄຳຖາມ ✓ ເພື່ອຕອບຄຳຖາມຕໍ່ໄປນີ້:

1) ເມື່ອຖືກເຄາະຮ້າຍຈາກການຄ້າແມ່ຍິງ ແລະ ເດັກນ້ອຍຄວນປະຕິບັດສິດແນວໃດ?
   - ☐ ສູ້ຄືນ ສຸດຄວາມສາມາດ ຫຼື ແລ່ນໜີ.
   - ☐ ໃຫ້ການຮ່ວມມືກັບຜູ້ທີ່ຄ້າແມ່ຍິງ ແລະ ເດັກນ້ອຍໂດຍດີ.
   - ☐ ຂໍຄວາມຊ່ວຍເຫຼືອ ຈາກບຸກຄົນທີ່ຢູ່ໃກ້ຄຽງ, ໃຫ້ການ ແລະ ສະເໜີຫຼັກຖານຕ່າງໆ ທີ່ພົວພັນເຖິງຄະດີຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

2) ເມື່ອຄອບຄົວຫາກແຕກແຍກຈາກບັນຫາຄວາມຮຸນແຮງໃນຄອບຄົວ, ແມ່ຍິງ ແລະ ເດັກນ້ອຍຈະເປັນແນວໃດ?
   - ☐ ມີໂອກາດໄດ້ພັດທະນາຕົນເອງເພື່ອເອົາຊີວິດລອດ.
   - ☐ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ມີຄວາມສີວິໄລກ້າວໜ້າ.
   - ☐ ຕົກເປັນເຫຍື່ອການຄ້າແມ່ຍິງແລະເດັກນ້ອຍ,

3) ການທຳຮ້າຍແມ່ຍິງດ້ວຍວິທີທຸບຕີ , ກັກຂັງ, ຂົ່ມຂືນ, ການກະທຳຊໍາເລົາມີຜົນກະທົບແນວໃດຕໍ່ແມ່ຍິງແລະເດັກນ້ອຍ?
   - ☐ ຜົນກະທົບຕໍ່ຮ່າງກາຍ
   - ☐ ຜົນກະທົບຕໍ່ຈິດໃຈ.
   - ☐ ຜົນກະທົບຕໍ່ຊັບສິນ.
   - ☐ ຖືກທຸກຂໍ້.

# ບົດທີ 21
# ກົດໝາຍແຮງງານ

ກົດໝາຍແມ່ນລະບົບຂໍ້ກຳນົດຂອງລັດທີ່ມີຜົນບັງຄັບໃຊ້ທົ່ວສັງຄົມ, ໃນຖານະເປັນສິ່ງດັດສົມຕົ້ນຕໍຕໍ່ການພົວພັນໃນສັງຄົມແລະພາຫະນະອັນສຳຄັນໃນການຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## 1. ນິຍາມກົດໝາຍແຮງງານ

ກົດໝາຍແຮງງານແມ່ນ: ລະບົບຂໍ້ກຳນົດທີ່ດັດປັບສາຍພົວພັນສັງຄົມ ກ່ຽວກັບການອອກແຮງງານ ແລະ ສາຍພົວພັນອື່ນໆ ກ່ຽວກັບການອອກແຮງງານໃນສັງຄົມ ໃຫ້ກ້າວຂຶ້ນເທື່ອລະກ້າວ ແລະ ເຮັດໃຫ້ຊີວິດການເປັນຢູ່ ຂອງຊາວຜູ້ອອກແຮງງານໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ.

## 2. ຫຼັກການລວມຂອງກົດໝາຍແຮງງານ

1) ຫຼັກການ: ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫ່ວາງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໂດຍບໍ່ຈຳແນກເຊື້ອຊາດ , ຜິວພັນ, ສາສະໜາ ແລະ ຖານະທາງດ້ານການເມືອງ - ສັງຄົມ.
2) ຜູ້ອອກແຮງງານຕ້ອງເຄົາລົບລະບຽບການອອກແຮງງານ, ປະຕິບັດຕາມບັນດາຂໍ້ກຳນົດຂອງການອອກແຮງງານຢ່າງເຄັ່ງຄັດ.
3) ຜູ້ໃຊ້ແຮງງານຕ້ອງຮັບປະກັນຈ່າຍເງິນເດືອນ ຫຼື ຄ່າແຮງງານຢ່າງຍຸດຕິທຳ, ຮັບປະກັນເງື່ອນໄຂການອອກແຮງງານຢ່າງປອດໄພ ແລະ ປະຕິບັດປະກັນສັງຄົມ.
4) ຜູ້ອອກແຮງງານແມ່ນບຸກຄົນທີ່ເຮັດວຽກພາຍໃຕ້ການຄູ້ມຄອງດູແລ ແລະ ການບັນຊາຂອງຜູ້ໃຊ້ແຮງງານ ເພື່ອຮັບປະກັນ ການທົດແທນ ການອອກແຮງງານ ດ້ວຍເງິນ ຫຼື ຄ່າແຮງງານ.
5) ຜູ້ໃຊ້ແຮງງານ ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ ນຳໃຊ້ຜູ້ອອກແຮງງານ ເຮັດວຽກໃຫ້ຕົນໂດຍ ຕ້ອງຈ່າຍເງິນເດືອນ ຫຼື ຄ່າແຮງງານ.

## 3. ອົງປະກອບຂອງສັນຍາແຮງງານ

ອົງປະກອບຂອງສັນຍາແຮງງານມີ 3 ອົງປະກອບຄື:

1) ການມອບວຽກໃຫ້ແກ່ຜູ້ອອກແຮງງານ, ເຮັດວຽກເພື່ອຜົນປະໂຫຍດຂອງຜູ້ໃຊ້ແຮງງານ, ຜູ້ໃຊ້ແຮງງານມອບວຽກໃຫ້ຜູ້ອອກແຮງງານຕ້ອງຈະແຈ້ງຄັກແນ່ , ໜ້າວຽກໃຫ້ສົມດູນກັບລະດັບວິຊາການ, ການປະກອບເຄື່ອງມື, ສະຖານທີ່ເຮັດວຽກ, ເວລາເຂົ້າອອກວຽກ ແລະ ພັກຜ່ອນ.
2) ການຈ່າຍເງິນເດືອນ - ຄ່າແຮງງານ ແລະ ການຮັບປະກັນ ຜົນປະໂຫຍດອື່ນໆ ຕ້ອງການຈ່າຍຄ່າຕອບແທນແທນແຮງງານ ແລະ ຜູ້ໃຊ້ແຮງງານໂດຍກົງ ຈະຈ່າຍດ້ວຍວິທີໃດກໍ່ແລ້ວແຕ່ຄວາມເໝາະສົມ ຕາມລະບຽບກົດໝາຍ.
3) ຜູ້ອອກແຮງງານມີໜ້າທີ່ປະຕິບັດຕາມຄຳສັ່ງຂອງຜູ້ໃຊ້ແຮງານເທົ່ານັ້ນແລະຜູ້ໃຊ້ແຮງານມີໜ້າທີ່ວາງທິດທາງອອກເພື່ອໃຫ້ຜູ້ອອກແຮງງານປະຕິບັດແລະ ກໍ່ຍັງເຮັດການກວດກາຜົນໄດ້ຮັບອີກ.

## 4. ຮູບການ ແລະ ອາຍຸການຂອງສັນຍາແຮງງານ

### 4.1 ຮູບການສັນຍາ

ຮູບການສັນຍາແຮງງານມ2 ຢ່າງຄື:

1) ສັນຍາແຮງານຕ້ອງເປັນລາຍລັກອັກສອນ, ແມ່ນຄວາມຈຳເປັນເພື່ອໃຊ້ເປັນຫຼັກຖານ ແລະເພື່ອຢາກຮູ້ວ່າເນື້ອໃນສັນຍານັ້ນຖືກລະບຸໄວ້ສອດຄ່ອງກັບລະບຽບກົດໝາຍຫຼືບໍ່
2) ສັນຍາແຮງງານທາງປາກເປົ່າ: ອີງຕາມເງື່ອນໄຂຕົວຈິງ ແລະ ລັກສະນະຂອງວຽກງານເຊັ່ນ: ວຽກງານເບົາທີ່ມີບໍລິມາດໜ້ອຍ, ກຳນົດເວລາສັ້ນໆ, ເຮັດວຽກເປັນລາຍວັນ ແລະ ກໍລະນີອື່ນໆ.

### 4.2 ອາຍຸອານຸສັນຍາແຮງງານ

ກົດໝາຍແຮງງານໄດ້ລະບຸວ່າ: "ສັນຍາແຮງງານອາດຈະເຮັດຂຶ້ນໂດຍມີກຳນົດຫຼືບໍ່ມີກຳນົດ ເວລາ"

1) ສັນຍາແຮງງານມີການກຳນົດເວລາ : ອາຍຸຂອງສັນຍາແຮງານ ແມ່ນອີງຕາມ ການຕົກລົງຕົວຈິງເຫັນດີນຳກັນລະຫ່ວາງຜູ້ໃຊ້ແຮງານແລະ ຜູ້ອອກແຮງງານ.

ຈະຖືວ່າສັນຍາແຮງງານມີກຳນົດເວລານັ້ນກໍຕໍ່ເມື່ອ:

- ສັນຍາທີ່ເວົ້າເຖິງເວລາສິ້ນສຸດສັນຍາ.
- ເວົ້າເຖິງວຽກງານໃດໜຶ່ງທີ່ກຳນົດແນ່ນອນ ເມື່ອຫາກວຽກນັ້ນສຳເລັດແລ້ວແມ່ນສັນຍາສິ້ນສຸດ.
- ສັນຍາອີງໃສ່ເຫດການອັນແນ່ນອນໃນອານາຄົດທີ່ຈະເກີດຂຶ້ນແຕ່ເວລາໃດບໍ່ຮູ້, ເມື່ອເຫດການເກີດຂຶ້ນແລ້ວກໍຖືວ່າສິ້ນສຸດສັນຍາ.

2) **ສັນຍາແຮງງານບໍ່ມີກຳນົດເວລາ:**

ສັນຍາແຮງງານບໍ່ໄດ້ເວົ້າເຖິງເວລາສິ້ນສຸດຂອງສັນຍາ, ບໍ່ສະແດງເຖິງສະພາບຂອງຜູ້ອອກແຮງງານບໍ່ໝັ້ນຄົງ ເພາະວ່າ ສັນຍາປະເພດນີ້ ຈະຖືກຍົກເລີກໄດ້ທຸກໆຍາມ ຕາມການສະເໜີ ແລະ ເຫັນດີ ຂອງສອງຝ່າຍ ຫຼື ຝ່າຍໃດຝ່າຍໜຶ່ງທີ່ານັ້ນ

**ບົດຕົວຢ່າງຂອງສັນຍາແຮງງານ:**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານແລະ ສະຫວັດດີການສັງຄົມ
ພະແນກ ຮສສ ນະຄອນຫຼວງວຽງຈັນ ເລກທີ / /

**ສັນຍາແຮງານ**

ມາດຕາ1: ຂໍ້ຕົກລົງທົ່ວໄປ:

ຂ້າພະເຈົ້າຊື່. . . . . . . .... . . . . ອາຍຸ..........................ສັນຊາດ, . . .....................
ໃນນາມຜູ້ໃຊ້ແຮງງານຢູ່ບໍລິສັດ/ໂຮງງານ.................ຕໍາແໜ່ງ...........................................
ຕົກລົງເຮັດສັນຍາແຮງງານກັບທ່ານ........................ອາຍຸ...................ສັນຊາດ,................
ໃນນາມຜູ້ອອກແຮງານເພື່ອເຮັດໜ້າທີ່ວິຊາສະເພາະ..........................................................
ທີ່ຢູ່ມາຈາກ..........................................ຂອບເຂດບ່ອນເຮັດວຽກ...................................

ມາດຕາ2: ພັນທະຂອງຜູ້ໃຊ້ແຮງງານ

1. ປະເພດສັນຍານີ້ ☐ ມີກໍານົດ, ☐ ບໍ່ມີກໍານົດ, ແຕ່ວັນທີ່ / / ລວມ...........ປີ
2. ເງິນຄ່າແຮງານແມ່ນ..........................ຕໍ່ເດືອນ, ຫັກອາກອນລາຍໄດ້ເຂົ້າລັດ..........ເດືອນ
3. ການທົດສອບງານ ☐ບໍ່ທົດສອບ,☐ ທົດສອບ.......ເດືອນ,ໂດຍໃຊ້ຄ່າແຮງງານ....% ຂອງຂໍ້2.
   - ການເບີກຈ່າຍ: ☐ ເປັນເດືອນ ☐ ເປັນຄັ້ງ
   - ວັນທີເບີກຈ່າຍລະຫ່ວາງ ວັນທີ ................... ເດືອນລະ.............ຄັ້ງ, ຫຼື..................
4. ດ້ານສະຫັວດດີການສັງຄົມ, ☐ ມີເງິນອູດໜູນຕ່າງໆ , ☐ ບໍ່ມີ, ຄື...................................
5. ການກໍານົດງານ.........ຊົ່ວໂມງ/ ມື້ , ຈໍານວນ....... ມື້ /ອາທິດ, ເລີ່ມແຕວັນທີ ....... ເຖິງ......
6. ເງິນເພີ່ມໂມງ ມື້ປົກກະຕິກາງເວັນ...........%,ມື້ພັກກາງເວັນ.......%, ກາງຄືນ..........%ຕໍ່ຊມ
7. ຖ້າເຮັດວຽກຄົບ 1 ປີແລ້ວ ຈະໄດ້ພັກປະຈໍາປີ.......ໂດຍບໍ່ຕັດຄ່າແຮງງານ.
8. ມື້ພັກປະຈໍາອາທິດແມ່ນ...........................................................................
9. ວັນພັກທາງການກໍານົດອອກ( ດໍາລັດ) ແລະວັນບູນຕ່າງໆ ☐ ບໍ່ໄດ້ພັກ, ☐ ພັກບໍ່ຕັດເງິນເດືອນ, ☐ ພັກແຕ່ຕັດເງິນ.
10. ເງື່ອນໄຂລາພັກ..............................................................................................

11. ອື່ນໆ

ມາດຕາ3: ພັນທະຂອງຜູ້ອອກແຮງງານ

ຕ້ອງປະຕິບັດໜ້າທີ່ໃຫ້ດີທີ່ສຸດ, ຮັກສາສິ່ງຂອງຜູ້ໃຊ້ແຮງງານ, ບໍລິສຸດສັດຊື່, ປະຕິບັດຕາມກົດລະບຽບອອກແຮງງານພາຍໃນກົມກອງແຮງງານ ແລະ ສັນຍາແຮງງານ ທາງລະບຽບການກົດໝາຍຕ່າງໆ ຂອງ ສ. ປ. ປ ລາວ.

ໝາຍເຫດ: ກໍລະນີຝ່າຍໃດຝ່າຍໜຶ່ງລະເມີດສັນຍານີ້ຈະເຮັດແນວໃດ....................

ສັນຍາສະບັບນີ້ ມີຜົນສັກສິດ ໃຊ້ຖືກຕ້ອງດ້ວຍກົດໝາຍຕັ້ງແຕ່ ວັນທີ..... ເດືອນ.....ປີ ເປັນຕົ້ນໄປ

ລາຍເຊັນປະທັບຕາຜູ້ໃຊ້ແຮງງານ                    ລາຍເຊັນຜູ້ອອກແຮງງານ

## ຄຳຖາມ

1) ກົດໝາຍແຮງງານແມ່ນຫຍັງ ?
2) ຫຼັກການລວມຂອງກົດໝາຍແຮງງານມີແນວໃດແດ່?
3) ພົນລະເມືອງທີ່ດີຕ້ອງປະຕິບັດກົດໝາຍແນວໃດ?

## ຄຳຖາມ ແບບປາລະໄນ

1) ສັນຍາແຮງງານມີຈັກອົງປະກອບ?
   - ☐ ມີ 2 ອົງປະກອບ
   - ☐ ມີ 3 ອົງປະກອບ
   - ☐ ມີ 4 ອົງປະກອບ

2) ຮູບການຂອງສັນຍາແຮງງານມີ:
   - ☐ ສັນຍາແຮງງານຕ້ອງເຮັດກັບຜູ້ໃຊ້ແຮງງານ.
   - ☐ ສັນຍາແຮງງານຕ້ອງເຮັດເປັນລາຍລັກອັກສອນ ແລະ ທາງປາກເປົ່າ.
   - ☐ ສັນຍາແຮງງານຕ້ອງເຮັດເປັນລາຍລັກອັກສອນ ແລະ ເຮັດຕາມກົດໝາຍ.

# ບົດທີ22
# ກົດໝາຍແພ່ງ

## 1. ຄວາມໝາຍຂອງກົດໝາຍແພ່ງ

ກົດໝາຍແພ່ງແມ່ນບັນດາຂໍ້ກຳນົດທີ່ດັດສົມສາຍກ່ຽວພັນສັງຄົມທາງດ້ານຊັບສົມບັດ ແລະ ບໍ່ແມ່ນຊັບສົມບັດທີ່ຕິດພັນກັບການເປັນເຈົ້າຂອງ, ການຊົມໃຊ້ ແລະ ການຄອບຄອງ ຫຼື ອາດເວົ້າໄດ້ວ່າແມ່ນກົດໝາຍປະເພນີ, ແບບແຜນ ເຊິ່ງປະກອບດ້ວຍບັນດາກົດໝາຍ: ວ່າດ້ວຍກຳມະສິດ, ວ່າດ້ວຍມູນມໍລະດົກ ແລະ ກົດໝາຍອື່ນໆ ທີ່ຕິດພັນກັບການເປັນເຈົ້າຂອງ, ການຊົມໃຊ້ ແລະ ການຄອບຄອງ.

## 2. ເນື້ອໃນອັນສຳຄັນຂອງກົດໝາຍແພ່ງ:

2.1 ກຳນົດຄວາມຜິດທາງແພ່ງ

ການທຳລາຍຊັບສົມບັດ, ການລັກໂລບມາກໂລພາ, ການສົມຮູ້ຮ່ວມຄິດ, ການສໍ້ໂກງ, ການປ້ອຍດ່າ, ການໃສ່ຮ້າຍປ້າຍສີ ແລະ ອື່ນໆ.

2.2 ກຳນົດໂທດທາງແພ່ງ

ກົດໝາຍແພ່ງ ບັງຄັບໃຫ້ຜູ້ກະທຳຜິດ ຕ້ອງປະຕິບັດການໃຊ້ແທນຄ່າເສຍຫາຍ, ການປັບໃໝ, ການຍຶດຊັບສົມບັດຄືນ, ການເຮັດພິທີປັບປຸງຈິດໃຈ( ເຮັດຂັວນ) ຫຼືທົດແທນແລະອື່ນໆ

2.3 ການປົກປ້ອງສິດ ແລະ ກຽດສັກສີ

ກົດໝາຍແພ່ງໃຫ້ພົນລະເມືອງທຸກຄົນເຄົາລົບສິດທິ ແລະ ກຽດສັກສີ ເຊິ່ງກັນແລະກັນ, ທຸກໆການລະເມີດສິດທິ ແລະ ຂໍ້ຫ້າມຕ່າງໆລ້ວນແລ້ວແຕ່ຖືກລົງໂທດທາງແພ່ງ.

## 3. ຄວາມສຳຄັນຂອງກົດໝາຍແພ່ງ

ກົດໝາຍແພ່ງສາມາດຊຸກຍູ້ໃຫ້ມີການປັບປຸງລະບົບເສດຖະກິດ,ກຳມະສິດແລະຮູບແບບຂະຫຍາຍຕົວຂອງກຳມະສິດ, ປັບປຸງວຽກງານໃນການເຮັດສັນຍາ, ການຍົກສູງຄຸນນະພາບຂອງຜະລິດຕະພັນ, ການປະຕິບັດສັນຍາຕ່າງໆ ແລະ ການເຄື່ອນໄຫວກິດຈະກຳອື່ນໆໃຫ້ຖືກຕ້ອງແລະຍຸດຕິທຳ.

ກົດໝາຍແພ່ງປັບປຸງລະບົບການຄູ້ມຄອງເສດຖະກິດ - ສັງຄົມ ,ວັດທະນະທຳ , ວິທະຍາສາດ ແລະ ເຕັກນິກ ເຮັດໃຫ້ມີການພັດທະນາຢ່າງບໍ່ຢຸດຢັ້ງ. ດັ່ງນັ້ນທຸກຄົນຕ້ອງມີຄວາມຮູ້ກ່ຽວກັບກົດໝາຍທາງແພ່ງເພາະມັນໄດ້ພົວພັນຊີວິດປະຈຳວັນຂອງຕົນ.

**ຄຳຖາມ**

1) ກົດໝາຍແພ່ງແມ່ນຫຍັງ?
2) ກົດໝາຍແພ່ງ ມີຄວາມສຳຄັນແນວໃດຕໍ່ການດຳລົງຊີວິດ?
3) ພົນລະເມືອງທີ່ດີ ຕ້ອງປະຕິບັດກົດໝາຍແນວໃດ?

**ຄຳຖາມແບບປາລະໄນ:**

ຈົ່ງເລືອກເອົາຄຳຕອບທີ່ຖືກຕ້ອງກັບຄຳຖາມ ໂດຍໃສ່ເຄື່ອງໝາຍ ✓ ເພື່ອຕອບຄຳຖາມລຸ່ມນີ້:

1) ການກຳນົດຄວາມຜິດທາງແພ່ງສະແດງອອກຄື:
   ກ. ຂໍ້ຂັດແຍ່ງທີ່ກ່ຽວພັນກັບຊັບສິນບັດ ແລະ ລະບອບການເມືອງ.
   ຂ. ຂໍ້ຂັດແຍ່ງທີ່ກ່ຽວພັນກັບຊັບສິນບັດ ແລະ ລະບອບເສດຖະກິດສັງຄົມ.
   ຄ. ຂໍ້ຂັດແຍ່ງທີ່ກ່ຽວພັນກັບຊັບສິນບັດ ແລະ ກຽດສັກສີ.
   ງ. ຖືກທຸກຂໍ້.

2) ຄວາມສຳຄັນຂອງກົດໝາຍແພ່ງ
   ກ. ຊຸກຍູ້ໃຫ້ມີການປັບປຸງລະບົບເສດຖະກິດ, ກຳມະສິດ ແລະ ຮູບແບບການຂະຫຍາຍຕົວຂອງ ກຳມະສິດ.
   ຂ. ເປັນການຍົກສູງຄຸນນະພາບຂອງການຜະລິດ.
   ຄ. ປັບປຸງລະບົບການຄູ້ມຄອງເສດຖະກິດ - ສັງຄົມ ,ວັດທະນະທຳ , ວິທະ ຍາສາດ ແລະ ເຕັກນິກ ເຮັດໃຫ້ມີການພັດທະນາຢ່າງບໍ່ຢຸດຢັ້ງ.
   ງ. ຖືກທຸກຂໍ້.

# ບົດທີ 23
# ກົດໝາຍອາຍາ

## 1. ຄວາມໝາຍຂອງກົດໝາຍອາຍາ

ກົດໝາຍອາຍາແມ່ນກົດໝາຍ ທີ່ກຳນົດການກະທຳຜິດທາງອາຍາ ແລະ ການກຳນົດໂທດໃສ່ຜູ້ກະທຳຜິດທາງອາຍາ.

ຄວາມຜິດທາງອາຍາໄດ້ແກ່: ການກະທຳທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ - ສັງຄົມ, ສິດພົນປະໂຫຍດຂອງບຸກຄົນ, ຂອງຊາດ ເປັນຕົ້ນແມ່ນການກໍ່ຄວາມວຸ້ນວາຍ, ການສ້າງຄວາມບໍ່ສະຫງົບ, ການຕີຂ້າ, ການຈູດເຜົາ, ການມ້າງເພທຳລາຍລະບຽບກົດໝາຍ, ການກໍ່ອາຊະຍາກຳ ແລະ ອື່ນໆ.

## 2. ປະເພດການກະທຳຜິດທາງອາຍາ

ການກະທະທຳຜິດທາງອາຍາມີ 9 ປະເພດຄື:

1) ການກະທຳຜິດຕໍ່: ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.
2) ການກະທຳຜິດຕໍ່: ຊີວິດສຸຂະພາບ, ກຽດສັກສີຂອງພົນລະເມືອງ.
3) ການກະທຳຜິດຕໍ່: ສິດ ແລະ ເສລີພາບຂອງພົນລະເມືອງ.
4) ການກະທຳຜິດຕໍ່: ສາຍຜົວເມຍ, ຄອບຄົວ, ຮີດຄອງປະເພນີ.
5) ການກະທຳຜິດຕໍ່: ເສດຖະກິດ.
6) ການກະທຳຜິດຕໍ່: ລະບຽບການບໍລິຫານ ແລະ ຄວາມຍຸດຕິທຳ.
7) ການກະທຳຜິດ: ຂອງພະນັກງານຕໍ່ຄວາມຮັບຜິດຊອບ.
8) ການກະທຳຜິດຕໍ່: ກຳມະສິດຂອງລັດ ຫຼື ຂອງລວມໝູ່.
9) ການກະທຳຜິດຕໍ່: ກຳມະສິດສ່ວນຕົວຂອງພົນລະເມືອງ.

## 3. ໂທດທາງອາຍາ

ໂທດທາງອາຍາມີ 2 ປະເພດຄື:

1) ໂທດຕົ້ນຕໍ: ປະຫານຊີວິດ, ຕັດອິດສະຫຼະພາບ, ດັດສ້າງໂດຍບໍ່ຕັດອິດສະຫຼະພາບ, ຕຳນິຕໍ່ໜ້າມະຫາຊົນ.
2) ໂທດເພີ່ມ: ປັບໄໝ, ຍຶດຊັບ ແລະ ວັດຖຸສິ່ງຂອງ, ຈຳກັດທີ່ຢູ່, ປົດສິດເລືອກຕັ້ງ.

ການວາງໂທດທາງອາຍາມີ 2 ສະຖານຄື: ໂທດເບົາ ແລະ ໂທດໜັກ, ໂທດຂອງແຕ່ລະສະຖານ ຍັງຂຶ້ນກັບຄວາມຜິດຂອງຜູ້ກະທຳຜິດ.

## 4. ຄວາມແຕກຕ່າງລະຫ່ວາງກົດໝາຍ ອາຍາ ແລະ ກົດໝາຍແພ່ງ

1) ກົດໝາຍແພ່ງ: ດັດສົມສາຍກ່ຽວພັນສັງຄົມ 2 ປະ ເພດຄື: ສາຍກ່ຽວພັນສັງຄົມທີ່ມີລັກສະນະຊັບສົມບັດ, ສາຍກ່ຽວພັນສ່ວນຕົວທີ່ບໍ່ມີລັກສະນະຊັບສົມບັດ.
2) ກົດໝາຍອາຍາ : ແມ່ນກົດໝາຍປົກປັກຮັກສາ ລະບອບການເມືອງ , ເສດຖະກິດ, ສັງຄົມ ແລະ ວັດທະນະທຳ.
3) ໂທດທາງແພ່ງ ແມ່ນການໃຊ້ແທນ ແຕ່ ໂທດອາຍາແມ່ນການຕັດອິດສະຫຼະພາບ ແລະ ມີໂທດເພີ່ມ.

### ຄຳຖາມ

1) ກົດໝາຍອາຍາແມ່ນຫຍັງ ?
2) ກົດໝາຍອາຍາມີຈັກປະເພດ ? ຄືປະພດໃດແດ່?
3) ຈົ່ງບອກໂທດທາງອາຍາມີແນວໃດແດ່?
4) ກົດໝາຍແພ່ງແລະກົດໝາຍອາຍາ ມີ ຄວາມແຕກຕ່າງກັນແນວໃດ?

### ຄຳຖາມ ແບບປາລະໄນ

ໃຫ້ຜູ້ຮຽນເລືອກເອົາ 1 ຄຳຕອບ ທີ່ທ່ານເຫັນວ່າຖືກຕ້ອງກັບຄຳຖາມແລ້ວໃສ່ເຄື່ອງໝາຍ ✓ ໃສ່ຕໍ່ໜ້າຄຳຕອບ:

1) ໂທດອາຍາໄດ້ແກ່:
   ກ. ການຕັດອິດສະຫຼະພາບ.
   ຂ. ການຕັດອິດສະຫຼະພາບ ແລະ ການໃຊ້ແທນ
   ຄ. ການຕັດອິດສະຫຼະພາບ ແລະ ການໃຫ້ໂທດເພີ່ມ
   ງ. ການຕັດອິດສະຫຼະພາບ ແລະ ການ ທຳພິທີປັບປຸງຈິດໃຈ( ເຮັດຂ້ວນ)
2) ການວາງໂທດທາງອາຍາມີຈັກສະຖານ?
   ກ. ມີ 2 ສະຖານ.
   ຂ. ມີ 5 ສະຖານ
   ຄ. ມີ 9 ສະຖານ.

# ບົດທີ 24
# ກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້

## 1. ກົດໝາຍທີ່ດິນ

**1) ຄວາມໝາຍ**

ແມ່ນກຳນົດລະບອບການຄູ້ມຄອງ, ການປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ໃຫ້ມີປະສິດທິຜົນ ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍ, ປະກອບສ່ວນເຂົ້າໃນການເພີ້ມທະວີການ ພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລະ ເຂດ ແດນດິນ ຂອງ ສ ປ ປ ລາວ.

**2) ຜູ້ມີສິດກ່ຽວກັບທີ່ດິນ**

ທີ່ດິນແຫ່ງສປປລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ລັດ ເປັນຜູ້ຄູ້ມຄອງຢ່າງ ລວມສູນ ແລະ ເປັນເອກະພາບ ທົ່ວປະເທດແລະມອບສິດໃຫ້ບຸກຄົນ, ຄອບຄົວແລະການຈັດຕັ້ງ ເສດຖະກິດນຳໃຊ້, ເຊົ່າ ຫຼື ສຳປະທານມອບໃຫ້ອົງການຈັດຕັ້ງຕ່າງໆ ຂອງລັດນຳໃຊ້, ສຳລັບ ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງດ້າວ, ຜູ້ບໍ່ມີສັນຊາດຄົນຕ່າງປະເທດ, ແລະການຈັດຕັ້ງ ຂອງບຸກຄົນດັ່ງກ່າວນັ້ນແມ່ນໃຫ້ເຊົ່າ ຫຼື ສຳປະທານ.

## 2. ກົດໝາຍປ່າໄມ້

1) ໜ້າທີ່ຂອງກົດໝາຍປ່າໄມ້

ແມ່ນກຳນົດຫຼັກການ, ລະບຽບການ, ແລະ ມາດຕະການພື້ນຖານກ່ຽວກັບການຄູ້ມຄອງປົກປັກ ຮັກສາ, ນຳໃຊ້ຊັບພະຍາກອນປ່າໄມ້ຢູ່ສ.ປ.ປລາວແນ່ໃສ່ເຮັດໃຫ້ທຳມະຊາດມີຄວາມສົມດູນ ເພື່ອ ເປັນແຫຼ່ງທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນບໍ່ບົກແຫ້ງຈັກເທື່ອ, ຮັບປະກັນການປົກປັກ ຮັກສາແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງດິນ, ປົກປັກຮັກສາແນວພືດພັນ,ຕົ້ນໄມ້,ສັດນ້ຳ, ສັດປ່າ, ແລະສິ່ງແວດລ້ອມ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມແຫ່ງຊາດໃຫ້ ອຸດົມຮັ່ງມີຂຶ້ນເລື້ອຍໆ.

2) ຄວາມໝາຍທີ່ດິນປ່າໄມ້.

ທີ່ດິນແມ່ນເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດເປັນທີ່ດິນປ່າ ໄມ້.

3) ພັນທະໃນການຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

ບຸກຄົນແລະການຈັດຕັ້ງລ້ວນແຕ່ມີພັນທະໃນການປົກປັກຮັກສາປ່າໄມ້, ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ , ສັດປ່າ, ແລະ ສິ່ງແວດລ້ອມ, ນຳໃຊ້ປ່າໄມ້, ທີ່ດິນໃຫ້ຖືກຕ້ອງຕາມລະບຽບການ, ບໍ່ເຮັດໃຫ້ປ່າໄມ້ເຊື່ອມໂຊມ, ບົກແຫ້ງ, ວາງມາດຕະການອັນຈຳເປັນ ເພື່ອປົກປ້ອງບໍ່ໃຫ້ໄຟໄໝ້ປ່າ, ປະກອບສ່ວນສະກັດກັ້ນການທຳລາຍປ່າໄມ້ບໍ່ວ່າດ້ວຍວິທີໃດກໍ່ຕາມ.

## ຄຳຖາມ

1) ກົດໝາຍທີ່ດິນແມ່ນຫັຍງ?
2) ກົດໝາຍປ່າໄມ້ແມ່ນແນວໃດ?

## ຄຳຖາມແບບປາລະໄນ

ໃຫ້ຜູ້ຮຽນເລືອກເອົາຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດກັບຄຳຖາມແລ້ວຕື່ມເຄື່ອງໝາຍ ✓ ໃສ່ຕໍ່ໜ້າຄຳຕອບ:

1) ໜ້າທີ່ຂອງການປົກປັກຮັກສາປ່າໄມ້ແມ່ນຂອງພາກສ່ວນໃດ?
   ກ. ໜ້າທີ່ຂອງລັດ.
   ຂ. ໜ້າທີ່ຂອງອົງການຈັດຕັ້ງ.
   ຄ. ໜ້າທີ່ຂອງບຸກຄົນ.
   ງ. ໜ້າທີ່ຂອງບຸກຄົນແລະທຸກອົງການຈັດຕັ້ງ.

2) ຜູ້ມີສິດໃນການຄຸ້ມຄອງທີ່ດິນແມ່ນ:
   ກ. ຊາວຕ່າງດ້າວ
   ຂ. ຜູ້ບໍ່ມີສັນຊາດ.
   ຄ. ວົງຄະນະຍາດແຫ່ງຊາດສປປລາວ
   ງ. ຄົນຕ່າງປະເທດ ແລະ ອົງການຈັດຕັ້ງຂອງກູ່ມຄົນດັ່ງກ່າວ?

# ພາກທີ V
# ສິດ ແລະ ໜ້າທີ່ຂອງພົນລະເມືອງລາວ

## ບົດທີ 25
## ສິດພື້ນຖານຂອງພົນລະເມືອງລາວ

### 1. ຄວາມໝາຍຂອງສິດ

ໝາຍເຖິງອຳນາດອັນຊອບທຳຂອງພົນລະເມືອງລາວທຸກຄົນໃນການປົກປັກຮັກສາຊັບສົມບັດ, ຊີວິດ , ຈິດໃຈຂອງຕົນເອງ ແລະ ວັດທະນະທຳຂອງຊາດ.

### 2. ສິດຂອງພົນລະເມືອງລາວ

2.1. ດ້ານການເມືອງ

ໄດ້ແກ່ອຳນາດອັນຊອບທຳຂອງພົນລະເມືອງເພື່ອການພັດທະນາ ແນວຄິດຈິດໃຈຂອງຕົນເອງ ແລະ ພັດທະນາສັງຄົມເຊິ່ງສະແດງອອກດັ່ງນີ້:

1) ສິດປ່ອນບັດເລືອກຕັ້ງ ແລະ ສະໝັກເລືອກຕັ້ງ.
2) ສິດຮ້ອງຂໍຕໍ່ວ່າ, ກ່າວຟ້ອງ ແລະ ສະເໜີຄຳຄິດ ຄຳເຫັນ.
3) ສິດທີ່ບໍ່ມີໃຜຈະລ່ວງລະເມີດໄດ້ ຕໍ່ຮ່າງກາຍ ແລະ ເຄຫາສະຖານ.
4) ສິດເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ລົງໜັງສືພິມ ແລະ ເຂົ້າເປັນສະມາຊິກຂອງອົງການຈັດຕັ້ງມະຫາຊົນ.

**2.2. ສິດດ້ານເສດຖະກິດ**

ໄດ້ແກ່ອຳນາດອັນຊອບທຳຂອງພົນລະເມືອງເພື່ອພັດທະນາເສດຖະກິດເຊັ່ນ: ການປູກຝັງ, ລ້ຽງສັດ,ການຜະລິດສິນຄ້າ,ການຄ້າຂາຍໆລໆ.......ທີ່ຖືກຕ້ອງຕາມກົດໝາຍເຊິ່ງກົດໝາຍໄດ້ລະບຸໄວ້ດັ່ງນີ້:

1) ສິດເຮັດວຽກ ແລະ ປະກອບອາຊີບ ທີ່ບໍ່ຂັດກັບລະບຽບກົດໝາຍ
2) ສິດເສລີພາບໃນການຕັ້ງພູມລຳເນົາ ແລະ ໄປມາຕາມທີ່ກົດໝາຍໄດ້ກຳນົດໄວ້.
3) ສິດປົກປ້ອງຜົນປະໂຫຍດອັນຊອບທຳຂອງຕົນ.

ກ່ຽວກັບສິດທາງດ້ານການເມືອງ, ເສດຖະກິດ ພົນລະເມືອງລາວ ຕ້ອງເຄື່ອນໄຫວຢູ່ພາຍໃຕ້ກົດໝາຍ, ການຫາລາຍໄດ້ທຸກປະເພດທີ່ຄັດກັບກົດໝາຍຈະບໍ່ຖືວ່າ ແມ່ນສິດທາງດ້ານເສດຖະກິດ.

## 2.3. ສິດດ້ານວັດທະນາທຳ - ສັງຄົມ

ພົນລະເມືອງລາວ ນອກຈາກມີສິດໃນການປາກເວົ້າ, ຂີດຂຽນແລ້ວ ຍັງມີສິດສຶກສາ ຮ່ຳຮຽນ ຄົ້ນຄ້ວາ, ນຳໃຊ້ຄວາມກ້າວໜ້າທາງດ້າວິທະຍາສາດເຕັກນິກ ແລະ ເຕັກໂນໂລຢີໃໝ່ ໃນລັດຖະທຳມະນູນ ສ ປ ປ ລາວ ເພິ່ນໄດ້ກຳນົດສິດ ດ້ານວັດທະນະທຳ-ສັງຄົມ ໄວ້ວ່າ:

1) ພົນລະເມືອງລາວໂດຍບໍ່ຈຳແນກຍິງ - ຊາຍ ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອ ແລະ ຊົນເຜົ່າ ລ້ວນ ແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.
2) ທຸກຄົນມີສິດໄດ້ສຶກສາຮ່ຳຮຽນ, ເຊື່ອຖືສາສະໜາ ຫຼື ບໍ່ເຊື່ອຖືສາສະໜາ.
3) ທຸກຄົນມີສິດປະດິດຄິດແຕ່ງ ເສີມສ້າງສີສັນ , ສິລະປະວັນນະຄະດີຂອງຊາດໃຫ້ຈະເລີນກ້າວໜ້າ.
4) ສິດດ້ານວັດທະນະທຳ - ສັງຄົມຮຽກຮ້ອງໃຫ້ພົນລະເມືອງລາວທຸກຄົນ ມີສ່ວນຮ່ວມໃນການອະນຸລັກ ແລະປົກປັກວັດທະນະທຳ ທີ່ເປັນມູນເຊື້ອຂອງຊາດ ອະນຸລັກ ສິ່ງແວດລ້ອມ ແລະ ບູຮານສະຖານຂອງຊາດ.

**ຄຳຖາມ**

**ກ. <u>ແບບອັດຕະໄນ</u>**

1) ຄຳວ່າ “ ສິດ” ມີຄວາມໝາຍແນວໃດ ?
2) ຈົ່ງອະທິບາຍສິດພື້ນຖານຂອງພົນລະເມືອງລາວ ມີຫັຍງແດ່ ?
3) ສິດດ້ານວັດທະນະທຳ - ສັງຄົມ ຮຽກຮ້ອງໃຫ້ພົນລະເມືອງລາວທຸກຄົນເຮັດຫຍັງແດ່?

**ຂ. <u>ແບບປາລະໄນ</u>**

ໃຫ້ເລືອກເອົາ 1 ຄຳຕອບທີ່ຖືກຕ້ອງທີ່ສຸດກັບຄຳຖາມລຸ່ມນີ້ ໂດຍໃຊ້ເຄື່ອງໝາຍ ✓ ລົງໃສ່ຮູບຕໍ່ໜ້າຄຳຕອບນັ້ນໃນຮູບ ☐

4) ສິດພື້ນຖານຂອງພົນລະເມືອງລາວ ມີດ້ານໃດແດ່ ?

☐ ສິດດ້ານການເມືອງ, ກົດໝາຍ ແລະ ເສດຖະກິດ.
☐ ສິດດ້ານການເມືອງ, ເສດຖະກິດ ແລະ ສິດປົກປ້ອງຜົນປະໂຫຍດອັນຊອບທຳຂອງຕົນ.
☐ ສິດດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳ - ສັງຄົມ.
☐ ຖືກໝົດທຸກຂໍ້

# ບົດທີ 26
# ສິດ ແລະ ພັນທະຕໍ່ຄອບຄົວ

## 1. ສິດ

ໝາຍເຖິງ: ຄວາມສາມາດ, ເສລີພາບໃນການເຮັດສິ່ງໃດສິ່ງໜຶ່ງ ໂດຍແມ່ນກົດໝາຍ ຫຼື ປະເພນີກຳນົດໄວ້ ເຊິ່ງສະແດງອອກໃນການປະຕິບັດວຽກງານໃຫ້ເໝາະສົມສຳລັບແຕ່ລະຄົນ, ສ່ຳອາຍຸເຊັ່ນ:

1) ສິດໃນການຮັບຮູ້ ຄວາມເປັນພໍ່, ແມ່ຂອງລູກ.
2) ສິດເລືອກສັນຊາດຂອງລູກ.
3) ສິດເລືອກຖື ນາມສະກຸນຂອງລູກ.
4) ສິດໃນການເອົາໃຈໃສ່ເບິ່ງແຍງ ລ້ຽງດູ ຫຼືໃຫ້ການສຶກສາອົບຮົມລູກເຕົ້າຮ່ວມກັນ ( ພໍ່,ແມ່ ) ພໍ່ ,ແມ່ ມີສິດຕັກເຕືອນລູກເຕົ້າຂອງຕົນເອງ , ລູກຕ້ອງຮູ້ບຸນຄຸນຂອງພໍ່ແມ່. ດັ່ງຄຳສຸພາສິດທີ່ວ່າ: " ຄຸນພໍ່ ທໍ່ພູເຂົາກ້າ ຄຸນແມ່ທໍ່ຟ້າ ກັບດິນ "
5) ສ່ວນລູກຕ້ອງຟັງຄວາມພໍ່ແມ່ ແລະ ນັບຖືເພິ່ນຢູ່ສະເໝີ.

## 2. ພັນທະຕໍ່ຄອບຄົວ

ໃນຄອບຄົວພໍ່ແມ່ ແລະ ລູກ ແມ່ນການພົວພັນແບບສົມລົດ ແລະ ສາຍເລືອດ ດັ່ງນັ້ນພໍ່ແມ່,ລູກຕ້ອງມີພັນທະ ຫຼື ໜ້າທີ່ຕ້ອງປະຕິບັດຕໍ່ກັນດັ່ງນີ້:

1) ພັນທະຂອງພໍ່ແມ່ໃນການສຶກສາອົບຮົມລູກ.
2) ພັນທະຂອງພໍ່ແມ່ໃນການ ປົກປ້ອງສິດ ແລະຜົນປະໂຫຍດຂອງລູກ.
3) ຊັບສົມບັດຂອງພໍ່ແມ່ ແລະ ລູກ.
4) ພັນທະຂອງພໍ່ແມ່ໃນການເບິ່ງແຍງລ້ຽງດູລູກ.
5) ພັນທະຂອງລູກໃນການລ້ຽງດູ, ການເບິ່ງແຍງ ແລະ ຊ່ວຍເຫຼືອພໍ່ແມ່.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ໃນຄອບຄົວ ພໍ່ແມ່ ມີສິດແນວໃດຕໍ່ກັນ?
2) ພໍ່ , ແມ່ ແລະ ລູກມີພັນທະແນວໃດຕໍ່ກັນ?

**ຂ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີ່ສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສ່ຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຂອງຄຳຕອບ.

3) ຜົວ ແລະ ເມຍ ແມ່ນການພົວພັນແບບໃດ?

☐ ແບບສາຍເລືອດ.
☐ ແບບຍາດ ພີ່ນ້ອງ
☐ ແບບສົມລົດ
☐ ຜິດໝົດທຸກຂໍ້

4) ພໍ່ ແມ່ ແລະ ລູກແມ່ນສາຍພົວພັນແບບໃດ ?

☐ ແບບສາຍເລືອດ
☐ ແບບພໍ່ແມ່
☐ ແບບສົມລົດ ແລະ ສາຍເລືອດ
☐ ຖືກໝົດທຸກຂໍ້.

5) ພັນທະຂອງຄອບຄົວໝາຍເຖິງຫັຍງ?

☐ ສິດທີ່ຕ້ອງເຮັດ.
☐ ໜ້າທີ່ຕ້ອງປະຕິບັດ.
☐ ເສລີພາບທີ່ສາມາດເຮັດໄດ້.

# ບົດທີ 27
# ສິດ ແລະ ພັນທະ ຕໍ່ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ

ການປ້ອງກັນຊາດ - ປ້ອງກັນຄວາມສະຫງົບເປັນໜ້າທີ່ ແລະ ພັນທະ ຂອງທຸກການຈັດຕັ້ງ ແລະ ພົນລະເມືອງລາວທຸກຄົນ ໃນການປົກປັກຮັກສາຄວາມເປັນເອກະລາດ ອຳນາດ ປະຊາທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ,ປົກປັກຮັກສາຊີວິດແລະ ຊັບສິນຂອງປະຊາຊົນເຊິ່ງມັນສະແດງອອກຫຼາຍຮູບການເຊັ່ນ: ການອອກໄປເປັນທະຫານພັນທະຂອງຊາວໜຸ່ມ, ການສະໝັກເຂົ້າເປັນກຳລັງປ້ອງກັນຄວາມສະຫງົບສຸກ ( ປ ກ ສ ຫຼື ຕຳຫຼວດ ) , ການເປັນກອງຫຼອນ ປະຈຳບ້ານ, ການເປັນກອງປ້ອງກັນປະຈຳໂຮງຮຽນ ແລະ ສຳນັກງານ ການເປັນຫູເປັນຕາໃຫ້ແກ່ເຈົ້າໜ້າທີ່ ແລະອື່ນໆ.

## 1. ວຽກງານປ້ອງກັນຊາດ

ກຳລັງປ້ອງກັນຊາດຕ້ອງເອົາໃຈໃສ່ປັບປຸງ ແລະ ກໍ່ສ້າງຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ,ເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ, ເປັນກຳລັງປະກອບອາວຸດຂອງປະຊາຊົນ ທີ່ມີທາດແທ້ປະຕິວັດ, ລະບຽບວິໄນເຂັ້ມງວດ ແລະ ທັນສະໄໝ ມີຄວາມສາມັກຄີ, ເປັນກຳລັງຫຼັກແຫຼ່ງ ໃນການຮັກສາຄວາມໝັ້ນຄົງ ຂອງປະເທດຊາດ, ຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## 2. ວຽກງານປ້ອງກັນຄວາມສະຫງົບ

ຕັ້ງໜ້າ ກໍ່ສ້າງ ແລະ ປັບປຸງກຳລັງປ້ອງກັນຄວາມສະຫງົບຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃຫ້ມີຄຸນນະພາບ ບໍ່ວ່າດ້ານການເມືອງ, ແນວຄິດ ກໍຄືດ້ານວິຊາສະເພາະ. ມະຫາຊົນທຸກຄົນມີພັນທະໃນວຽກງານ ຮັກສາຄວາມສະຫງົບ, ຄວາມເປັນລະບຽບ ຮຽບຮ້ອຍໃນບ້ານເມືອງ, ກຳລັງປ້ອງກັນຄວາມສະຫງົບຕ້ອງສົມທົບກັບທຸກຂະແໜງການ ແລະ ປະຊາຊົນບັນດາເຜົ່າຢ່າງແໜ້ນແຟ້ນ ໃນການສະກັດກັ້ນ ແລະ ກຳຈັດ ໜໍ່ແໜງຕ່າງໆ ທີ່ກໍ່ຄວາມບໍ່ສະຫງົບໃນສັງຄົມ, ທັບມ້າງທຸກການເຄື່ອນໄຫວຂອງສັດຕູ ແລະ ຄົນບໍ່ດີ ທີ່ສ້າງຄວາມປັ່ນປ່ວນ, ວຸ້ນວາຍເຮັດໃຫ້ສັງຄົມບໍ່ມີຄວາມສຸກ, ຫັວງໂຄ່ນລົ້ມ ປະຊາທິປະໄຕ ປະຊາຊົນ ຂອງພວກເຮົາ.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແມ່ນໜ້າທີ່ ແລະ ພັນທະຂອງໃຜ ?

2) ເພື່ອຢາກໃຫ້ກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບສຸກ ມີຄວາມເຂັ້ມແຂງແລະທັນສະໄໝ ຕ້ອງເຮັດແນວໃດ ?

**ຂ. ແບບປະລາໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີ່ສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສ່ຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຂອງຄຳຕອບນັ້ນ.

3) ພັນທະໃນການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແມ່ນໜ້າທີ່ຂອງໃຜ?.

☐ ຕຳຫຼວດ ແລະ ກອງຫຼອນ.

☐ ທະຫານ ແລະ ລັດຖະບານ

☐ ແມ່ນຂອງໝົດທຸກຄົນ.

☐ ຖືກໝົດທຸກຂໍ້.

# ບົດທີ 28

# ໜ້າທີ່ຂອງພົນລະເມືອງລາວທີ່ມີຕໍ່ສັງຄົມ ແລະ ປະເທດຊາດ

## 1. ຄວາມໝາຍ ສັງຄົມ

ສັງຄົມ ໝາຍເຖິງກຸ່ມຄົນທີ່ມີການຈັດຕັ້ງອັນແໜ້ນໜາພໍສົມຄວນ ແລະ ມີສາຍພົວພັນເຊິ່ງກັນ ແລະ ກັນ ໂດຍສະແດງອອກໃນການເຄື່ອນໄຫວທາງດ້ານເສດຖະກິດ, ການເມືອງ ຫຼື ວັດທະນະທໍາ ໃນໄລຍະປະຫັວດສາດໃດໜຶ່ງ ແລະ ຢູ່ໃນຂອບເຂດດິນແດນອັນແນ່ນອນ.

## 2. ພາກສ່ວນປະກອບຂອງສັງຄົມ

2.1 ປະຊາກອນໝາຍເຖິງ:ຈໍານວນຄົນທີ່ຕັ້ງຖິ່ນຖານຖາວອນຢູ່ໃນຂອບເຂດປະເທດໃດໜຶ່ງທີ່ມີການເກີດ, ການຕາຍ ແລະ ການຍ້າຍຖິ່ນຖານ.

2.2 ສະຖາບັນສັງຄົມ ໝາຍເຖິງ:ອົງການຈັດຕັ້ງຕ່າງໆ ທີ່ສ້າງຂຶ້ນເພື່ອຊ່ວຍໃຫ້ສະມາຊິກໄດ້ປະຕິບັດຕາມລະບຽບທີ່ວາງອອກເຊັ່ນ: ແນວລາວສ້າງຊາດ, ອົງການນິຕິບັນຍັດ(ສະພາແຫ່ງຊາດ) ອົງການບໍລິຫານ (ລັດຖະບານ), ອົງການຕຸລາການ ( ໄອຍະການ ແລະ ສານ) ອົງການຈັດຕັ້ງມະຫາຊົນ ( ສະຫະພັນກໍາມະບານລາວ, ຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ອົງການຈັດຕັ້ງສະຫະພັນແມ່ຍິງລາວ) .

## 3. ໜ້າທີ່ຂອງພົນລະເມືອງ ທີ່ມີຕໍ່ສັງຄົມ ແລະ ປະເທດຊາດ

ໜ້າທີ່ຂອງພົນລະເມືອງແມ່ນສິດ ແລະ ພັນທະອັນພື້ນຖານຂອງຄົນໃນສັງຄົມ ເຊິ່ງຖືວ່າເປັນໜ້າວຽກທີ່ພົວພັນເຖິງພົນລະເມືອງທຸກໆຄົນ ມີຄວາມຈໍາເປັນທີ່ຮຽນຮູ້, ຕ້ອງເຄົາລົບ, ປະພຶດ ແລະປະຕິບັດ. ໜ້າທີ່ເຫຼົ່ານັ້ນມີຄື:

3.1. ມີໜ້າທີ່ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແມ່ນໜ້າທີ່ ຂອງໝົດທຸກຄົນເພື່ອປ້ອງກັນກັນບໍ່ໃຫ້ຄົນບໍ່ດີ ເຂົ້າທໍາລາຍຄວາມໝັ້ນຄົງຂອງຊາດ.

3.2. ມີໜ້າທີ່ປົກປັກຮັກສາລະບອບປະຊາທິປະໄຕ ປະຊາຊົນ ອັນມີພັກປະຊາຊົນປະຕິບັດລາວເປັນແກນນໍາ.

3.3. ມີໜ້າທີ່ເຄົາລົບຕໍ່ລະບຽບກົດໝາຍຂອງບ້ານເມືອງ ຕື່ນຕົວຊົມໃຊ້ສິດ ແລະ ໜ້າທີ່ເຊິ່ງບັນຍັດໄວ້ ໃນລັດຖະທໍາມະນູນ ແຫ່ງ ສ ປ ປ ລາວ ແລະ ໃນລະບຽບກົດໝາຍອື່ນໆຢ່າງຖືກຕ້ອງ.

3.4. ມີໜ້າທີ່ ເສຍພາສີ ອາກອນ ໃຫ້ລັດ.

3.5. ມີໜ້າທີ່ຊ່ວຍເຫຼືອໜ່ວຍງານຂອງລັດຖະບານ.

3.6. ມີໜ້າທີ່ເຂົ້າຮັບການ ສຶກສາອົບຮົມ ຄວາມຮູ້ທາງດ້ານການເມືອງ, ວັດທະນະທຳ,ເສດຖະກິດ ແລະ ອື່ນໆ. ເຝິກຝົນຄວາມສາມາດ, ປະກອບອາຊີບ ແລະ ທຳມາຫາກິນຢ່າງທ່ຽງທຳ.

3.7. ມີໜ້າທີ່ອອກແຮງງານດ້ວຍຕົນເອງ ກໍຄືດ້ວຍມັນສະໝອງ ເພື່ອລ້ຽງກຸ້ມຕົນເອງ ແລະ ສ້າງສາພັດທະນາປະເທດຊາດໃຫ້ຮັ່ງມີເຂັ້ມແຂງ , ສີວິໄລ ແລະສົມບູນພູນສຸກ.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ສັງຄົມໝາຍເຖິງຫຍັງ?

2) ປະຊາກອນ ແລະ ສະຖາບັນສັງຄົມໝາຍເຖິງຫຍັງ?

3) ພົນລະເມືອງລາວມີໜ້າທີ່ ຕໍ່ສັງຄົມແລະ ປະເທດຊາດແນວໃດແດ່ ?

**ຂ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກຕ້ອງທີ່ສຸດເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຂອງຄຳຕອບນັ້ນ.

4) ພາກສ່ວນປະກອບຂອງສັງຄົມລາວມີ:

☐ ປະຊາກອນ ແລະ ສະຖາບັນສັງຄົມ.

☐ ສັງຄົມ ແລະ ປະຊາກອນ.

☐ ສັງ ຄົມ ແລະ ສະຖາບັນສັງຄົມ

☐ ຖືກໝົດທຸກຂໍ້.

5) ໜ້າທີ່ ຂອງພົນລະເມືອງລາວແມ່ນ:

☐ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

☐ ປົກປັກຮັກສາລະບອບການປົກຄອງ

☐ ສິດ ແລະ ພັນທະອັນເປັນພື້ນຖານໃນສັງຄົມ.

# ບົດທີ 29
# ໜ້າທີ່ຂອງພົນລະເມືອງໃນການປະຕິບັດກົດຈະລາຈອນ

ການຈະລາຈອນຕາມຖະໜົນຫົນທາງບໍ່ວ່າຢູ່ໃນຕົວເມືອງໃຫຍ່ກໍ່ຄືຊົນນະບົດທົ່ວປະເທດເຮົາ ກໍລ້ວນແຕ່ ເກີດອຸປະຕິເຫດ ເຊິ່ງນຳເອົາຄວາມເສຍຫາຍບໍ່ໜ້ອຍ ມາສູ່ຊີວິດ ແລະ ວັດຖຸ ຊັບສິນ.

ດັ່ງນັ້ນທຸກໆຄົນຕ້ອງຮຽນຮູ້ ແລະ ປະຕິບັດກົດລະບຽບກ່ຽວກັບຄວາມປອດໄພ ໃນການຈະລາຈອນຕາມຖະໜົນຫົນທາງ.

## 1. ລະບຽບທົ່ວໄປກ່ຽວກັບການຈະລາຈອນ

ເດັກທີ່ມີອາຍຸບໍ່ທັນເຖິງກະສຽນ ຕ້ອງຢູ່ໃນຄວາມຮັບຜິດອບຂອງພໍ່-ແມ່ ຫຼື ຜູ້ປົກຄອງ ການໄປມາຕ້ອງມີການຄວບຄຸມ, ຕິດຕາມເບິ່ງແຍງ ເພື່ອຮັບປະກັນຄວາມປອດໄພທຸກປະການ.

ເດັກທີ່ມີອາຍຸຕ່ຳກ່ວາ 12 ປີ ເດີນທາງໄປມາ ຕ້ອງມີຜູ້ພາທາງຄັກແນ່ , ກ່ອນຈະຂ້າມທາງຕ້ອງຫຼຽວຊ້າຍ, ຂວາ ເສຍກ່ອນ ຖ້າບໍ່ມີລົດຈຶ່ງຂ້າມ.

1) ຫ້າມເດັກອາຍຸ ຕ່ຳກ່ວາ 14 ປີ ຂີ່ລົດຖີບ, ລົດຈັກ ຕາມຖະໜົນ.
2) ຫ້າມເດັກຫຼິ້ນຕາມທ້ອງຖະໜົນ.
3) ຫ້າມຂີ່ລົດຈັກ ຊ້ອນກັນເກີນ 2 ຄົນ,
4) ຫ້າມຂີ່ເຂົາລົດ, ຫ້າມຢືນຊ້ອນກັນ ປີນຫຼັງ ແລະ ອື່ນໆ
5) ຫ້າມຂີ່ລົດຮຽງກັນເປັນແພຫຼືຍ່າງຮຽງກັນເປັນແພກີດຂວາງທາງ.
6) ຫ້າມຂີ່ລົດຈັກ ລາກແກ່ກັນ ຫຼື ຈ່ອງດຶງກັນ.
7) ຂີ່ລົດ ຕ້ອງໄປແຄມທາງກ້ຳຂວາມືຂອງຕົນສະເໝີ.
8) ຂີ່ລົດຕ້ອງໃສ່ໝວກກັນກະທົບ.
9) ເວລາຂັບຂີ່ລົດ ກ່ອນຈະລ້ຽວ ຕ້ອງເປີດໄຟສັນຍານ ຫຼືເດ່ ແຂນອອກ.
10) ເມື່ອຮອດທາງແຍກຕ້ອງຜ່ອນຄວາມໄວ ຫຼື ຢຸດເບິ່ງຊ້າຍ, ຂວາ ວ່າ ບໍ່ມີລົດແລ້ວຈຶ່ງໄປ.
11) ຢູ່ໂຮງຮຽນ ຕ່າງໆກ່ອນຈະເລີກ ຕ້ອງມີການຈັດຕັ້ງປ້ອງກັນ ສັນຍານໄວ້ລ່ວງໜ້າ ເພື່ອຢຸດລົດໄປມາໃນເວລາຂ້າມທາງ, ເມື່ອຂ້າມທາງຕ້ອງຍ່າງຕາມຂີດມາລາຍ.

## 2. ໜ້າທີ່ລວມຂອງຜູ້ຂັບຂີ່ ຍານພາຫະນະ

ຜູ້ຂັບຂີ່ຍານພາຫະນະຕ້ອງປະຕິບັດຕາມໜ້າທີ່ດັ່ງນີ້:

2.1. ທຸກຄົນທີ່ຂັບຂີ່ພາຫະນະທຸກຊະນິດ ຕ້ອງປະຕິບັດຕາມກົດລະບຽບຈະລາຈອນຢ່າງເຂັ້ມງວດ

2.2. ທຸກຄົນຂັບຂີ່ລົດ (ຍົກເວັ້ນລົດຖີບ) ຕ້ອງມີໃບຂັບຂີ່,ທະບຽນລົດ,ໃບກວດສະພາບເຕັກນິກລົດ , ຄ່າທາງ.. ຕິດຕົວໄປນຳ.

2.3. ທຸກຄົນທີ່ຂັບຂີ່ລົດ ຕ້ອງມີອາຍຸ 18 ປີ ຂຶ້ນໄປ ມີສຸຂະພາບ ແຂງແຮງດີ ( ຫູ, ຕາ ດີ ) ຂັບຂີ່ລົດຢູ່ໃນຕົວເມືອງຄວາມໄວບໍ່ໃຫ້ເກີນ 40 ກມ/ ຊົ່ວໂມງ, ເຂດຊຸມຊົນ ຄວາມໄວ 5 ກມ/ ຊົ່ວໂມງ ແລະ ເຂດພູດອຍ ຄວາມໄວ 40 ກມ / ຊົ່ວໂມງ, ຖ້າຫົນທາງບໍ່ດີຕ້ອງລຸດຜ່ອນລົງເຄິ່ງໜຶ່ງ.

ໃນກໍລະນີພິເສດເມື່ອເຈົ້າໜ້າທີ່ ໃຊ້ສຽງແກ, ສຽງໂຫວດເປີດທາງໃຫ້ລົດພິເສດ ( ອາດຈະແມ່ນລົດແຂກເມືອງ, ລົດມອດໄຟ ຫຼື ລົດແພດສຸກເສີນ ) ຜູ້ຂັບຂີ່ຍານພາຫະນະທີ່ແລ່ນຕາມເສັ້ນທາງນັ້ນຕ້ອງແອບເຂົ້າເສັ້ນທາງເບື້ອງຂວາມື, ຍຸດຈອດເປັນລະບຽບ ຈົນລົດຂະບວນດັ່ງກ່າວຜ່ານໄປແລ້ວຈຶ່ງແລ່ນລົດໄປໄດ້.

## 3. ໜ້າທີ່ລວມຂອງຜູ້ຍ່າງ ແລະ ຜູ້ໂດຍສານ

ຜູ້ຍ່າງ ແລະ ຜູ້ໂດຍສານ ມີໜ້າທີ່ດັ່ງນີ້:

3.1 ເວລາຍ່າງຕາມຫ້ອງຖະໜົນ, ຍ່າງຕາມທາງຍ່າງ ຕ້ອງ ແອບເຂົ້າເບື້ອງຂວາມືຂອງຕົນ, ເວລາຈະຂ້າມທາງຕ້ອງຫຼຽວຊ້າຍ,ຫຼຽວຂວາກ່ອນ, ເມື່ອບໍ່ເຫັນລົດມາ ແລ້ວຈຶ່ງຂ້າມ ແລະຕ້ອງຂ້າມຕາມທາງມ້າລາຍຍິ່ງເປັນການດີ(ຖ້າມີ).

3.2 ເວລາລົດພວມແລ່ນ ຫ້າມຜູ້ໂດຍສານເດ່ມືອອກນອກລົດ, ໄຂປະຕູລົດ, ໂດດລົງລົດ, ນັ່ງຫຼັງຄາລົດ , ລົບກວນຜູ້ຂັບລົດ.

3.3 ຕ້ອງຮັກສາມາລະຍາດໃນການຊົມໃຊ້ລົດໂດຍສານ ເຊັ່ນ: ບໍ່ສູບຢາ, ບໍ່ຖິ້ມຂີ້ເຫຍື້ອ, ບໍ່ນຳສິ່ງ ບູດເນົ່າຂຶ້ນລົດ, ບໍ່ເອົາສັດຂຶ້ນລົດ,ບໍ່ຮ້ອງໂວຍວາຍ.

3.4 ຜູ້ມີມາລະຍາດດີຕ້ອງຫຼີກບ່ອນນັ່ງໃຫ້ ຜູ້ຍິງ, ຜູ້ເຖົ້າ, ເດັກນ້ອຍ, ຜູ້ເສຍອົງຄະ, ຄູບາອາຈານ..

## 4. ປ້າຍ ສັນຍານ ຈະລາຈອນ

4.1.ປ້າຍ ແນະນຳ ແລະ ປ້າຍຊີ້ທິດ

ລັກສະນະ: ເປັນຮູບສີ່ຫຼ່ຽມ ພື້ນສີຟ້າ ແລະ ມີ ເຄື່ອງໝາຍຊີ້ບອກທິດ, ສະຖານທີ່ຕ່າງໆ ເພື່ອບໍລິການ ໃຫ້ແກ່ຜູ້ສັນຈອນ ຫຼື ຊີ້ບອກທາງ ໄປ ມາໃຫ້ແກ່ຜູ້ຂັບຂີ່ຍານພາຫະນະ.

4.2. ລະບົບໄຟອຳນາດ

ມັກຈະຕັ້ງຢູ່ທາງ ສາມແຍກ, ສີ່ແຍກ ເຊິ່ງມີສິດສັ່ງໃຫ້ຜູ້ສັນຈອນ ປະຕິບັດຕາມຢ່າງເດັດຂາດ ຖ້າລະເມີດຈະເຖິງແກ່ຄວາມຕາຍ.

- ໄຟແດງຫ້າມສັນຈອນຕໍ່ໄປ ຕ້ອງຢຸດເດັດຂາດ.
- ໄຟເຫຼືອງຕ້ອງລົດຄວາມໄວລົງທັນທີ ອະນຸຍາດຜ່ານໄດ້ ຖ້າຈຳເປັນ (ຄວນລະວັງ)
- ໄຟຂຽວມີສິດໄປໄດ້.
- ໄຟແດງແຕ່ມີລູກສອນສີຂຽວຫ້າມໄປຊື່ ແຕ່ລ້ຽວຂວາໄດ້.

ຮູບໄຟອຳນາດ



## 4.3.ບັນດາປ້າຍຈາລະຈອນທີ່ທຸກຄົນຄວນຮູ້

4.3.1. ປ້າຍເຕືອນອັນຕະລາຍ



4.3.2. ປ້າຍຫ້າມ



4.3.3. ປ້າຍບອກສິດ



**ຄຳຖາມ**

ກ. ແບບອັດຕະໄນ

1) ລະບຽບທົ່ວໄປກ່ຽວກັບການຈະລາຈອນມີແນວໃດ ?

2) ຜູ້ຂັບຂີ່ພາຫະນະມີໜ້າທີ່ແນວໃດແດ່ ?

3) ໃນເວລາຍ່າງ ຫຼື ເວລາຂີ່ລົດ ພວກເຮົາຄວນປະຕິບັດຕົນແນວໃດ?

4) ຈົ່ງຍົກປ້າຍຈະລາຈອນທີ່ເຈົ້າຮູ້ຈັກມາເບິ່ງ?

**ຂ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄໍາຕອບທີ່ຖືກຕ້ອງທີ່ສຸດເພື່ອຕອບຄໍາຖາມລຸ່ມນີ້, ໂດຍໃຊ້ເຄື່ອງ ໝາຍ ✓ ໃສ່ ☐ ທີ່ຢູ່ຕໍ່ໜ້າຂອງຄໍາຕອບນັ້ນ.

5) ການປະຕິບັດກົດລະບຽບຈະລາຈອນ ແມ່ນໜ້າທີ່ຂອງໃຜ?

☐ ແມ່ນໜ້າທີ່ຂອງເດັກນ້ອຍ.

☐ ແມ່ນໜ້າທີ່ຂອງຜູ້ຂັບຂີ່.

☐ ແມ່ນໜ້າທີ່ຂອງໝົດທຸກຄົນ

☐ ຖືກໝົດທຸກຂໍ້

6) ການຂັບຂີ່ລົດໃນຕົວເມືອງແລະ ເຂດຊຸມຊົນ ຄວນໃຊ້ຄວາມໄວສູງສຸດເທົ່າໃດ?

☐ ຄວນໃຊ້ຄວາມໄວສູງສຸດ 30 ກິໂລແມັດຕໍ່ຊົ່ວໂມງ ແລະ 5 ກິໂລແມັດຕໍ່ຊົວໂມງ.

☐ ຄວນໃຊ້ຄວາມໄວສູງສຸດ 40 ກິໂລແມັດຕໍ່ຊົ່ວໂມງ ແລະ 5 ກິໂລແມັດຕໍ່ຊົວໂມງ.

☐ ຄວນໃຊ້ຄວາມໄວສູງສຸດ 50 ກິໂລແມັດຕໍ່ຊົ່ວໂມງ ແລະ 5 ກິໂລແມັດຕໍ່ຊົວໂມງ.

7) ປ້າຍເຕືອນອັນຕະລາຍ ມີລັກສະນະແນວໃດ?

☐ ມີລັກສະນະເປັນຮູບ ສີ່ຫຼ່ຽມ

☐ ມີລັກສະນະເປັນຮູບ ສາມຫຼ່ຽມ

☐ ມີລັກສະນະເປັນຮູບວົງມົນ.

# ບົດທີ 30
# ຄວາມສະເໝີພາບລະຫ່ວາງຍິງ - ຊາຍ
# ( ບົດບາດຍິງ - ຊາຍ )

ຄວາມສະເໝີພາບລະຫວ່າງ ຍິງ - ຊາຍ ແມ່ນຄວາມເທົ່າທຽມກັນ ໃນການພັດທະນາຕົນເອງ ຍິງ , ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າທຽມກັນ ທາງການເມືອງ , ເສດຖະກິດ , ວັດທະນະທໍາ , ສັງຄົມ, ຄອບຄົວ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ ໃນລັດຖະທໍາມະນູນ ແລະ ກົດໝາຍ.

## 1. ສິດ ສະເໝີພາບທາງດ້ານ ການເມືອງ

ລັດຮັບປະກັນໃຫ້ແມ່ຍິງໄດ້ຮັບສິດທາງດ້ານການເມືອງ ເທົ່າທຽມກັບເພດຊາຍເຊັ່ນ:ສິດເລືອກຕັ້ງ ແລະ ສະໝັກເລືອກຕັ້ງ, ເຂົ້າຮ່ວມເຄື່ອນໄຫວ ວຽກງານ, ປຶກສາຫາລື ແລະ ຕົກລົງ ບັນຫາສໍາຄັນຂອງຊາດ. ໄດ້ຮັບການແຕ່ງຕັ້ງຢ່າງເໝາະສົມເຂົ້າໃນຕໍາແໜ່ງຂັ້ນຕ່າງໆຂອງບັນດາອົງການຈັດຕັ້ງ ພັກ, ລັດ , ແນວລາວສ້າງຊາດ , ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

## 2. ສິດສະເໝີພາບທາງດ້ານເສດຖະກິດ

ລັດມີນະໂຍບາຍສົ່ງເສີມໃຫ້ແມ່ຍິງມີສິດດໍາເນີນການຜະລິດ, ທຸລະກິດ ແລະ ການບໍລິການທີ່ຖືກຕ້ອງຕາມກົດໝາຍ, ມີສິດໃນການເລືອກວິຊາອາຊີບ, ການມີວຽກເຮັດງານທໍາ, ການໄດ້ຮັບຄ່າຕອບແທນ ແລະມີສິດໄດ້ຮັບນະໂຍບາຍຈາກການອອກແຮງງານ.

ແມ່ຍິງທີ່ມີຕໍາແໜ່ງ, ມີໜ້າທີ່ຮັບຜິດຊອບລະດັບດຽວກັບເພດຊາຍ ມີສິດໄດ້ຮັບຄ່າຕອບແທນ ແລະ ນະໂຍບາຍຕ່າງໆເທົ່າທຽມກັນ.

## 3. ສິດສະເໝີພາບທາງດ້ານສັງຄົມ, ວັດທະນະທໍາ

ຍິງຊາຍມີສິດເທົ່າທຽມກັນ ທາງດ້ານວັດທະນະທໍາ , ສັງຄົມເຊັ່ນ: ສິດເຂົ້າຮ່ວມກິດຈະກໍາຕ່າງໆທາງດ້ານວັດທະນະທໍາ ສັງຄົມ, ການເຄື່ອນໄຫວສິລະປະ ວັນນະຄະດີ, ກິລາກາຍຍະກໍາ , ການສຶກສາ, ສາມາດຄົ້ນຄ້ວາ, ປະດິດສ້າງທາງດ້ານວັດທະນະທໍາ-ສັງຄົມ,ດ້ານວິທະຍາສາດ,ເຕັກນິກ, ເຕັກໂນໂລຢີ.

## 4. ສິດສະເໝີພາບທາງດ້ານຄອບຄົວ

ຍິງ - ຊາຍ ມີສິດເທົ່າທຽມກັນທຸກດ້ານ ກ່ຽວກັບສາຍພົວພັນ ຄອບຄົວຄື:

4.1 ແມ່ຍິງແຕ່ອາຍຸ 18 ປີ ຂຶ້ນໄປ ມີສິດໃນການເລືອກຄູ່ຄອງ ເພື່ອສ້າງຄອບຄົວ.

4.2 ເມຍມີສິດເລືອກເອົານາມສະກຸນຂອງຜົວ ຫຼື ຈະຮັກສານາມສະກຸນເດີມຂອງຕົນໄວ້

4.3 ເມຍມີສິດເທົ່າກັບຜົວກ່ຽວກັບສິນສົມສ້າງ

4.4 ຜົວເມຍ ມີສິດເທົ່າທຽມກັນ ໃນການປຶກສາຫາລື, ຕົກລົງ ແລະ ແກ້ໄຂບັນຫາພາຍໃນຄອບຄົວ ຢ່າງເປັນເອກະພາບ ໃນການເລືອກບ່ອນຢູ່, ການປະກອບອາຊີບ, ການມີລູກ, ການລ້ຽງລູກ, ການອົບຮົມລູກ , ການເຄົາລົບນັບຖືກັນ, ການສ້າງເປັນຄອບຄົວວັດທະນະທຳໃໝ່ ແລະ ອື່ນໆ.

ລູກສາວ ແລະ ລູກຊາຍ ມີສິດເທົ່າທຽມກັນໃນການສືບມູນ ມໍລະດົກ ແລະໄດ້ຮັບການສຶກສາຮ່ຳຮຽນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 5. ສິດໃນການຮ້ອງຂໍ, ຮ້ອງຟ້ອງ

ໃນກໍລະນີບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ຈຳກັດ ຂັດຂວາງ ຫຼື ລະເມີດສິດສະເໝີພາບທາງດ້ານການເມືອງ, ເສດຖະກິດ , ວັດທະນະທຳ - ສັງຄົມ ຫຼື ຄອບຄົວ. ແມ່ຍິງ ມີສິດສະເໜີຄວາມຄິດເຫັນຮ້ອງຂໍ, ຮ້ອງຟ້ອງ ຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຕາມ ລະບຽບ ກົດໝາຍ.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ຍິງຊາຍ ມີສິດສະເໝີພາບເທົ່າທຽມກັບເພດຊາຍດ້ານໃດແດ່ ຈົ່ງອະທິບາຍ?

**ຂ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກຕ້ອງທີ່ສຸດເພື່ອຕອບຄຳຖາມລຸ່ມນີ້, ໂດຍ ໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສ່ຮູບສີ່ຫຼ່ຽມ☐ ຢູ່ຕໍ່ໜ້າຂອງຄຳຕອບນັ້ນ.

2) ແມ່ຍິງ ມີສິດໄດ້ຄ່າຕອບແທນ ແລະ ມີສິດໄດ້ຮັບນະໂຍບາຍຈາກການອອກແຮງງານ ແມ່ນນອນຢູ່ໃນສິດດ້ານໃດ ?

☐ ດ້ານການເມືອງ

☐ ດ້ານເສດຖະກິດ.

☐ ດ້ານວັດທະນະທຳ,ສັງຄົມ.

☐ ຖືກໝົດທຸກຂໍ້.

3) ຖ້າແມ່ຍິງ ໄດ້ຮັບການສຶກສາ ຈະຜົດຕໍ່:

☐ ຄອບຄົວ.

☐ ສັງຄົມ ແລະ ປະເທດຊາດ.

☐ ຖືກໝົດທຸກຂໍ້

# ພາກທີ VI
# ປະຊາກອນສຶກສາ, ເພດສຶກສາ ແລະ ສຸຂະພາບ ໄວຈະເລີນພັນ

## ບົດທີ 31
## ໂຄງສ້າງຂອງປະຊາກອນລາວ

### 1. ໂຄງສ້າງດ້ານເພດ

ຈຳນວນ ປະຊາກອນລາວທັງໝົດ ໃນປີ 1995 ມີເພດຍິງ 2.315.931 ຄົນ ເທົ່າ ກັບ 50,5% ເພດຊາຍ 2.265.327 ຄົນ ເທົ່າກັບ 49,5%, ປີ 2005 ປະຊາກອນທັງໝົດ 5.621.982 ຄົນ., ເພດຍິງ 2. 821.431 ເທົ່າກັບ50,14% ເພດຊາຍ 2.800.551 ຄົນ ເທົ່າກັບ 49,86% ບາງແຂວງ ມີເພດຊາຍ ຫຼາຍກວ່າເພດຍິງ ເຊັ່ນ: ແຂວງ ວຽງຈັນ , ຫົວພັນ.

### 2. ໂຄງປະກອບດ້ານອາຍຸ

ປະເທດເຮົາເປັນປະເທດໜຶ່ງທີ່ມີປະຊາກອນໜຸ່ມກວມອັດຕາສ່ວນສູງ ໃນປີ 2002 ປະຊາກອນໃນສຳ ອາຍຸ 0 - 14 ປີ ກວມ 41,1%, ໃນລະຫວ່າງ 15 - 60 ປີ ກວມ 50,1% ແລະ ສູງກວ່າ 60 ປີ ກວມ 5,8% , ອາຍຸຍືນສະເລ່ຍ ຂອງຄົນລາວໃນປີ 2005 ຜູ້ຍິງ 60 ປີ ຜູ້ຊາຍ59 ປີ.



## 3. ໂຄງປະກອບສ້າງດ້ານສົມລົດ (ແຕ່ງງານ)

ສັດສ່ວນຂອງປະຊາກອນ ດ້ານສົມລົດ ມີການປ່ຽນແປງຢູ່ຕະຫຼອດເວລາ, ໃນສະພາບເສດຖະກິດຮຸ່ງເຮືອງ ປະຊາກອນ ຈະສົມລົດຊ້າລົງ ໃນສັງຄົມທີ່ແມ່ຍິງເຮັດວຽກນອກເຮືອນ ແລະ ອາໄສກຳລັງຕົນເອງໄດ້ສູງ ແລະ ສັດສ່ວນຂອງປະຊາກອນ ທີ່ມີສະຖານະພາບສົມລົດ ເປັນໝ້າຍ, ຍ່າຮ້າງສູງ.

| ອາຍຸ | ໂສດ | | ແຕ່ງງານ | |
|---|---|---|---|---|
| | ຍິງ | ຊາຍ | ຍິງ | ຊາຍ |
| 15 -19 | 161.796 | 160.639 | 31.494 | 7.776 |
| 20 - 24 | 45.902 | 44.402 | 101.508 | 45.764 |
| 25 - 29 | 18.207 | 18.539 | 126.194 | 100.603 |
| 30 - 39 | 11.989 | 8.212 | 185.711 | 189.150 |
| 40 - 49 | 3.720 | 2.407 | 122.290 | 127.685 |
| 50 - 59 | 1.963 | 1.377 | 89.272 | 104.800 |
| 60 - 69 | 986 | 702 | 38.798 | 69.704 |
| 70+ | 336 | 415 | 14.814 | 32.423 |
| *ອາຍຸ* | *ຍິງ* | *ຊາຍ* | *ຍິງ* | *ຊາຍ* |
| 15 - 19 | 652 | 58 | 1.341 | 294 |
| 20 - 24 | 1.804 | 436 | 5.281 | 921 |
| 25 - 29 | 2.583 | 752 | 6.514 | 1.238 |
| 30 - 39 | 8.950 | 2.269 | 11.303 | 2.377 |
| 40 - 49 | 16.676 | 3.398 | 8.661 | 1.328 |
| 50 -59 | 28.446 | 5.205 | 6.259 | 978 |
| 60 - 69 | 32.017 | 8.599 | 3.329 | 1.302 |
| 70+ | 34.620 | 9.583 | 1.760 | 954 |

ແຫຼ່ງຂໍ້ມູນ: ສສຊ ການສຳຫຼວດ ການເກີດ,ການຕາຍ ຫຼາຍຮອບ ປີ 1988 - 1991.

## 4. ໂຄງປະກອບດ້ານເສດຖະກິດ,ແຮງງານ ແລະ ອາຊີບ

ຢູ່ລາວເຮົາມີປະຊາກອນໜຸ່ມ ( ໄວແຮງງານ ) ກວມອັດຕາສ່ວນສູງ ແຕ່ຍັງບໍ່ແມ່ນແຮງງານທີ່ມີຄຸນນະພາບ ໃນດ້ານອາຊີບ ຂອງປະຊາກອນລາວ ສ່ວນຫຼາຍ ແມ່ນຊາວກະສິກອນ ກວມເຖິງ 85% ສັງກັດໃນຂະແໜງຫັດຖະກຳ ແລະ ສຳນັກງານຂອງລັດ 2% ສ່ວນເຫຼືອນັ້ນ ປະກອບອາຊີບ ການຄ້າ ແລະອື່ນໆ.

## 5. ໂຄງປະກອບດ້ານຄອບຄົວ

ຄອບຄົວແມ່ນຫົວໜ່ວຍການຈັດຕັ້ງສັງຄົມພື້ນຖານ . ຄອບຄົວຂອງຄົນລາວ ເປັນຄອບຄົວໃຫຍ່ ສະເລ່ຍ ແລ້ວຄອບຄົວໜຶ່ງມີຈຳນວນ 5 - 6 ຄົນຂຶ້ນໄປ, ສ່ວນ ຊົນເຜົ່າ ເຊັ່ນ: ເຜົ່າມົ້ງ, ຕະໂອ້ຍ, ກະລ່ຽງ ມີຈຳນວນພົນ 6 - 8 ຄົນຂຶ້ນໄປ.

## 6. ໂຄງປະກອບດ້ານຊົນເຜົ່າ

ປະຊາກອນລາວ ມີ 3 ຊົນເຜົ່າໃຫຍ່, ມີ 49 ເຜົ່າຊົນ ເຊິ່ງແບ່ງໝວດພາສາອອກເປັນ 6 ໝວດ

**ຕາຕະລາງທີ່ 5 ຊົນເຜົ່າ ແບ່ງຕາມໝວດພາສາ**

| ໝວດທີ່ໃຊ້ພາສາ | % ຂອງປະຊາກອນທັງໝົດ | ຈຳນວນເຜົ່າ |
|---|---|---|
| ໄທ - ລາວ | 68,10 | 6 |
| ມອນ - ຂະແມ | 22,35 | 30 |
| ມົ້ງ - ຢ້າວ | 6,89 | 2 |
| ຕິເບດ - ມຽນມາ | 2,52 | 4 |
| ຫໍ້ | 0,09 | 1 |
| ຫວຽດນາມ - ເໝືອງ | 0,05 | 4 |
| ລວມ | 100 | 47 |

## 7. ໂຄງປະກອບດ້ານສາສະໜາ

ປະຊາຊົນລາວສ່ວນໃຫຍ່ແມ່ນເຊື່ອຖືສາສະໜາພຸດກວມ 90% ນອກນັ້ນຍັງຖືສາສະໜາຄຣິດ(ເຢຊູ) ຄົນລາວສ່ວນຫຼາຍມັກດຳເນີນ ປະເພນີຂອງຕົນ ຕາມສາສະໜາພຸດເຊິ່ງເປັນສາສະໜາ ປະຈຳຊາດ , ບາງເຜົ່າກໍມີປະເພນີສະເພາະຕົນເຊັ່ນ: ບຸນກິນຈຽງຂອງເຜົ່າມົ້ງ, ບຸ ນກິນເຫຼົ້າໄຫຂອງເຜົ່າລະແວ , ບຸນເຫຼີກ ( ບຸນປີດປີ ) ຂອງເຜົ່າຂະມຸ ຫຼື ກຶມມຸ.

## 8. ໂຄງປະກອບດ້ານການສຶກສາ

ທຸກໆປະເທດຕ່າງກໍໃຫ້ການສະໜັບສະໜູນ ປະຊາກອນຂອງຕົນໄດ້ສຶກສາຫາຄວາມຮູ້ເພື່ອພັດທະນາປະເທດຊາດ

ຕົວຢ່າງ: ປະເທດເຮົາໃນປະຈຸບັນອັດຕາສ່ວນຂອງປະຊາຊົນຢູ່ໃນເກນອາຍຸ 15 - 40 ປີ ທີ່ຮູ້ໜັງສືແລ້ວເທົ່າກັບ 83%, ນັກຮຽນ ປະມານ 19.000 ຄົນ ຈົບມັດທະຍົມຕອນປາຍ ແລະ ນັກສຶກສາ ຈົບມະຫາວິທະຍາໄລ ປະມານ 2.000 ຄົນ ແມ່ນອັດຕາສ່ວນນັກສຶກສາ ຕໍ່ ປະຊາກອນ ໃນ ປີ 2000 ແມ່ນ 350/100.000.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ໂຄງສ້າງຂອງປະຊາກອນລາວປະກອບມີຫຍັງແດ່?

ຂ. ແບບປາລະໄນ

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີ່ສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ລົງໃສ່ຮູບ ☐ ຢູ່ຕໍ່ໜ້າຄຳຕອບນັ້ນ.

2) ປະຊາກອນລາວ ລະຫ່ວາງເພດ ຍິງ ແລະ ເພດຊາຍ ເພດໃດຫລາຍກ່ວາກັນ?

- ☐ ເພດຊາຍ
- ☐ ເພດຍິງ
- ☐ ເພດຍິ ແລະ ຊາຍ ເທົ່າທຽມກັນ
- ☐ ຖືກໝົດທຸກຂໍ້

3) ປະຊາກອນລາວສ່ວນໃຫຍ່ປະກອບອາຊີບໃດ?

- ☐ ການຄ້າ.
- ☐ ຫັດຖະກຳ.
- ☐ ຊາວກະສິກອນ
- ☐ ຖືກໝົດທຸກຂໍ້.

# ບົດທີ 32
## ການພົວພັນ ລະຫ່ວາງ ປະຊາກອນ ກັບທຳມະຊາດ

ຊັບພະຍາກອນເປັນວັດຖຸດິບອັນຈຳເປັນ ແລະ ສຳຄັນໃນການພັດທະນາປະເທດຊາດ ມີຄວາມສຳຄັນຕໍ່ສິ່ງທີ່ມີຊີວິດເຊັ່ນ: ດິນ, ນ້ຳ ປ່າໄມ້, ແຮ່ທາດ, ສັດ.. ຊັບພະຍາກອນ ທຳມະຊາດແບ່ງອອກເປັນ 2 ປະເພດຄື: ຊັບພະຍາກອນໃຕ້ດິນ: ( ເຫຼັກ,ຄຳ, ຖ່ານຫີນ,ແກ້ວ.. ) ແລະ ຊັບພະຍາກອນເທິງໜ້າດິນ ( ນ້ຳ , ດິນ , ພືດ , ສັດ.. . . . . . . . . . . . )

1. **ຄວາມສຳຄັນ**

   ປ່າໄມ້ມີຄວາມສຳຄັນໃນການພັດທະນາເສດຖະກິດ ແລະ ສິ່ງມີຊີວິດເຊັ່ນ: ເປັນບ່ອນອາໄສຂອງສິ່ງທີ່ມີຊີວິດ . ເປັນວັດຖຸດິບ ໃນການປຸກສ້າງ , ເປັນສິນຄ້າ . ບັນດາແຮ່ທາດຕ່າງໆ ເປັນສິນຄ້າ ລາຄາແພງ, ເປັນວັດຖຸດິບສະໜອງໃຫ້ອຸດສາຫະກຳ, ດິນເປັນບ່ອນທຳການຜະລິດ , ສະໜອງ ອາຫານ.

   ຊັບພະຍາກອນທຳມະຊາດແຕ່ລະຊະນິດ ລ້ວນແຕ່ມີການພົວພັນ ແລະ ມີຄວາມສຳຄັນຕໍ່ການຂະຫຍາຍຕົວຂອງສັງຄົມ ແລະ ເສດຖະກິດ.

2. **ການປົກປັກຮັກສາ**

   ການນຳໃຊ້ຊັບພະຍາກອນໃຫ້ເປັນປະໂຫຍດແກ່ມະນຸດ - ສັງຄົມໃຫ້ຫລາຍ ແລະ ຍາວນານທີ່ສຸດ.

   1) ການຈັດແບ່ງກຳລັງແຮງງານໃຫ້ເໝາະສົມ ກັບການນຳໃຊ້ຊັບພະຍາກອນ.
   2) ການອະນຸລັກຊັບພະຍາກອນ ຄືການປົກປັກຮັກສາ, ປັບປຸງ, ການນຳໃຊ້ຄືນໃໝ່, ການນຳໃຊ້ສິ່ງທົດແທນເຊັ່ນ: ການປູກໄມ້, ບໍ່ຖິ້ມຂີ້ເຫຍື້ອຊະຊາຍ...

**ຄຳຖາມ**

**ກ. ແບບອັດຕະໄນ**

1) ເພື່ອປົກປັກຮັກສາຊັບພະຍາກອນທຳມະຊາດໃຫ້ໄດ້ໃຊ້ຍາວນານ ພວກເຮົາຄວນເຮັດແນວໃດ?

ຂ. ແບບປາລະໄນ

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບທີ່ຖືກຕ້ອງທີ່ສຸດເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍ ✓ ລົງໃສ່ຮູບ ☐ ທີ່ຢູ່ຕໍ່ໜ້າຂອງຄຳຕອບນັ້ນ.

2) ມະນຸດມີການພົວພັນກັບຊັບພະຍາກອນທຳມະຊາດຄືແນວໃດ?

☐ ຊັບພະຍາກອນທຳມະຊາດມີຄວາມສຳຄັນໃນການພັດທະນາ ເສດຖະກິດ ແລະ ສັງຄົມ.

☐ ຊັບພະຍາກອນທຳມະຊາດ ມີຄວາມສຳຄັນຕໍ່ສິ່ງທີ່ມີຊີວິດ

☐ ຖືກໝົດທຸກຂໍ້

# ບົດທີ 33
# ການວາງແຜນຄອບຄົວ

## 1. ຄວາມໝາຍຂອງການວາງແຜນຄອບຄົວ

ການວາງແຜນຄອບຄົວ ເປັນການບໍລິການ ເພື່ອໃຫ້ຄູ່ຜົວເມຍມີລູກໃນເວລາຕ້ອງການ, ປ້ອງກັນການມີລູກທີ່ບໍ່ປາຖະໜາເຮົາຈະກຳນົດເມື່ອໃດມີລູກຈຶ່ງຈະເໝາະສົມກັບສຸຂະພາບ ທາງດ້ານຮ່າງກາຍ ແລະ ຈິດໃຈ ພາວະສັງຄົມ ແລະ ເສດຖະກິດ, ເພື່ອຄວາມສຸກຂອງຕົນເອງ , ຄອບຄົວ, ສັງຄົມ ແລະ ປະເທດຊາດ.

## 2. ວິທີການຄຸມກຳເນີດ

ການຄຸມກຳເນີດມີ 2 ວິທີພື້ນຖານຄື: ວິທີ ຄຸມກຳເນີດແບບຖາວອນ ແລະ ແບບຊົ່ວຄາວ

2.1 ວິທີຄຸມກຳເນີດແບບຖາວອນ

1) ການເຮັດໝັນຊາຍ
2) ການເຮັດໝັນຍິງ.

2.2 ວິທີຄຸມກຳເນີດແບບຊົ່ວຄາວ

1) ໃຊ້ຖົງຢາງອະນາໄມ.
2) ໃຊ້ຮ່ວງອະນາໄມ.
3) ກິນຢາຄຸມກຳເນີດ.
4) ສັກຢາຄຸມກຳເນີດ.
5) ຢາຝັງຄຸມກຳເນີດ.
6) ຄຸມກຳເນີດແບບທຳມະຊາດ
   - ນັບມື້ປະຈຳເດືອນ.
   - ເອົານ້ຳເຊື້ອອອກນອກ.
   - ກວດນ້ຳເມືອກໃນຊ່ອງຄອດ

**ຄຳຖາມ**

**ກ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຄຳຕອບຂອງຄຳຖາມນັ້ນ.

1) ການວາງແຜນຄອບຄົວ ແມ່ນໜ້າທີ່ຂອງໃຜ ?

☐ ພັນລະຍາ ( ເພດຍິງ )

☐ ສາມີ ( ເພດຊາຍ )

☐ ພັນລະຍາ ແລະ ສາມີ

2) ວິທີການຄຸມກຳເນີດມີ:

☐ ຄຸມກຳເນີດແບບຖາວອນ.

☐ ຄຸມກຳເນີດແບບຊົ່ວຄາວ.

☐ ຄຸມກຳເນີດແບບຊົ່ວຄາວ ແລະ ຖາວອນ.

# ບົດທີ 34
## ການຖືພາ ແລະ ການຮັກສາສຸຂະພາບໃນເວລາຖືພາ

1. **ການຖືພາ(ຕັ້ງຄັນ)**

   ແມ່ນປະກົດການທຳມະຊາດທີ່ເກີດຂຶ້ນ ນັບແຕ່ມື້ມີການຝັງຕົວຂອງໄຂ່ທີ່ປະສົມກັບຕົວ ອະສຸຈິໃນຮັງໄຂ່(ມົດລູກ), ຜູ້ຍິງຄົນນັ້ນຈະຮູ້ວ່າຕົນເອງມີລູກ (ຕັ້ງຄັນ) ກໍຕໍ່ເມື່ອມີເພດສຳພັນ(ຮ່ວມເພດ) ແລະ ປະຈຳເດືອນບໍ່ມາ.

2. **ການຖືພາ, ການດູແລເມຍ ແລະ ລູກໃນເວລາຖືພາ**
   1) ການຖືພາຂອງແມ່ຍິງ ໃນອາຍຸລະຫວ່າງ 20 -35 ປີ ແມ່ນເໝາະສົມທີ່ສຸດ.
   2) ສາມີຄວນ ດູແລ ພັນລະຍາ ຢ່າງໃກ້ຊິດ ກ່ຽວກັບສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ເປັນຕົ້ນ ການກິນອາຫານການ, ການພັກຜ່ອນ.ຫຼັງເກີດລູກສາມີ ຄວນເອົາໃຈໃສ່ເລື່ອງຫານໃຫ້ຄົບ 5 ໝູ່ ເພື່ອສຸຂະພາບ ຂອງແມ່ ແລະ ລູກໃຫ້ແຂງແຮງດີ.

3. **ຮູບແບບ ແລະການປ່ຽນແປງຂອງການຖືພາ(ຕັ້ງຄັນ)**
   1) ການຖືພາໄປຕາມຄວາມຕ້ອງການ.
   2) ການຖືພາໂດຍບໍ່ໄດ້ຕັ້ງໃຈ (ການຖືພາທີ່ຂາດຄວາມຮັກ)
   3) ໃນເວລາຜູ້ຍິງຖືພາຈະມີການປ່ຽນແປງ 2 ດ້ານຄື: ການປ່ຽນແປງທາງດ້ານຮ່າງກາຍ ແລະ ການປ່ຽນ ແປງທາງຈິດໃຈ.

4. **ການຮັກສາສຸຂະພາບໃນເວລາຖືພາ**

   ການຮັກສາສຸຂະພາບໃນເວລາຖືພາ ມີຄວາມສຳຄັນ ແລະ ຈຳເປັນຕໍ່ແມ່ ແລະ ທາລົກ ( ລູກ ) ເພາະທາລົກໃນທ້ອງໄດ້ອາໄສແມ່ ກ່ຽວກັບອາຫານ, ແມ່ຄວນມີຄວາມຮັກຕົນເອງ ໂດຍການໄປຝາກທ້ອງຢູ່ໂຮງໝໍທັນທີ ພ້ອມທັງປະຕິບັດຕົນ ຕາມຄຳແນະນຳຂອງແພດ ຢ່າງເຄັ່ງຄັດ, ນອກນັ້ນສາມີກໍມີບົດບາດສຳຄັນ ໃນການເບິ່ງແຍງພັນລະຍາທີ່ກຳລັງຖືພາ ເພາະໄລຍະນີ້ຜູ້ຍິງຖືພາຈະມີການປ່ຽນແປງທາງດ້ານຮ່າງກາຍ ແລະ ຈິດໃຈ, ສາມີຄວນໃສ່ໃຈ ເລື່ອງອາຫານ ການກິນຕ່າງໆ ກໍຄືຄວາມເຫັນອົກເຫັນໃຈ ເພາະໄລຍະນີ້ຜູ້ຍິງຖືພາ ຈະມີການປ່ຽນແປງອາລົມ.

**ຄຳຖາມຄົ້ນຄວ້າ**

**ກ. ແບບອັດຕະໄນ**

1) ການຕັ້ງຄັນ ແມ່ນແນວໃດ?

2) ສາມີ ຄວນດູແລ ພັນລະຍາ ແລະລູກແນວໃດ ໃນເວລາຖືພາ ແລະ ຫຼັງເກີດລູກ.

3) ການຮັກສາສຸຂະພາບຂອງແມ່ໃນເວລາຖືພາຄວນເຮັດແນວໃດ?

**ຂ. ແບບປາລະໄນ**

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຄຳຕອບຂອງຄຳຖາມນັ້ນ.

4) ຊ່ວງອາຍຸເທົ່າໃດ ແມ່ຍິງຈຶ່ງເໝາະສົມໃນການຕັ້ງຄັນ ?

☐ ຊ່ວງອາຍຸ 18 - 23 ປີ

☐ ຊ່ວງອາຍຸ 18 - 30 ປີ.

☐ ຊ່ວງ ອາຍຸ 20 - 30 ປີ.

☐ ຖືກໝົດທຸກຂໍ້

5) ການຕັ້ງຄັນມີຈັກແບບ?

☐ ມີ 2 ແບບ

☐ ມີ 3 ແບບ

☐ ມີ 4 ແບບ

☐ ຖືກໝົດທຸກຂໍ້.

6) ໃນເວລາຜູຍິງຖືພາຈະມີການປ່ຽນແປງຈັກດ້ານຄືດ້ານໃດແດ່ ?

☐ ມີ 1 ດ້ານຄື: ການປ່ຽນ ແປງທາງດ້ານຮ່າງກາຍ.

☐ ມີ 2 ດ້ານຄື: ການປ່ຽນແປງທາງດ້ານຮ່າງກາຍ ແລະ ຈິດໃຈ.

☐ ມີ 3 ດ້ານຄື:

☐ ຖືກໝົດ ທຸກຂໍ້ .

# ບົດທີ 35
# ໄວກາງຄົນ ແລະ ການຮັກສາສຸຂະພາບ

## 1. ຄວາມໝາຍຂອງ ໄວກາງຄົນ (ໄວທອງ)

ໄວກາງຄົນ (ໄວທອງ) ໝາຍເຖິງໄວທີ່ມີປະຈໍາເດືອນຄັ້ງສຸດທ້າຍຂອງຜູ້ຍິງທີ່ຮັງໄຂ່ຄ່ອຍໆ ຢຸດເຮັດວຽກ, ຮ່າງກາຍຈະເລີ່ມເຄີຍຊິນກັບສະພາບຮ່າງກາຍທີ່ຮໍໂມນຕໍ່າ. ການປ່ຽນແປງ ແລະ ເປັນໄປຢ່າງຊ້າໆເປັນເວລາຫຼາຍປີ. ໂດຍທົ່ວໄປຈະມີການປ່ຽນແປງ ເມື່ອແມ່ຍິງມີ ອາຍຸ 45 ປີ ຂຶ້ນໄປ ແລະ ບາງຄົນກໍຈະເກີດຂຶ້ນ ເມື່ອອາຍຸ 30 ປີ ຂຶ້ນໄປ, ສະເລ່ຍແລ້ວ ຜູ້ຍິງຈະມີປະຈໍາເດືອນຄັ້ງສຸດທ້າຍເມື່ອອາຍຸ 50 ປີ .

ອາການທີ່ເກີດຂຶ້ນຈາກໄວກາງຄົນ:

1) ອາການທາງປະສາດບັງຄັບ ເສັ້ນເລືອດ.
2) ອາການທາງຈິດປະສາດ.
3) ລະບົບອະໄວຍະວະສືບພັນ.
4) ລະບົບທາງເດີນປັດສະວະ.
5) ລະບົບຜິວໜັງ.
6) ລະບົບຂໍ້ຕໍ່ຕ່າງໆ.
7) ອາການອື່ນໆ

## 2. ການຮັກສາສຸຂະພາບ ( ການດູແລຕົນເອງຂອງຜູ້ຍິງໃນໄວໝົດປະຈໍາເດືອນ )

1) ອອກກໍາລັງກາຍທີ່ເໝາະສົມກັບໄວຢ່າງຖືກວິທີ ຢ່າງໜ້ອຍ 3 - 4 ຄັ້ງຕໍ່ອາທິດ, ຄັ້ງລະ 30 - 60 ນາທີ.
2) ກິນອາຫານທີ່ມີປະໂຫຍດຕໍ່ຮ່າງກາຍ ໂດຍສະເພາະອາຫານທີ່ມີ ແຄນຊຽມສູງເຊັ່ນ: ກຸ້ງ, ປານ້ອຍ, ນົມ, ຖົ່ວ, ງາ ແລະ ອື່ນໆ. ຫຼີກລ້ຽງການດື່ມເຫຼົ້າ, ກາເຟ ແລະ ສິ່ງເສບຕິດຕ່າງໆ.
3) ເຮັດໃຫ້ຈິດໃຈເບີກບານ ແຈ່ມໃສ ຢູ່ສະເໝີ.
4) ເມື່ອມີອາການຜິດປົກກະຕິ ຄວນປຶກສາ ແພດ.

**ຄຳຖາມ**

**ກ. ແບບອັດຕະໄນ**

1) ການກ້າວເຂົ້າໄວກາງຄົນ ຫຼື ໄວໝົດປະຈຳເດືອນແມ່ນແນວໃດ?

2) ຜູ້ຍິງຈະຮັກສາສຸຂະພາບຂອງຕົນເອງ ໃນເວລາໝົດ ປະຈຳເດືອນ ແນວໃດ ?

ຂ. ແບບປາລະໄນ

ໃຫ້ທ່ານເລືອກເອົາໜຶ່ງຄຳຕອບ ທີ່ຖືກຕ້ອງທີ່ສຸດ ເພື່ອຕອບຄຳຖາມລຸ່ມນີ້, ໂດຍໃຊ້ເຄື່ອງໝາຍນີ້ ✓ ຂຽນລົງໃສ່ຮູບສີ່ຫຼ່ຽມ ☐ ທີ່ຢູ່ຕໍ່ໜ້າຄຳຕອບຂອງຄຳຖາມນັ້ນ.

3) ສະເລ່ຍ ແລ້ວ ຜູ້ຍິງຈະມີປະຈຳເດືອນຄັ້ງສຸດທ້າຍເມື່ອ ອາຍຸ ຈັກປີ ?

- ☐ ເມື່ອອາຍຸ 30 ປີ.
- ☐ ເມື່ອ ອາຍຸ 45 ປີ.
- ☐ ເມື່ອ ອາຍຸ 50 ປີ.
- ☐ ຖືກໝົດທຸກຂໍ້

4) ຜູ້ຍິງໃນໄວໝົດປະຈຳເດືອນ ( ໄວທອງ ) ຄວນກິນອາຫານປະເພດໃດ ?

- ☐ ມີ ໂປຣຕີນຫຼາຍ.
- ☐ ມີ ແຄນຊຽມສູງ.
- ☐ ເຫຼົ້າ ແລະ ສິ່ງເສບຕິດ.
- ☐ ຜິດໝົດທຸກຂໍ້.

# ບົດທີ 36
# ການເກີດ, ການຕາຍ ແລະ ການຍ້າຍຖິ່ນຂອງປະຊາກອນລາວ

## 1. ປັດໄຈທີ່ເຮັດໃຫ້ມີການເກີດ

ການເກີດຈະເພີ່ມຂຶ້ນ ຫຼື ຫລຸດລົງນັ້ນຂຶ້ນກັບຫຼາຍປັດໄຈເຊັ່ນ: ປັດໄຈທາງປະຊາກອນ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ ປັດໄຈສຳຄັນ ທີ່ມີຜົນກະທົບ ການເກີດໄດ້ແກ່:

### 1.1 ໄລຍະເວລາການແຕ່ງດອງ

ແມ່ຍິງຈະມີລູກໄດ້ແມ່ນຢູ່ລະຫ່ວາງ 13 - 49 ປີ ໂດຍປະມານ ຜູ້ຍິງທີ່ມີອາຍຸ ນ້ອຍ ຖ້າແຕ່ງດອງໄວ ໂອກາດທີ່ຈະມີລູກຫຼາຍມີເປີເຊັນສູງກວ່າ ຜູ້ຍິງທີ່ແຕ່ງດອງຊ້າ ຫຼື ອາຍຸແກ່.

### 1.2 ການເຂົ້າຮ່ວມແຮງງານຂອງແມ່ຍິງ

ຖ້າແມ່ຍິງເຮັດວຽກນອກເຮືອນຫຼາຍ ອັດຕາການເກີດຂອງເດັກ ຈະຕ່ຳກ່ວາແມ່ຍິງເປັນແມ່ເຮືອນ . ຍ້ອນວ່າເວລາໄປເຮັດວຽກມີຄວາມຕ້ອງການຄົນລ້ຽງດູລູກ, ດັ່ງນັ້ນ ຈຶ່ງເຮັດໃຫ້ຄູ່ສົມລົດນັ້ນ ຈຳເປັນຕ້ອງໄດ້ຈຳກັດລູກໄປໃນຕົວ.

### 1.3 ການສຶກສາ ແລະ ທີ່ຢູ່ອາໄສ

ຜູ້ຍິງທີ່ມີລະດັບການສຶກສາສູງ ອາຍຸເລີ່ມຕົ້ນຂອງການແຕ່ງດອງ ກໍຈະຊ້າກ່ວາ ຜູ້ຈົບລະດັບການສຶກສາຕ່ຳ ຍ້ອນຜູ້ມີການສຶກສາສູງ ເຂົ້າໃຈຜົນດີ ແລະ ຜົນບໍ່ດີຂອງການມີລູກຫຼາຍ ຫຼື ໜ້ອຍ.

## 2. ປັດໄຈທີ່ມີຜົນກະທົບຕໍ່ການຕາຍ

ການຕາຍເປັນປະກົດການທຳມະຊາດຂອງສິ່ງທີ່ມີຊີວິດ ແຕ່ຈະຕາຍໄວ ຫຼື ຊ້າແມ່ນຂຶ້ນກັບປັດໃຈຕ່າງໆເຊັ່ນ:

1) ໂລກລະບາດ.
2) ໄພທຳມະຊາດ.
3) ສົງຄາມ.
4) ສະພາບ ເສດຖະກິດ - ສັງຄົມ.
5) ຄວາມຈະເລີນກ້າວໜ້າຂອງເຕັກໂນໂລຊີ.

## 3. ການຍ້າຍຖິ່ນຖານຂອງປະຊາກອນລາວ

1) ປັດໄຈພູມສາດ ເສດຖະກິດ

ປັດໄຈພື້ນຖານທີ່ ກຳນົດລັກສະນະການປະກອບອາຊີບແລະເສດຖະກິດຂອງແຕ່ລະພູມມີພາກໃນປະເທດເຊັ່ນ: ປະເທດລາວສະພາບພູມສາດມີບົດບາດໃນການກຳນົດພາວະເສດຖະກິດຂອງ

ແຕ່ລະທ້ອງຖິ່ນ,ປະຊາກອນຍ້າຍຖິ່ນອອກໄປອາໄສຢູ່ບ່ອນອື່ນທີ່ອຸດົມສົມບູນກ່ວາຍ້າຍຖິ່ນເພື່ອປະກອບທຸລະກິດ ຫຼືເຮັດວຽກ.

**2) ປັດໃຈດ້ານສັງຄົມ**

ເປັນປັດໄຈໜຶ່ງທີ່ປະຊາກອນມີການເຄື່ອນຍ້າຍເຊັ່ນ: ການແຕ່ງດອງ, ຍ້າຍໄປນຳພໍ່ແມ່ ຫຼື ຍາດພີ່ນ້ອງ, ຍ້າຍຍ້ອນໜ້າທີ່ໄດ້ຮັບມອບໝາຍ ຫຼື ຄຳສັ່ງຈາກນາຍຈ້າງເປັນຕົ້ນ.

**3) ໂອກາດທາງການສຶກສາ**

ເປັນປັດໄຈສຳຄັນໂດຍສະເພາະຜູ້ຍ້າຍຖິ່ນເປັນຊາວໜຸ່ມເຊັ່ນ: ຢູ່ປະເທດເຮົາສະຖາບັນການສຶກສາທີ່ມີມາດຕະຖານດີນັ້ນ ສ່ວນຫຼາຍແມ່ນຕັ້ງຢູ່ໃນຕົວເມືອງໃຫ່ຍ.

4) **ປັດໄຈທາງການເມືອງ**

ການເຄື່ອນຍ້າຍຂອງປະຊາກອນ ໂດຍສະເພາະການຍ້າຍຖິ່ນຂອງລັດຖະບານ.

ຕົວຢ່າງ : ລັດຖະບານ ສ ປ ປ ລາວ ປະຕິບັດ ຫັນການເຮັດໄຮ່ ມາເຮັດນາ.

**ຄຳຖາມ**

1) ປັດໄຈທີ່ກະທົບເຮັດໃຫ້ມີການເກີດແມ່ນ :

- ☐ ແຕ່ງງານໄວ, ແຕ່ງງານອາຍຸຍັງນ້ອຍ.
- ☐ ໄລຍະເວລາແຕ່ງດອງ, ການເຂົ້າຮ່ວມແຮງງານຂອງແມ່ຍິງ.
- ☐ ໄລຍະເວລາຂອງການແຕ່ງດອງ, ການສຶກສາ ແລະ ທີ່ຢູ່ອາໄສ ການເຂົ້າຮ່ວມແຮງງານຂອງແມ່ຍິງ.

2) ປັດໃຈທີ່ເຮັດໃຫ້ມີການຍ້ານຖິ່ນຂອງປະຊາກອນລາວແມ່ນ:

- ☐ ດ້ານພູມສາດເສດຖະກິດ
- ☐ ດ້ານສັງຄົມ
- ☐ ໂອກາດທາງການສຶກສາ
- ☐ ດ້ານການເມືອງ
- ☐ ຖືກທຸກຂໍ້.

# ບົດທີ 37
# ການພົວພັນ ລະຫ່ວາງປະຊາກອນ ແລະ ສິ່ງແວດລ້ອມ

**1. ຄວາມໝາຍກ່ຽວກັບ ສິ່ງແວດລ້ອມ**

ໝາຍເຖິງທຸກສິ່ງທຸກຢ່າງທີ່ຢູ່ອ້ອມຕົວເຮົາ ໃນນັ້ນມີທັງສິ່ງທີ່ມີຊີວິດ ແລະ ບໍ່ມີ ຊີວິດມີທັງສິ່ງທີ່ເກີດຂຶ້ນເອງຕາມທຳມະຊາດ ແລະ ສິ່ງທີ່ມະນຸດສ້າງຂຶ້ນ, ມີທັງສິ່ງທີ່ເບິ່ງໄດ້ ແລະ ເບິ່ງບໍ່ໄດ້. ແຕ່ຮັບຮູ້ໄດ້ຈາກ ການກະທົບ ອິນຊີ ທັງຫ້າ ( ຜິວໜັງ , ລີ້ນ, ຫູ,ຕາ,ດັງ ) .

2. **ການພົວພັນ ລະຫ່ວາງປະຊາກອນກັບສິ່ງແວດລ້ອມ**

ສິ່ງແວດລ້ອມທາງທຳມະຊາດ ເປັນເງື່ອນໄຂອັນຈຳເປັນໃຫ້ແກ່ການດຳລົງຊີວິດເຊັ່ນ: ການຢູ່ອາໄສ, ການບຳລຸງລ້ຽງຮ່າງກາຍ ແລະ ການພັດທະນາ, ຖ້າສິ່ງແວດລ້ອມທາງທຳມະຊາດຖືກທຳລາຍ ແລະ ດັບສູນ ສິ່ງທີ່ມີຊີວິດທັງໝົດກໍຈະດັບສູນ ນັບທັງມະນຸດຂອງເຮົາກໍຖືກດັບສູນເຊັ່ນກັນ.

3.**ບົດບາດສຳຄັນຂອງສິ່ງແວດລ້ອມຕໍ່ມະນຸດ**

1) ມະນຸດໄດ້ອາໄສທຳມະຊາດເພື່ອດຳລົງຊີວິດ.
2) ສະບຽງອາຫານ(ເຂົ້າ, ປາ, ຊີ້ນ ແລະ ພືດ..)
3) ສະໜອງວັດຖຸດິບໃນການປຸກສ້າງ ແລະ ສະໜອງໃຫ້ໂຮງງານອຸດສາຫະກຳ. ດັ່ງນັ້ນທຳມະຊາດຈຶ່ງມີບົດບາດສຳຄັນຢ່າງຍິ່ງຕໍ່ການດຳລົງຄົງຕົວຂອງມະນຸດ, ເມື່ອມີການເຄື່ອນໄຫວ ແລະ ການກະທົບຂອງມະນຸດ ( ຖາງປ່າ ) ໄດ້ເຮັດໃຫ້ຄວາມສົມດູນຂອງທຳມະຊາດ ຖືກປ່ຽນແປງ, ດິນຖືກສຽດສີ, ນ້ຳບົກແຫ້ງ, ໄພນ້ຳຖ້ວມ.

4.**ການປົກປັກຮັກສາສິ່ງແວດລ້ອມ**

ການປົກປັກຮັກສາສິ່ງແວດລ້ອມ ເຮົາຄວນປົກປັກຮັກສາຊັບພະຍາກອນທຳມະຊາດ, ຕ້ອງພົ້ນຈາກການເຮັດໄຮ່ ລົງມາເຮັດນາ, ຢຸດຕິການຖາງປ່າເຮັດໄຮ່ເທື່ອລະກ້າວ, ເສີມຂະຫຍາການປູກປ່າ, ຮ່ວມກັບອົງການຈັດຕັ້ງສາກົນເພື່ອປົກປັກຮັກສາສິ່ງແວດລ້ອມບໍ່ຖິ້ມຂີ້ເຫຍື້ອຊະຊາຍ ບໍ່ວ່າຖິ້ມໃສ່ໜ້າດິນ ຫຼື ຖິ້ມລົງແມ່ນ້ຳຕ່າງໆ.

**ຄຳຖາມຄົ້ນຄວ້າ**

**1)** ການປົກປັກຮັກສາສິ່ງແວດລ້ອມເຮົາຄວນປະຕິບັດຕົນແນວໃດ?

- ☐ ຂຸດຄົ້ນໄມ້.
- ☐ ຖາງປ່າເຮັດໄຮ່.
- ☐ ປູກຕົ້ນໄມ້,ບໍ່ຖິ້ມຂີ້ເຫຍື້ອຊະຊາຍ.

# ບົດທີ 38
# ການລ້ຽງລູກດ້ວຍນົມແມ່

ລູກທີ່ເກີດອອກມາມືນຕາເບິ່ງໂລກຈະເປັນຍິງ ຫຼື ຊາຍ ກໍເປັນຂວັນໃຈຂອງພໍ່ແມ່ ແລະ ຄອບຄົວ , ຄວນໄດ້ຮັບການລ້ຽງດູໃຫ້ເຕີບໃຫຍ່ເຂັ້ມແຂງ ເປັນກຳລັງແຮງຂອງສັງຄົມກໍຄືປະເທດຊາດ.

**ກ**. ນ້ຳນົມແມ່ ເປັນອາຫານທີ່ດີເລີດ ປະເສີດສຸດ ສຳລັບລູກນ້ອຍ..

**ຂ**. ນ້ຳນົມແມ່ເປັນອາຫານທີ່ທຳມະຊາດໄດ້ສ້າງມາເພື່ອລູກ.

**ຄ**. ຫົວນ້ຳນົມແມ່ ຄືວັກຊີນ ຍອດທຳອິດ ແຫ່ງຊີວິດຂອງລູກ,ຊ່ວຍກັນພະຍາດບໍ່ໃຫ້ລູກເຈັບປ່ວຍ.

1. **ການເລີ່ມຕົ້ນ ແລະ ການລ້ຽງລູກດ້ວຍນົມແມ່**
   1) ເອົາລູກດູດນົມແມ່ທັນທີ ຫຼັງເກີດ.
   2) ເອົາລູກດູດນົມແມ່ທັນທີ ທີ່ລູກຫິວ (ລູກຕ້ອງການກິນຍາມໃດ ແມ່ຕ້ອງໃຫ້ກິນໂລດ ໂດຍບໍ່ຈຳກັດເວລາ ).
   3) ເອົາລູກດູດຢ່າງຖືກວິທີ.
   4) ໃຫ້ໄດ້ກິນນົມແມ່ຢ່າງດຽວ ຈົນຮອດ 6 ເດືອນຈຶ່ງໃຫ້ອາຫານເສີມ ແກ່ລູກ.
   5) ເລີ່ມເອົາລູກກິນນົມແມ່ ແຕ່ມື້ເກີດຈົນຮອດ 2 ປີ ຫຼື ຫລາຍກ່ວານັ້ນ.
2. **ຜົນດີຂອງການເອົາລູກກິນນົມແມ່**
   1) ຊ່ວຍໃຫ້ລູກໄດ້ຮັບຄວາມອົບອຸ່ນທາງຮ່າງກາຍ ແລະ ຈິດໃຈ.
   2) ຊ່ວຍໃຫ້ລູກໄດ້ດູດນົມແມ່ທັນທີ ຫຼັງເກີດ ເຊິ່ງຈະເຮັດໃຫ້ມົດລູກແມ່ປົ້ນດີ ແລະແຫ່ ໂຂະໄວ, ຫຼີກເວັ້ນການເສຍເລືອດຫຼາຍຫຼັງເກີດລູກ.
   3) ຊ່ວຍໃຫ້ລູກໄດ້ຮັບພູມຕ້ານທານຈາກແມ່.
   4) ຊ່ວຍກະຕຸ້ນ ສັນຊາດຕະຍານຄວາມເປັນແມ່.
   5) ຊ່ວຍໃຫເກີດຄວາມຮັກ,ຄວາມຜູກພັນຄວາມເປັນແມ່ ແລະ ລູກ.
3. **ການ ເຮັດໃຫ້ນົມແມ່ມີພຽງພໍ**

   ໃນໄລຍະຖືພາ ຫຼ ເວລາເປັນແມ່ລູກອ່ອນແມ່ຕ້ອງກິນອາຫານຫລາຍຂຶ້ນ ເພື່ອຜະລິດນ້ຳນົມ ພຽງພໍ ສຳລັບລູກ.

   1) ກິນອາຫານຄົບ 5 ຫມູ່ ໂດຍສະເພາະອາຫານປະເພດ ຊີ້ນ, ໄຂ່,ປາ, ນົມ, ຜັກ, ໝາກໄມ້ ແລະ ເຂົ້າໃຫ້ຫລາຍກ່ວາເກົ່າ ເຊິ່ງຈະເພີ່ມອາຫານ ຫຼື ຈຳນວນ ຄາບເຂົ້າ.

2) ແມ່ກິນອາຫານທຸກຊະນິດ ບໍ່ໃຫ້ຂະລຳ, ຍົກເວັ້ນເຫຼົ້າບອງຢາ, ເຫຼົ້າ, ນ້ຳຊາ, ກາເຟ, ເຄື່ອງດື່ມທີ່ບໍ່ມີປະໂຫຍດ. ແລະ ຫ້າມສູບຢາ.
3) ຄວນດື່ມນ້ຳໃຫ້ພຽງພໍ ແລະເຮັດໃຫ້ຈິດໃຈ ສະບາຍ.

**ຄຳຖາມ:**

ໃຫ້ທ່ານເລືອກເອົາຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດແລ້ວໃສ່ເຄື່ອງໝາຍ ✓ ຢູ່ຕໍ່ໜ້າຄຳຕອບຂອງ ຄຳຖາມ ລຸ່ມນີ້ ໃນ ຮູບ 4 ລ່ຽມ.

1) ນົມແມ່ມີປະໂຫຍດຄື:
   - ☐ ຈະເຮັດໃຫ້ລູກມີວິວັດທະນາການໄວ ເຊັ່ນ: ຍ່າງໄວ, ເວົ້າໄດ້.
   - ☐ ນົມແມ່ຄືວັກຊີນຍອດທຳອິດແຫ່ງຊີວິດ ຂອງລູກ ຊ່ວຍກັນພະຍາດ ບໍ່ໃຫ້ລູກເຈັບປ່ວຍ.
   - ☐ ຖືກໝົດທຸກຂໍ້

2) ໃຫ້ລູກ ກິນນົມແມ່ ແຕ່ອາຍຸ ຈັກເດືອນ ຫາ ຈັກເດືອນ ຈຶ່ງໃຫ້ອາຫານເສີມ?
   - ☐ 1 ມື້ ຫາ 4 ເດືອນ.
   - ☐ 1 ມື້ ຫາ5 ເດືອນ.
   - ☐ 1 ມື້ ຫາ 6 ເດືອນ.

3) ຜົນດີຂອງການໃຫ້ລູກນ້ອຍກິນນົມແມ່ມີ:
   - ☐ ລູກໄດ້ຮັບຄວາມອົບອຸ່ນທາງດ້ານຮ່າງກາຍ ແລະ ຈິດໃຈ.
   - ☐ ຊ່ວຍໃຫ້ເກີດຄວາມຮັກ,ຄວາມຜູກພັນ ລະຫ່ວາງ ແມ່ ລູກ.
   - ☐ ຖືກໝົດທຸກຂໍ້.

# ບົດທີ 39
# ໂພສະນາການສຳລັບ ເດັກນ້ອຍອາຍຸ 1 ມື້ ຫາ 6 ປີ

**1. ອາຫານ ແລະການເຕີບໃຫຍ່ຂອງເດັກແຕ່ 1 ມື້ ຫາ 6 ປີ**

**1.1. ອາຫານ**

1) ເດັກເກີດໃໝ່ ສາມາດ ດູດນົມແມ່.
2) ເດັກ 6 - 12 ເດືອນ ກິນອາຫານດ້ວຍຕົນ ເອງໄດ້.
3) ເດັກ 1 - 2 ປີ ດື່ມນ້ຳໂດຍໃຊ້ຈອກດ້ວຍຕົນເອງໄດ້.
4) ເດັກ 3 - 4 ປີ ກິນອາຫານໄດ້ຫຼາຍຊະນິດ ( ຊີ້ນ, ປາ, ໄຂ່, ຜັກ, , ໝາກໄມ້ ).
5) ເດັກ 5 - 6 ປີ ກິນອາຫານທຸກຊະນິດຄືກັບຜູ້ໃຫຍ່.

**1.2. ການເຕີບໃຫຍ່ຂະຫຍາຍຕົວຂອງເດັກ**

1) ແຕ່ 1 ມື້ ຫາ 3 ເດືອນ ສາມາດສາມາດເງີຍຫົວຂື້ນໄດ້ ໃນທ່າ ນອນຂ້ວມ.
2) ເດັກ 6 - 12 ເດືອນສາມາດ ນັ່ງເອງໄດ້.
3) ເດັກ 1 - 2 ປີ ສາມາຍ່າງເອງໄດ້.
4) ເດັກ 3 - 4 ປີ ສາມາດ ຍ່າງຖອຍຫຼັງໄດ້.
5) ເດັກ 5 - 6 ປີ ສາມາດເຕັ້ນຂາດຽວໄດ້.

**2. ຄວາມຕ້ອງການພື້ນຖານ ໃນການພັດທະນາຂອງເດັກ ທັງ 3 ໝວດມິຕິ**

**2.1. ຄວາມຕ້ອງການພື້ນຖານເພື່ອພັດທະນາຮ່າງກາຍ**

1) ອາຫານ.
2) ທີ່ພັກອາໃສ.
3) ເຄື່ອງນຸ່ງຫົ່ມ, ເກີບ.
4) ອະນາໄມ ແລະ ການເຂົ້າເຖິງ ສູນສຸຂະພາບ.
5) ການສັກຢາປ້ອງກັນພະຍາດ.

**2.2. ຄວາມຕ້ອງການພື້ນຖານເພື່ອພັດທະນາຄວາມຮູ້ສຶກ ( ຈິດຕະສາດ )**

1) ຄວາມຮັກຈາກພໍ່ ແມ່.
2) ສະພາບແວດລ້ອມທີ່ປອດໄພ ແລະ ສະຫງົບ.
3) ການດູແລແລະການເອົາໃຈໃສ່ຈາກຜູ້ໃຫຍ່.
4) ການມີສ່ວນຮ່ວມກັບໝູ່ ເພື່ອນ.

## 2.3. ຄວາມຕ້ອງການພື້ນຖານເພື່ອພັດທະນາ ຄວາມສະຫລາດ ແລະ ຄວາມຮັບຮູ້

1) ຄວາມເອົາໃຈໃສ່ຂອງຜູ້ໃຫຍ່ດ້ານການສຶກສາຂອງເດັກ ( ໃນຫ້ອງຮຽນ ແລະ ນອກຫ້ອງຮຽນ )
2) ມີສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ການຊອກຮູ້ ແລະ ການທົດລອງຂອງເດັກ.
3) ໂຮງຮຽນ ແລະ ການສຶກສາ ໃນລະບົບ.

**ຄຳຖາມ**

ໃຫ້ທ່ານເລືອກເອົາຄຳຕອບທີ່ເຫັນວ່າຖືກຕ້ອງທີ່ສຸດແລ້ວໃສ່ເຄື່ອງໝາຍ ✓ ຢູ່ຕໍ່ໜ້າຄຳຕອບຂອງຄຳຖາມລຸ່ມນີ້:

**1)** ເດັກ ອາຍຸ 3 -4 ປີ ມີຄວາມຕ້ອງການອາຫານ ແນວໃດ?

- ☐ ຊີ້ນ, ປາ.
- ☐ ຊີ້ນ , ໝາກໄມ້.
- ☐ ຫລາຍຊະນິດ. ( ຊີ້ນ, ປາ,ຜັກ, ໄຂ່, ໝາກໄມ້. )

# ບົດທີ 40
# ການພັດທະນາເດັກນ້ອຍໃນໄວຮຽນ ( ສິດທິ ເດັກ )

## 1. ຄວາມໝາຍ

ເດັກນ້ອຍແມ່ນທຸກຄົນທີ່ມີ ອາຍຸ ຕ່ຳ ກ່ວາ 18 ປີ ໂດຍບໍ່ມີຈຳແນກເຊື້ອຊາດ ຜິວໜັງ, ເພດ,ພາສາ ສາສະໜາ,ມີສິດປະກອບຄວາມຄິດເຫັນທາງດ້ານການເມືອງ ຫຼື ຄວາມຄິດເຫັນອື່ນໆ ຂອງເດັກນ້ອຍ ລວມທັງພໍ່ແມ່, ຜູ້ປົກຄອງເດັກ, ຕ້ອງມີຄວາມຮັບຜິດຊອບກ່ຽວກັບສິດຕ່າງໆທີ່ໄດ້ກຳນົດໄວ້ ໃນສົນທິສັນຍາ ວ່າດ້ວຍ ສິດທິເດັກນ້ອຍ ( ສ. ສ. ດ )

ສິດທິເດັກ: ແມ່ນສິດທິ ທີ່ ເດັກນ້ອຍຄວນຈະໄດ້ຮັບເຊັ່ນ: ສິດທິ ໃນການຢູ່ລອດ, ສິດທິໃນການພັດທະນາ, ສິດທິ ໃນການໄດ້ຮັບການປົກປ້ອງ ແລະ ສິດທິ ໃນການມີສ່ວນຮ່ວມ.

## 2. ສິດທິເດັກທີ່ຄວນໄດ້ຮັບ

### 2.1 ສິດທິ ໃນການຢູ່ລອດ

ເດັກທຸກຄົນ ມີສິດໄດ້ຮັບປັດໄຈພື້ນຖານອັນຈຳເປັນເພື່ອປົກປ້ອງ ແລະ ຊ່ວຍຊູ ໃຫ້ເຂົາເຈົ້າມີຊີວິດ,ໂດຍສະເພາະ ຕ້ອງໄດ້ຮັບການເອົາໃຈໃສ່ດູແລ ດ້ານສຸຂະພາບອະນາໄມຈາກຄອບຄົວ, ໜ່ວຍງານສາທາລະນະສຸກ , ໄດ້ຮັບທາດບຳລຸງພຽງພໍ, ມີນ້ຳດື່ມທີ່ສະອາດ ແລະ ມີສິ່ງແວດລ້ອມທີ່ດີ.

ປັດໄຈພື້ນຖານ ອັນຈຳເປັນ ເພື່ອການມີຊີວິດ ຢູ່ລອດປະກອບດ້ວຍ:

1) ທີ່ ຢູ່ ອາໃສ.
2) ເຄື່ອງນຸ່ງຫົ່ມ.
3) ສະບຽງອາຫານ.
4) ຢາປົວພະຍາດ.

### 2.2 ສິດທິໃນການໄດ້ຮັບການພັດທະນາ

ເດັກທຸກຄົນມີສິດໄດ້ຮັບການພັດທະນາທາງດ້ານຄວາມຮູ້ ,ສະຕິປັນຍາ,ຮ່າງກາຍ , ມັນສະໝອງ, ຈິດໃຈ, ສິນທຳ ແລະ ສັງຄົມເຊັ່ນ: ໄດ້ຮັບການສຶກສາ, ມ່ວນຊື່ນ ແລະ ເຂົ້າຮ່ວມການເຄື່ອນໄຫວ ທາງດ້ານວັດທະນະທຳ.

### 2.3 ສິດທິ ໃນການໄດ້ຮັບການປົກປ້ອງ

ເດັກທຸກຄົນ ມີສິດໄດ້ຮັບການປົກປ້ອງ ເມື່ອເດັກມີບັນຫາ ແລະ ມີຄວາມສ່ຽງສູງ ເຊັ່ນ: ເດັກອົບພະຍົກ, ເດັກບໍ່ມີຄອບຄົວ, ເດັກທີ່ຝ່າຝືນກົດໝາຍ, ເດັກ ທີ່ຖືກກົດຂີ່ຂູດຮີດແຮງງານ , ເດັກທີ່ຖືກທາລຸນ ແລະ ເດັກທີ່ຖືກປ່ອຍປະ ລະເລີຍ. ນອກນັ້ນ ເດັກຍັງໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອຈາກລັດຖະບານ.

### 2.4 ສິດທິໃນການມີ ສ່ວນຮ່ວມ

ເດັກທຸກຄົນມີສິດໃນການສະແດງຄວາມຄິດເຫັນຢ່າງເປັນອິດສະຫຼະຕໍ່ກັບທຸກບັນຫາທີ່ເປັນຜົນກະທົບຕໍ່ຊີວິດຂອງເຂົາເຈົ້າ, ຄໍາຄິດເຫັນຂອງເຂົາເຈົ້າຕ້ອງໄດ້ຮັບການພິຈາລະນາຢ່າງສົມເຫດສົມຜົນ ບໍ່ວ່າຈະຢູ່ໃນຄອບຄົວ, ໂຮງຮຽນ ແລະ ຊຸມຊົນ . ພ້ອມກັນນັ້ນ ຍັງມີສິດໃນການເຂົ້າຮ່ວມ ທຸກກິດຈະກໍາທີ່ນໍາຜົນປະໂຫຍດ ມາສູ່ຕົນເອງ.

**ຄໍາຖາມ**

ໃຫ້ທ່ານເລືອກເອົາຄໍາຕອບທີ່ເຫັນວ່າຖືກຕ້ອງທີ່ສຸດແລ້ວໃສ່ເຄື່ອງໝາຍ ✓ ຢູ່ຕໍ່ໜ້າຄໍາຕອບຄໍາຖາມລຸ່ມນີ້:

1) ຄວາມໝາຍ ຂອງຄໍາວ່າ “ ເດັກ “ ມີອາຍຸເທົ່າໃດລົງມາ?

- ☐ 15 ປີ.
- ☐ 18 ປີ.
- ☐ 19 ປີ

2) ສິດທິເດັກ 4 ປະການ ທີ່ສໍາຄັນ ປະກອບດ້ວຍ:

- ☐ ທີ່ຢູ່ອາໃສ, ເຄື່ອງນຸ່ງຫົ່ມ, ສິດໃນການຢູ່ລອດ, ສິດໄດ້ຮັບການພັດທະນາ
- ☐ ທີ່ຢູ່ອາໃສ, ຢາປົວພະຍາດ, ສິດໃນການຢູ່ລອດ, ສິດໃນການມີສ່ວນຮ່ວມ ຂອງເດັກ
- ☐ ສິດໃນການຢູ່ລອດ, ສິດໄດ້ຮັບການປົກປ້ອງຄຸ້ມຄອງ , ສິດໄດ້ຮັບການພັດທະນາ ສິດໃນການມີສ່ວນຮ່ວມຂອງເດັກ.